ພຣະນຄຣຣາຊຄຣິຫ໌ມັກຖວາຍເນີຍໃສແດ່ນ້ຳມັນແດ່ ແກງທີ່ມີຣົສດີໆ ແດ່ ຊຶ່ງຈັດປຸງຈະເພາະພຣະເຖຣະ ສ່ວນພຣະເມຕຕິຍະແລະ ພຣະກຸມມຊກະ ເຂົາຖວາຍອາຫາຣຢ່າງສົມມ໌ດາຕາມແຕ່ຈະຫາໄດ້ ມີຊນິດປາຍເຂົ້າມີ ນ້ຳສົ້ມເປັນກັບ ເວລາຫລັງອາຫາຣທ່ານທັ້ງສອງກັບຈາກບິຕທບາຕແລ້ວ ທ່ງອຖາມພວກ ພຣະເຖຣະວ່າ ໃນໂຣງຈັນຂອງພວກທ່ານມີອາຫາຣຫຍັງແດ່ ຂ້ານ້ອຍ ໃນໂຣງຈັນຂອງພວກທ່ານບໍ່ມີຫຍັງແດ່ ຂ້ານ້ອຍ ພຣະເຖຣະບາງພວກບອກຢ່າງນີ້ວ່າ ພວກເຮົາມີເນີຍໃສ ນ້ຳມັນ ແກງທີ່ມີຣົສແຊບໆ ສ່ວນພຣະເມຕຕິຍະແລະພຣະກຸມມຊກະເວົ້າຢ່າງນີ້ວ່າ ພວກ ຂ້ານ້ອຍບໍ່ມີຫຍັງເລີຍ ຂ້ານ້ອຍ ມີແຕ່ອາຫາຣຢ່າງສົມມ໌ດາຕາມທີ່ຈະຫາໄດ້ ເປັນຊນິດ ປາຍເຂົ້າມີນ້ຳສົ້ມເປັນກັບ ໆ

[໕໙໕] ສມັຍຕໍ່ມາ ຄຫບໍດີຜູ້ມັກຖວາຍອາຫາຣທີ່ດີ ຖວາຍກັຕຕາຫາຣວັນລະ ໔ ທີ່ແກ່ສົງຄ໌ເປັນນິຕຍກັຕ ເຂົາພ້ອມດ້ວຍບຸຕຣ໌ກັຣຍາ ອັງຄາສຢູ່ໃກ້ໆ ໃນໂຣງຈັນ ຄົນອື່ນໆ ຍ່ອມຖາມດ້ວຍເຂົ້າສຸກ ກັບເຂົ້າ ນ້ຳມັນ ແກງທີ່ມີຣົສແຊບໆ

[໕໙໖] ຍາມນັ້ນ ກັຕຕຸເທສກ໌ໄດ້ສແດງກັຕຕາຫາຣຂອງຄຫບໍດີ ຜູ້ມັກຖວາຍ ອາຫາຣທີ່ດີ ແກ່ພຣະເມຕຕິຍະແລະພຣະກຸມມຊກະ ເພື່ອຈັນໃນມື້ອື່ນເຊົ້າ ຂຸຫະນັ້ນ ທ່ານ ຄຫບໍດີໄປສູ່ອາຣາມດ້ວຍກຣະນິຍະບາງຢ່າງ ເຂົ້າໄປຫາທ່ານພຣະທັພພມັລລບຸຕຣ໌ ນມັສກາຣ ແລ້ວນັ່ງ ໗ ທີ່ຄວຣສ່ວນຂ້າງນຶ່ງ ທ່ານພຣະທັພພມັລລບຸຕຣ໌ສແດງສັມມີກຖາໃຫ້ທ່ານ ຄຫບໍດີຜູ້ນັ່ງແລ້ວ ໃຫ້ເຫັນແຈ້ງ ສມາທານ ອາຈຫາລ ຣ່າເຣິງ ຄັ້ນແລ້ວຄຫບໍດີຮຽນ ຖາມວ່າ ພຣະຄຸຫເຈົ້າສແດງກັຕຕາຫາຣເພື່ອຈັນໃນມື້ອື່ນເຊົ້າທີ່ເຮືອນຂອງຂ້ານ້ອຍແກ່ໃຜຂ້ານ້ອຍທ່ານພຣະທັພພມັລລບຸຕຣ໌ຕອບວ່າ ອາຕມາສແດງໃຫ້ແກ່ພຣະເມຕຕິຍະກັບພຣະ ກຸມມຊກະແລ້ວ ຂຸຫະນັ້ນຄຫບໍດີມີຄວາມເສັຍໃຈວ່າ ເປັນຫຍັງກິກຂຸລາມກຈະຈັນກັຕຕາຫາຣ ໃນເຮືອນເຮົາລະ ແລ້ວໄປເຮືອນສັ່ງລົງຄົນຮັບໃຊ້ໄວ້ວ່າ ແມ່ສາວໃຊ້ ເຈົ້າຈົ່ງຈັດອາສນະ ໄວ້ທີ່ຊຸ້ມປະຕູ ແລ້ວອັງຄາສກິກຂຸຜູ້ຈະມາຈັນກັຕຕາຫາຣໃນມື້ອື່ນເຊົ້ານຳປາຍເຂົ້າ ມີ ນ້ຳຜັກດອງເປັນກັບ ລົງຄົນໃຊ້ຮັບຄຳຂໍງຄຫບໍດີແລ້ວ ຄັ້ງນັ້ນພຣະເມຕຕິຍະແລະພຣະກຸມມຊກະກ່າວແກ່ກັນວ່າ ທ່ານ ເມື່ອວານນີ້ທ່ານກັຕຕຸທເທສກ໌ສແດງກັຕຕາຫາຣຂອງຄຫບໍດີ ໃຫ້ພວກເຮົາ ມື້ເຊົ້າຄຫບໍດີພ້ອມດ້ວຍບຸຕຣ໌ກັຣຍາຈະອັງຄາສພວກເຮົາຢູ່ໃກ້ໆ ຄົນ ອື່ນໆ ຈະຖາມດ້ວຍ ເຂົ້າສຸກ ກັບເຂົ້າ ນ້ຳມັນແກງທີ່ມີຣົສແຊບໆ ເພາະຄວາມ ດີໃຈນັ້ນແລ ຕົກກາງຄືນກິກຂຸ ໔ ອົງຄ໌ນັ້ນນອນຫລັບບໍ່ເຕັມຕື່ນ ຄັ້ນເວລາເຊົ້າ ພຣະ ເມຕຕິຍະແລະພຣະກຸມມຊກະຫົ່ມອັນຕຣວາສົກແລ້ວ ຖືບາຕຣ໌ ຈີວຣເດີນເຂົ້າໄປຍັງນິເວສນ໌ຂອງທ່ານຄຫບໍດີ ລົງຄົນຮັບໃຊ້ນັ້ນໄດ້ແລເຫັນພຣະເມຕຕິຍະແລະພຣະກຸມມຊກະກຳລັງ ເດີນມາແຕ່ໄກຄັ້ນແລ້ວຈຶ່ງປູອາສນະຖວາຍທີ່ຊຸ້ມປະຕູ ແລ້ວກ່າວວ່າ ນິມົນຕ໌ນັ່ງ ຂ້ານ້ອຍ ຈຶ່ງພຣະເມຕຕິຍະແລະພຣະກຸມມຊກະ

ຄືດວ່າ ພັຕຕາຫາຣຄົງຈະຍັງບໍ່ແລ້ວເປັນແນ່ ເຂົາຈຶ່ງໃຫ້ເຮົານັ່ງພັກທີ່ຊຸ້ມປະຕູກ່ອນ ຂະນະນັ້ນ ລຶງຄົນຮັບໃຊ້ ໄດ້ນຳອາຫາຣປາຍເຂົ້າ ຊຶ່ງມີນ້ຳຜັກດອງເປັນກັບເຂົ້າໄປຖວາຍ ພ້ອມກ່າວວ່າ ນິມົນຕ໌ລັນຖ້ອນຂ້ານ້ອຍ

ພ. ນ້ອງສາວ ພວກຂ້ານ້ອຍເປັນພຣະຮັບນິຕຍພັຕ ຂ້ານ້ອຍ

ຍ. ຂ້ານ້ອຍຮູ້ວ່າພຣະຄຸຓເຈົ້າເປັນພຣະຮັບນິຕຍພັຕ ຂ້ານ້ອຍ ແຕ່ເມື່ອວານນີ້ເອງ ທ່ານຄຫບໍດີໄດ້ສັ່ງຂ້ານ້ອຍໄວ້ວ່າ ແມ່ສາວໃຊ້ ເຈົ້າຈົ່ງຈັດອາສນະໄວ້ທີ່ຊຸ້ມປະຕູ ແລ້ວອັງຄາສ ພິກຂຸຜູ້ຈະມາລັນພັຕຕາຫາຣໃນວັນມື້ເຊົ້າດ້ວຍປາຍເຂົ້າມີນ້ຳຜັກດອງເປັນກັບ ນິມົນຕ໌ລັນ ຖ້ອນ ຂ້ານ້ອຍ

ພຣະເມຕຕິຍະແລະພຣະພຸມມຊກະເວົ້າກັນວ່າ ທ່ານ ເມື່ອວານນີ້ເອງ ທ່ານຄຫບໍດີ ໄປສູ່ອາຣາມທີ່ສຳນັກ

ພຣະທັພພມັລລບຸຕຣ໌ ພວກເຮົາຄົງຖືກພຣະທັພພມັລລບຸຕຣ໌ຍຸຍົງໃນ ສຳນັກຄຫບໍດີເປັນແນ່ ເພາະຄວາມເສັຍໃຈນັ້ນແລ ພິກຂຸທັ້ງສອງອົງຄ໌ນັ້ນລັນບໍ່ອິ່ມ ຄັ້ນ ເວລາຫລັງອາຫາຣກັບຈາກບິຓຑບາຕໄປສູ່ອາຣາມ ເກັບບາຕຣ໌ຈີວຣແລ້ວ ນັ່ງຮັດເຂົ່າດ້ວຍ ຜ້າສັງຆາຕິຢູ່ກາຍນອກຊຸ້ມປະຕູອາຣາມ ນິ່ງອັ້ນ ເກີ້ເຂີນ ຄໍຕົກ ກົ້ມໜ້າຊົບເຊົາ ບໍ່ເວົ້າຈາ ຯ

ພິກຂຸຓີເມຕຕິຍາໄປຢຸ່ງ

ຍາມນັ້ນ ພິກຂຸຓີເມຕຕິຍາເຂົ້າໄປຫາພຣະເມຕຕິຍະແລະພຣະພຸມມຊກະ ແລ້ວ ໄດ້ກ່າວວ່າ ຂ້ານ້ອຍໄຫວ້ ຂ້ານ້ອຍ ເມື່ອນາງກ່າວຢ່າງນັ້ນແລ້ວ ພິກຂຸທັ້ງສອງອົງຄ໌ກໍບໍ່ໄດ້ ທັກທາຍປຣາສຣັຍ ແມ້ຄັ້ງທີ່ສອງ ... ແມ້ຄັ້ງທີ່ສາມ ນາງກໍໄດ້ກ່າວວ່າຂ້ານ້ອຍໄຫວ້ ຂ້ານ້ອຍ ແມ້ຄັ້ງທີ່ສາມ ພິກຂຸທັ້ງສອງອົງຄ໌ ກໍບໍ່ໄດ້ທັກທາຍປຣາສຣັຍ

ພິກຂຸຓີເມຕຕິຍາຖາມວ່າ ຂ້ານ້ອຍຜິດຕໍ່ພຣະຄຸຓເຈົ້າແນວໃດ ເປັນຫຍັງພຣະຄຸຓເຈົ້າ ຈຶ່ງບໍ່ທັກທາຍປຣາສຣັຍກັບຂ້ານ້ອຍ

ພິກຂຸທັ້ງສອງຕອບວ່າ ກໍຈິງຢ່າງນັ້ນແຫລະ ນ້ອງສາວ ພວກເຮົາຖືກພຣະ ທັພພມັລລບຸຕຣ໌ບຽດບຽນຢູ່ ທ່ານຍັງເພີກເສີຍໄດ້

ເມ. ຂ້ານ້ອຍຈະຊ່ອຍເຫລືອແນວໃດ ຂ້ານ້ອຍ

ພ. ນ້ອງສາວ ຖ້າທ່ານເຕັມໃຈຊ່ອຍ ວັນນີ້ພຣະຜູ້ມີພຣະພາຄຕ້ອງໃຫ້ພຣະທັພພມັລລບຸຕຣ໌ສຶກ

ເມ. ຂ້ານ້ອຍຈະທຳແນວໃດ ຂ້ານ້ອຍສາມາຖຈະຊ່ອຍເຫລືອໄດ້ດ້ວຍວິທີໃດ

ພ. ມາຖ້ອນນ້ອງສາວ ເຈົ້າຈົ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ຂາບທູລຢ່າງນີ້ວ່າ ກັມມ໌ນີ້ບໍ່ແນບນຽນ ບໍ່ສົມຄວຣ ທິສທີ່ບໍ່ມີພັຍ ບໍ່ມີຈັຍໄຣ ບໍ່ມີອັນຕຣາຍ ບັດນີ້ ກັບມາມີພັຍ ມີຈັຍໄຣ ມີອັນຕຣາຍ ຓ ສຖານທີ່ບໍ່ມີລົມ ບັດນີ້ກັບມາມີລົມແຮງຂຶ້ນ ຂ້ານ້ອຍຖືກພຣະຄຸຓເຈົ້າທັພພມັລລບຸຕຣ໌ປະທຸຮ້າຍ ຄືນ້ຳຖືກໄຟເຜົາ ຂ້ານ້ອຍ

ນາງຮັບຄຳຂໍງກິກຂຸທັ້ງສອງ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວ ໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຂາບທູລວ່າ ຂ້ານ້ອຍ ກັມມ໌ນີ້ບໍ່ ແນບນຽນ ບໍ່ສົມຄວຣ ທິສທີ່ບໍ່ມີກັຍ ບໍ່ມີຈັຍໄຣ ບໍ່ມີອັນຕຣາຍ ບັດນີ້ກັບມາມີກັຍ ມີຈັຍໄຣ ມີອັນຕຣາຍ ຓ ສຖານທີ່ບໍ່ມີລົມ ບັດນີ້ ກັບມາ ມີລົມແຮງຂຶ້ນ ຂ້ານ້ອຍ ຖືກພຣະຄຸຓເຈົ້າທັພພມັລລບຸຕຣ໌ປະທຸຮຮ້າຍ ຄືນ້ຳຖືກໄຟເຜົາ ຂ້ານ້ອຍ ໗

ປະຊຸມສົງຂ໌ທຣົງສອບຖາມ

[໕໙] ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຂ໌ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວທຣົງສອບຖາມທ່ານພຣະທັພພມັລລບຸຕຣ໌ວ່າ ດູຣາທັພພະ ທ່ານຍັງຣະລຶກໄດ້ ຫຼືວ່າ ເປັນຜູ້ທຳກັມມ໌ຕາມທີ່ກິກຂຸຓີນີ້ກ່າວຫາ ທ່ານພຣະທັພພມັລລບຸຕຣ໌ຂາບທູລວ່າ ພຣະອົງຄ໌ຍ່ອມທຣົງ ຮູ້ວ່າ ຂ້າພຣະພຸທສເຈົ້າເປັນ ແນວໃດ ຂ້ານ້ອຍ

ແມ້ຄັ້ງທີ່ສອງ ພຣະຜູ້ມີພຣະກາຄ ...

ແມ້ຄັ້ງທີ່ສາມ ພຣະຜູ້ມີພຣະກາຄຕຣັສຖາມທ່ານພຣະທັພພມັລລບຸຕຣ໌ວ່າ ດູຣາ ທັພພະ ທ່ານຍັງຣະລຶກ ໄດ້ບໍ່ວ່າ ເປັນຜູ້ທຳກັມມ໌ຕາມທີ່ກິກຂຸຓີນີ້ກ່າວຫາ ທ່ານພຣະ ທັພພມັລລບຸຕຣ໌ຂາບທູລວ່າ ພຣະອົງຄ໌ຍ່ອມ ທຣົງຮູ້ວ່າ ຂ້າພຣະພຸທສເຈົ້າເປັນແນວໃດ ຂ້ານ້ອຍ

ກ. ດູຣາທັພພະ ບັຓຫິຕຍ່ອມບໍ່ກ່າວແກ້ຄຳກ່າວຫາເຊັ່ນນີ້ ຖ້າທ່ານທຳກໍຈົ່ງບອກວ່າທຳ ຖ້າບໍ່ໄດ້ ທຳ ກໍຈົ່ງບອກວ່າບໍ່ໄດ້ທຳ

ທ. ຂ້ານ້ອຍ ຕັ້ງແຕ່ຂ້າພຣະພຸທສເຈົ້າເກີດມາແລ້ວ ແມ້ໂດຍຄວາມຝັນກໍ ຍັງບໍ່ຮູ້ຈະເສພ ເມຖຸນັສມມ໌ ຈະເວົ້າຫຍັງເຖິງເມື່ອຕື່ນຢູ່ລະ

ພຣະຜູ້ມີພຣະກາຄຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເພາະເຫຕຸ ນັ້ນແລ ພວກທ່ານຈົ່ງ ໃຫ້ກິກຂຸຓີເມຕຕິຍາສິກເລີຍ ແລະຈົ່ງສອບສວນກິກຂຸເຫຼົ່ານີ້ ຄັ້ນ ແລ້ວທຣົງລຸກຈາກທີ່ປະທັບສເດັຈເຂົ້າພຣະ ວິຫາຣ ລຳດັບນັ້ນ ກິກຂຸທັ້ງຫຼາຍໃຫ້ກິກຂຸຓີ ເມຕຕິຍາສິກແລ້ວ ຈຶ່ງພຣະເມຕຕິຍະແລະພຣະກຸມມຊກະໄດ້ຖແລງ ເຣື່ອງນີ້ກັບກິກຂຸທັ້ງຫຼາຍ ວ່າ ທ່ານທັ້ງຫຼາຍ ຂໍພວກທ່ານຢ່າໃຫ້ກິກຂຸຓີເມຕຕິຍາສິກເລີຍເລີຍ ນາງບໍ່ຜິດຫຍັງ ພວກຂ້ານ້ອຍແຄ້ນເຄືອງ ບໍ່ພໍໃຈ ມີຄວາມປະສົງຄ໌ຈະໃຫ້ທ່ານພຣະທັພພມັລລບຸຕຣ໌ເຄລື່ອນຈາກພຣົຫ໌ມຈັຣຍ໌ ຈຶ່ງໄດ້ໃຫ້ນາງໃສ່ເລ່ຫ໌ກົລ

ກິກຂຸທັ້ງຫຼາຍຖາມວ່າ ກໍພວກຄຸຓໂຈທທ່ານພຣະທັພພມັລລບຸຕຣ໌ ດ້ວຍສີລວິບັຕິ ອັນຫາມູລບໍ່ໄດ້ບໍ່

ກິກຂຸທັ້ງສອງນັ້ນຮັບວ່າ ຢ່າງນັ້ນ ຂ້ານ້ອຍ

ບັຣດາກິກຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າເປັນຫຍັງ ພຣະເມຕຕິຢະ ແລະພຣະກຸມມຊກະ ຈຶ່ງໄດ້ໂຈທທ່ານພຣະທັພພມັລລບຸຕຣ໌ດ້ວຍສີລວິບັຕິອັນຫາມູລບໍ່ໄດ້ລະ ແລ້ວຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ທຣົງສອບຖາມ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ກິກຂຸເມຕຕິຢະແລະ ກິກຂຸກຸມມຊກະໂຈທທັພພມັລລບຸຕຣ໌ ດ້ວຍສີລວິບັຕິອັນບໍ່ມີມູລ ແທ້ບໍ່

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ຂ້ານ້ອຍ

ທຣົງຕິຕຽນ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນ ... ຄັ້ນແລ້ວທຣົງທຳສັມມີກາຖາຣັບສັ່ງ ກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເພາະເຫຕຸນັ້ນແລ ສົງฆ໌ຈົ່ງໃຫ້ສຕິວິນັຍແກ່ ທັພພມັລລບຸຕຣ໌ຜູ້ເຖິງຄວາມໄພບູລຍ໌ແຫ່ງ ສຕິແລ້ວ

ດູຣາກິກຂຸທັ້ງຫຼາຍ ກໍແລ ສົງฆ໌ຄວຣໃຫ້ຢ່າງນີ້ ທັພພມັລລບຸຕຣ໌ນັ້ນ ຄວຣເຂົ້າ ໄປຫາສົງฆ໌ ຫົ່ມຜ້າ ອຸຕຣາສົງຄ໌ພາດບ່າ ໄຫວ້ຕີນກິກຂຸຜູ້ແກ່ກວ່າ ນັ່ງຫຍ່ອງຢໍ້ປະຄອງ ອັຌຊລີ ແລ້ວກ່າວຄຳຂໍ ວ່າດັ່ງນີ້:-

ຄຳຂໍສຕິວິນັຍ

ທ່ານຂ້ານ້ອຍ ກິກຂຸເມຕຕິຢະແລະກິກຂຸກຸມມຊກະນີ້ ໂຈທຂ້າພເຈົ້າດ້ວຍສີລວິບັຕິ ອັນບໍ່ມີມູລ ຂ້າພເຈົ້ານັ້ນເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງฆ໌

ຄວຣຂໍແມ້ຄັ້ງທີ່ສອງ ...

ຄວຣຂໍແມ້ຄັ້ງທີ່ສາມ ທ່ານຂ້ານ້ອຍ ກິກຂຸເມຕຕິຢະແລະກິກຂຸກຸມມຊກະນີ້ ໂຈທ ຂ້າພເຈົ້າດ້ວຍ ສີລວິບັຕິອັນບໍ່ມີມູລ ຂ້າພເຈົ້ານັ້ນເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິ ວິນັຍກັບສົງฆ໌ ແມ້ຄັ້ງທີ່ສາມ ຯ

[໕໙໗] ກິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ ດ້ວຍຌັຕຕິ ຈຕຸຕຖກັມມວາຈາ ວ່າ ດັ່ງນີ້:-

ກັມມວາຈາໃຫ້ສຕິວິນັຍ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ກິກຂຸເມຕຕິຢະແລະກິກຂຸ ກຸມມຊກະນີ້ ໂຈທທ່ານພຣະ ທັພພມັລລບຸຕຣ໌ດ້ວຍສີລວິບັຕິອັນບໍ່ມີມູລ ທ່ານ ພຣະທັພພມັລລບຸຕຣ໌ເປັນຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງฆ໌ ຖ້າຄວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ສົງฆ໌ຄວຣໃຫ້ສຕິວິນັຍ ແກ່ທ່ານພຣະທັພພ ມັລລບຸຕຣ໌ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ນີ້ເປັນຌັຕຕິ

ທ່ານເຈົ້າ ຂໍສົງฆ์ຈົງຟັງຂ້າພເຈົ້າ ภิกຂຸເມຕຕິຍະແລະภิกຂຸກຸມມຊກະ ນີ້ ໂຈທທ່ານພຣະທັພພມັລລບຸຕຣ໌ດ້ວຍສີລວິບັຕິອັນບໍ່ມີມູລ ທ່ານພຣະທັພພມັລລບຸຕຣ໌ເປັນຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງฆ์ ສົງฆ์ໃຫ້ ສຕິວິນັຍແກ່ທ່ານພຣະທັພພມັລລບຸຕຣ໌ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ການໃຫ້ສຕິວິນັຍແກ່ທ່ານພຣະທັພພມັລລບຸຕຣ໌ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສາມ ທ່ານຂ້ານ້ອຍ ຂໍສົງฆ์ຈົງ ຟັງຂ້າພເຈົ້າ ภิกຂຸເມຕຕິຍະແລະภิกຂຸກຸມມຊກະນີ້ ໂຈທທ່ານພຣະທັພພມັລລບຸຕຣ໌ດ້ວຍສີລວິບັຕິອັນບໍ່ມີມູລ ທ່ານພຣະທັພພມັລລບຸຕຣ໌ເປັນຜູ້ເຖິງຄວາມ ໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງฆ์ ສົງฆ์ໃຫ້ສຕິວິນັຍແກ່ທ່ານພຣະ ທັພພມັລລບຸຕຣ໌ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ການໃຫ້ສຕິວິນັຍແກ່ທ່ານ ພຣະທັພພມັລລບຸຕຣ໌ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ສຕິວິນັຍ ອັນສົງฆ์ໃຫ້ແລ້ວແກ່ທ່ານພຣະທັພພມັລລບຸຕຣ໌ ຜູ້ເຖິງຄວາມ ໄພບູລຍ໌ແຫ່ງສຕິແລ້ວ ຖືກແກ່ສົງฆ์ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ ໄວ້ ດ້ວຍຢ່າງນີ້ ฯ

ການໃຫ້ສຕິວິນັຍທີ່ເປັນສັມມ໌ມີ ๕ ຢ່າງ

[๕໙໙] ດູຣາภิกຂຸທັ້ງຫຼາຍ ການໃຫ້ສຕິວິນັຍທີ່ເປັນສັມມ໌ມີ ๕ ຢ່າງນີ້ ຄື ภิกຂຸເປັນຜູ້ຫມົດຈົດບໍ່ຕ້ອງອາບັຕິ ๑ ຜູ້ອື່ນໂຈທທ່ານ ๑ ທ່ານຂໍ ๑ ສົງฆ์ໃຫ້ສຕິວິນັຍ ແກ່ທ່ານ ๑ ສົງฆ์ພ້ອມພຽງກັນໂດຍສັມມ໌ໃຫ້ ๑ ດູຣາภิกຂຸທັ້ງຫຼາຍ ການໃຫ້ສຕິວິນັຍ ທີ່ເປັນສັມມ໌ມີ ๕ ຢ່າງນີ້ແລ ฯ

ເຣື່ອງພຣະຄັຄຄະ

[๖๐๐] ໂດຍສມັຍນັ້ນແລ ພຣະຄັຄຄະວິກົລຈຣິຕ ມີຈິຕແປຼປວນ ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍ ກາຍ ภิกຂຸທັ້ງຫຼາຍໂຈທພຣະຄັຄຄະດ້ວຍອາບັຕິທີ່ທ່ານວິກົລຈຣິຕ ມີຈິຕແປຼປວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົງຣະລຶກອາບັຕິເຫັນປານນີ້ ທ່ານ ກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປວນເສັຍແລ້ວ ຂ້ານ້ອຍນັ້ນວິກົລຈຣິຕ ມີຈິຕແປຼປວນໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງ ໄດ້ທຳສິ່ງນີ້ແລ້ວ ภิกຂຸທັ້ງຫຼາຍຜູ້ອັນທ່ານກ່າວຢູ່ແມ້ຢ່າງນັ້ນ ກໍຍັງໂຈທທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົງຣະລຶກອາບັຕິເຫັນປານນີ້ ບັຣດາภิกຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງภิกຂຸທັ້ງຫຼາຍ ຈຶ່ງໄດ້ໂຈທ

ພຣະຄັຄຄະ ດ້ວຍອາບັຕິທີ່ທ່ານ ວິກົລຈຣິຕ ມີຈິຕແປຼປ່ວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິ ແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປ່ວນ ເສັຍ ແລ້ວຂ້ານ້ອຍນັ້ນວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະ ຢ່າງຫຼວງຫາຍ ທັ້ງທີ່ກ່າວ ດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງ ໄດ້ທຳສິ່ງນີ້ແລ້ວ ກິກຂຸ ທັ້ງຫຼາຍຜູ້ອັນທ່ານກ່າວຢູ່ແມ້ຢ່າງນັ້ນ ກໍຍັງໂຈທ ທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວຈົ່ງຣະລຶກອາບັຕິເຫັນ ປານນີ້ ແລ້ວຂາບທູລເຣື່ອງ ນັ້ນແດ່ພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ຂ່າວວ່າ ກິກຂຸທັ້ງຫຼາຍໂຈທ ກິກຂຸຄັຄຄະ ... ແທ້ບໍ່

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນ ... ຄັ້ນແລ້ວທຣົງທຳສັມມີກະຖາຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ເພາະເຫຕຸນັ້ນແລ ສົງฆ໌ຈົ່ງໃຫ້ອມູຄຫວິນັຍແກ່ກິກຂຸຄັຄຄະຜູ້ຫາຍວິກົລຈຣິຕແລ້ວ

ດູຣາກິກຂຸທັ້ງຫຼາຍ ກໍແລ ສົງฆ໌ຄວຣໃຫ້ຢ່າງນີ້ ຄັຄຄະກິກຂຸນັ້ນຄວຣເຂົ້າໄປຫາສົງฆ໌ ຫົ່ມຜ້າອຸຕຣາ ສົງຄ໌ພາດບ່າ ໄຫວ້ຕີນກິກຂຸຜູ້ແກ່ກວ່າ ນັ່ງຫຢ່ອງຍໍ້ປະຄອງອັຍຊລີ ແລ້ວ ກ່າວຄຳຂໍ ວ່າດັ່ງນີ້:-

ຄຳຂໍອມູຄຫວິນັຍ

ທ່ານຂ້ານ້ອຍ ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປ່ວນເສັຍແລ້ວ ຂ້າພເຈົ້ານັ້ນວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ກິກຂຸທັ້ງຫຼາຍໂຈທຂ້າພເຈົ້າ ດ້ວຍອາບັຕິທີ່ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປ່ວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນ ປານນີ້ຂ້າພເຈົ້າກ່າວກັບກິກຂຸເຫຼົ່ານັ້ນຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປ່ວນເສັຍແລ້ວ ຂ້ານ້ອຍນັ້ນວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕລະເມີດກິຈອັນ ບໍ່ຄວຣແກ່ ສມຓະຢ່າງຫຼວງຫາຍທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກອາບັຕິນັ້ນ ບໍ່ໄດ້ຂ້ານ້ອຍຫລົງໄດ້ທຳສິ່ງນີ້ແລ້ວ ກິກຂຸທັ້ງຫຼາຍຜູ້ອັນຂ້າພເຈົ້າກ່າວຢູ່ແມ້ຢ່າງນັ້ນກໍຍັງໂຈທ ຂ້າພເຈົ້າຢູ່ຕາມເດີມ ວ່າທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານຂ້ານ້ອຍ ຂ້າພເຈົ້ານັ້ນ ຫາຍວິກົລຈຣິຕແລ້ວ ຂໍ ອມູຄຫວິນັຍກັບສົງฆ໌

ຄວຣຂໍແມ້ຄັ້ງທີ່ສອງ ...

ຄວຣຂໍແມ້ຄັ້ງທີ່ສາມ ທ່ານຂ້ານ້ອຍ ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປ່ວນເສັຍແລ້ວ ຂ້າພເຈົ້ານັ້ນ ວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ

ແລະພຍາຍາມທຳດ້ວຍກາຍ ພິກຂຸທັ້ງຫຼາຍໂຈທຂ້າພເຈົ້າດ້ວຍ ອາບັຕິທີ່ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປ່ວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິ ແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ຂ້າພເຈົ້າກ່າວກັບພິກຂຸເຫຼົ່ານັ້ນ ຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປ່ວນເສັຍແລ້ວ ຂ້ານ້ອຍນັ້ນວິກົລຈຣິຕ ມີຈິຕແປຼປ່ວນໄດ້ ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງໄດ້ທຳສິ່ງນີ້ແລ້ວ ພິກຂຸທັ້ງຫຼາຍຜູ້ອັນຂ້າພເຈົ້າກ່າວ ຢູ່ແມ້ຢ່າງນັ້ນ ກໍຍັງໂຈທຂ້າພເຈົ້າຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານຂ້ານ້ອຍ ຂ້າພເຈົ້າ ນັ້ນຫາຍວິກົລຈຣິຕແລ້ວຂໍອມູລຫວິນັຍກັບສົງຄ໌ ແມ້ຄັ້ງທີ່ສາມ ໆ

[໖໐໑] ພິກຂຸຜູ້ຉລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິຈຕຸຕຖກັມມວາຈາ ວ່າ ດັ່ງນີ້:-

ກັມມວາຈາໃຫ້ອມູລຫວິນັຍ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຄັຄຄະພິກຂຸນີ້ວິກົລຈຣິຕມີຈິຕແປຼປ່ວນ ທ່ານວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ພິກຂຸ ທັ້ງຫຼາຍໂຈທຄັຄຄະພິກຂຸດ້ວຍອາບັຕິທີ່ທ່ານວິກົລຈຣິຕ ມີຈິຕແປຼປ່ວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປ່ວນເສັຍແລ້ວ ຂ້ານ້ອຍນັ້ນວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ ປະພຶຕລະເມີດກິຈອັນບໍ່ຄວຣແກ່ ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກ ອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງ ໄດ້ທຳສິ່ງນີ້ແລ້ວ ພິກຂຸທັ້ງຫຼາຍຜູ້ອັນທ່ານກ່າວຢູ່ ແມ້ຢ່າງນັ້ນ ກໍຍັງໂຈທທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກ ອາບັຕິເຫັນປານນີ້ ທ່ານຫາຍວິກົລຈຣິຕແລ້ວ ຂໍອມູລຫວິນັຍກັບສົງຄ໌ ຖ້າຄວາມ ພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣໃຫ້ອມູລຫວິນັຍແກ່ຄັຄຄະພິກຂຸ ຜູ້ຫາຍ ວິກົລຈຣິຕແລ້ວ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຄັຄຄະພິກຂຸນີ້ວິກົລຈຣິຕມີຈິຕ ແປຼປ່ວນ ທ່ານວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕລະເມີດກິຈອັນບໍ່ ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ພິກຂຸທັ້ງຫຼາຍໂຈທຄັຄຄະພິກຂຸດ້ວຍອາບັຕິທີ່ທ່ານວິກົລຈຣິຕ ມີຈິຕແປຼປ່ວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານ ນີ້ ທ່ານກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປ່ວນເສັຍແລ້ວ ຂ້ານ້ອຍນັ້ນວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍຂ້ານ້ອຍ

ຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍໜລົງ ໄດ້ທຳສິ່ງນີ້ແລ້ວ ກິກຂຸທັ້ງຫຼາຍຜູ້ອັນທ່ານກ່າວ ຢູ່ແມ້ຢ່າງນັ້ນ ກໍຍັງໂຈທທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກ ອາບັຕິເຫັນປານນີ້ ທ່ານຫາຍວິກົລຈຣິຕແລ້ວຂໍອມູລຫວິນັຍກັບສົງຄ໌ ສົງຄ໌ໃຫ້ອມູລຫວິນັຍແກ່ຄັຄຄະກິກຂຸຜູ້ຫາຍວິກົລຈຣິຕແລ້ວ ກາຣໃຫ້ອມູລຫວິນັຍແກ່ຄັຄຄະ ກິກຂຸຜູ້ຫາຍວິກົລຈຣິຕແລ້ວ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສາມ ...

ອມູລຫວິນັຍ ອັນສົງຄ໌ໃຫ້ແລ້ວແກ່ຄັຄຄະກິກຂຸ ຜູ້ຫາຍວິກົລຈຣິຕແລ້ວ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້ ຯ

ໃຫ້ອມູລຫວິນັຍບໍ່ເປັນສັມມ໌ ໓ ໜມວດ

[໖໐໘] ດູຣາກິກຂຸທັ້ງຫຼາຍ ກາຣໃຫ້ອມູລຫວິນັຍ ບໍ່ເປັນສັມມ໌ ໓ ໜມວດ ເປັນສັມມ໌ ໓ ໜມວດນີ້ ກາຣໃຫ້ອມູລຫວິນັຍ ບໍ່ເປັນສັມມ໌ ໓ ໜມວດ ເປັນແບບໃດ

ໜມວດທີ່ ໑

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສັມມ໌ວິນັຍນີ້ ຕ້ອງອາບັຕິ ສົງຄ໌ຫຼືກິກຂຸ ໒-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານກຳລັງ ຣະລຶກ ກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຕ້ອງອາບັຕິແລ້ວ ແຕ່ຣະລຶກອາບັຕິເຫັນປານນີ້ບໍ່ໄດ້ ສົງຄ໌ໃຫ້ ອມູລຫວິນັຍແກ່ທ່ານ ກາຣໃຫ້ອມູລຫວິນັຍບໍ່ເປັນສັມມ໌ ຯ

ໜມວດທີ່ ໒

[໖໐໓] ດູຣາກິກຂຸທັ້ງຫຼາຍ ອີກຢ່າງ ກິກຂຸໃນສັມມ໌ວິນັຍນີ້ຕ້ອງອາບັຕິ ສົງຄ໌ຫຼື ກິກຂຸ ໒-໓ ອົງຄ໌ຫຼືກິກຂຸອົງຄ໌ດຽວໂຈທທ່ານວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານຣະລຶກໄດ້ຈຶ່ງກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຣະລຶກໄດ້ເໝືອນຄວາມຝັນ ສົງຄ໌ໃຫ້ ອມູລຫວິນັຍແກ່ທ່ານ ກາຣໃຫ້ອມູລຫວິນັຍບໍ່ເປັນສັມມ໌ ຯ

ໜມວດທີ່ ໓

[໖໐໔] ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສັມມ໌ວິນັຍຕ້ອງອາບັຕິ ສົງຄ໌ຫຼືກິກຂຸ ໒-໓ ອົງຄ໌ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານຫາຍວິກົລຈຣິຕແລ້ວ

ແຕ່ຍັງທຳເປັນວິກົລຈຣິຕວ່າ ຂ້ານ້ອຍກໍທຳຢ່າງນີ້ ທ່ານທັ້ງຫຼາຍກໍທຳຢ່າງນີ້ ສິ່ງນີ້ຄວຣແກ່ຂ້ານ້ອຍ ສິ່ງນີ້ຄວຣ ແມ້ແກ່ທ່ານທັ້ງຫຼາຍ ສົງຆ໌ໃຫ້ອມູຄຫວິນັຍແກ່ທ່ານ ການໃຫ້ ອມູຄຫວິນັຍບໍ່ເປັນສັມມ໌ ໆ

ການໃຫ້ອມູຄຫວິນັຍບໍ່ເປັນສັມມ໌ ໓ ໝວດ ເຫຼົ່ານີ້

ໃຫ້ອມູຄຫວິນັຍບໍ່ເປັນສັມມ໌ ໓ ໝວດ ຈົບ

ໃຫ້ອມູຄຫວິນັຍເປັນສັມມ໌ ໓ ໝວດ

ໝວດທີ່ ໑

[໖໐໕] ການໃຫ້ອມູຄຫວິນັຍເປັນສັມມ໌ ໓ ໝວດ ເປັນແບບໃດ ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນ ສັມມ໌ວິນັຍນີ້ ວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ ສມຕະຢ່າງຫຼວງຫາຍ ທັ້ງ ທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ສົງຆ໌ ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານ ຣະລຶກບໍ່ໄດ້ຈຶ່ງກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຕ້ອງອາ ບັຕິ

ແລ້ວແຕ່ຣະລຶກອາບັຕິເຫັນປານນີ້ບໍ່ໄດ້ ສົງຆ໌ໃຫ້ອມູຄຫວິນັຍແກ່ທ່ານ ການໃຫ້ອມູຄຫວິນັຍເປັນສັມມ໌ ໆ

ໝວດທີ່ ໔

[໖໐໖] ດູຣາກິກຂຸທັ້ງຫຼາຍ ອີກຢ່າງ ກິກຂຸໃນສັມມ໌ວິນັຍນີ້ ວິກົລຈຣິຕມີຈິຕແປຼປວນ ໄດ້ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະ ພຍາຍາມທຳດ້ວຍກາຍ ສົງຆ໌ຫຼື ກິກຂຸ ໔-໓ ອົງຄ໌ຫຼືກິກຂຸອົງຄ໌ດຽວໂຈທທ່ານວ່າ ທ່ານຕ້ອງອາບັຕິແລ້ວຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານ ຣະລຶກບໍ່ໄດ້ຈຶ່ງກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຣະລຶກ ໄດ້ຄືຄວາມຝັນ ສົງຆ໌ໃຫ້ອມູຄຫວິນັຍແກ່ທ່ານ ການໃຫ້ ອມູຄຫວິນັຍເປັນສັມມ໌ ໆ

ໝວດທີ່ ໓

[໖໐໗] ດູຣາກິກຂຸທັ້ງຫຼາຍ ອີກຢ່າງ ກິກຂຸໃນສັມມ໌ວິນັຍນີ້ ວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະ ພຍາຍາມທຳດ້ວຍກາຍ ສົງຆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານ ຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານ ວິກົລຈຣິຕ ທຳອາການວິກົລຈຣິຕວ່າ ຂ້ານ້ອຍກໍທຳ ຢ່າງນີ້ ແມ້ທ່ານທັ້ງຫຼາຍກໍທຳຢ່າງນີ້ ສິ່ງນີ້ຄວຣແມ້ແກ່ ຂ້ານ້ອຍສິ່ງນີ້ຄວຣແມ້ແກ່ທ່ານທັ້ງຫຼາຍ ສົງຆ໌ໃຫ້ອມູຄຫວິນັຍແກ່ທ່ານ ການໃຫ້ອມູຄຫວິນັຍເປັນສັມມ໌ ໆ ການໃຫ້ອມູຄຫວິນັຍເປັນສັມມ໌ ໓ ໝວດ ເຫຼົ່ານີ້

ໃຫ້ອມູຄຫວິນັຍເປັນສັມມ໌ ໓ ໝວດ ຈົບ

ທຳກັມມ໌ບໍ່ຕາມປຕິລາຓ

[໕໐໗] ສມັຍນັ້ນແລ ພຣະລັພພັຄຄີຍ໌ທຳກັມມ໌ ຄື ຕັຊຊນີຍກັມມ໌ແດ່ ນິຍສກັມມ໌ແດ່ ປຕິສາຣະນີຍກັມມ໌ແດ່ ອຸກເຂປນີຍກັມມ໌ແດ່ ແກ່ພິກຂຸທັ້ງຫຼາຍ ບໍ່ຕາມປຕິລາຓ ບັຣດາພິກຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພ່ງໂທສ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະລັພພັຄຄີຍ໌ຈຶ່ງໄດ້ທຳກັມມ໌ຄື ຕັຊຊນີຍກັມມ໌ແດ່ ນິຍສກັມມ໌ແດ່ ປັພພາຊນີຍກັມມ໌ແດ່ ປຕິສາຣະນີຍກັມມ໌ແດ່ ອຸກເຂປນີຍກັມມ໌ແດ່ ແກ່ພິກຂຸທັ້ງຫຼາຍ ບໍ່ຕາມປຕິລາຓລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພຣະລັພພັຄຄີຍ໌ທຳກັມມ໌ ຄື ຕັຊຊນີຍກັມມ໌ແດ່ ນິຍສກັມມ໌ແດ່ ປັພພາຊນີຍກັມມ໌ແດ່ ປຕິສາຣະນີຍກັມມ໌ແດ່ ອຸກເຂປນີຍກັມມ໌ແດ່ ແກ່ພິກຂຸທັ້ງຫຼາຍ ບໍ່ຕາມປຕິລາຓ ແທ້ບໍ່

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ຂ້ານ້ອຍ

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນ ... ຄັ້ນແລ້ວທຣົງທຳທັມມີກຖາ ຮັບສັ່ງ ກັບພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ກັມມ໌ຄື ຕັຊຊນີຍກັມມ໌ກໍດີ ນິຍສກັມມ໌ກໍດີ ປັພພາຊນີຍກັມມ໌ກໍດີ ປຕິສາຣະນີຍກັມມ໌ກໍດີ ອຸກເຂປນີຍກັມມ໌ກໍດີ ອັນພິກຂຸບໍ່ຄວຣເຮັດ ແກ່ພິກຂຸທັ້ງຫຼາຍ ບໍ່ຕາມປຕິລາຓ ອົງຄ໌ໃດທ□າ ຕ້ອງອາບັຕິທຸກກົຏ ฯ

ທຳຕາມປຕິລາຓບໍ່ເປັນທັມມ໌

[໕໐໘] ດູຣາພິກຂຸທັ້ງຫຼາຍ ການທຳຕາມປຕິລາຓທີ່ບໍ່ເປັນທັມມ໌ຢ່າງນີ້ແລທີ່ເປັນທັມມ໌ຢ່າງນີ້ ການທຳຕາມປຕິລາຓບໍ່ເປັນທັມມ໌ແນວໃດ

ພິກຂຸຕ້ອງອາບັຕິປາຣາຊິກ ສົງຄ໌ຫຼືພິກຂຸ ໔-໕ ອົງຄ໌ ຫຼືພິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິປາຣາຊິກ ຂ້ານ້ອຍຕ້ອງອາບັຕິສັງຄາທິເສສ ສົງຄ໌ປັບທ່ານດ້ວຍອາບັຕິສັງຄາທິເສສ ການປັບຢ່າງນີ້ ຊື່ວ່າ ທຳຕາມປຕິລາຓບໍ່ເປັນທັມມ໌

ພິກຂຸຕ້ອງອາບັຕິປາຣາຊິກ ສົງຄ໌ຫຼືພິກຂຸ ໔-໕ ອົງຄ໌ ຫຼືພິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິປາຣາຊິກ ຂ້ານ້ອຍຕ້ອງອາບັຕິຖຸລລັຈຈັຍ ສົງຄ໌ປັບທ່ານດ້ວຍອາບັຕິຖຸລລັຈຈັຍ ການປັບຢ່າງນີ້ ຊື່ວ່າ ທຳຕາມປຕິລາຓບໍ່ເປັນທັມມ໌

ພິກຂຸຕ້ອງອາບັຕິປາຣາຊິກ ສົງຄ໌ຫຼືພິກຂຸ ໔-໕ ອົງຄ໌ ຫຼືພິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິປາຣາຊິກ ຂ້ານ້ອຍຕ້ອງອາບັຕິປາຈິຕຕີຍ໌ ສົງຄ໌ປັບທ່ານດ້ວຍອາບັຕິປາຈິຕຕີຍ໌ ການປັບຢ່າງນີ້ ຊື່ວ່າ ທຳຕາມປຕິລາຓບໍ່ເປັນທັມມ໌

ກິກຂຸຕ້ອງອາບັຕິປາຣາຊິກ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິປາຣາຊິກ ຂ້ານ້ອຍຕ້ອງອາບັຕິປາຕິເທສນີຍະ ສົງฆ໌ປັບທ່ານດ້ວຍອາບັຕິປາຕິເທສນີຍະ ກາຣປັບຢ່າງນີ້ ຊື່ວ່າທຳຕາມປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິປາຣາຊິກ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິປາຣາຊິກ ຂ້ານ້ອຍຕ້ອງອາບັຕິທຸກກົຍ ສົງฆ໌ປັບທ່ານດ້ວຍອາບັຕິທຸກກົຍ ກາຣປັບຢ່າງນີ້ ຊື່ວ່າທຳຕາມ ປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິປາຣາຊິກ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິປາຣາຊິກ ຂ້ານ້ອຍຕ້ອງອາບັຕິທຸພກາສິຕ ສົງฆ໌ປັບທ່ານດ້ວຍອາບັຕິທຸພກາສິຕ ກາຣປັບຢ່າງນີ້ ຊື່ວ່າທຳຕາມ ປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິສັງฆາທິເສສ ...

ກິກຂຸຕ້ອງອາບັຕິຖຸລລັຈຈັຍ ...

ກິກຂຸຕ້ອງອາບັຕິປາຈິຕຕີຍ໌ ...

ກິກຂຸຕ້ອງອາບັຕິປາຕິເທສນີຍະ ...

ກິກຂຸຕ້ອງອາບັຕິທຸກກົຍ ...

ກິກຂຸຕ້ອງອາບັຕິທຸພກາສິຕ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິທຸພກາສິຕ ທ່ານກ່າວຢ່າງນີ້ວ່າຖຸฒຂ້ານ້ອຍບໍ່ໄດ້ຕ້ອງອາບັຕິທຸພກາສິຕ ຂ້ານ້ອຍຕ້ອງອາບັຕິປາຣາຊິກ ສົງฆ໌ປັບທ່ານດ້ວຍອາບັຕິປາຣາຊິກ ກາຣປັບຢ່າງນີ້ ຊື່ວ່າທຳຕາມປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິທຸພກາສິຕ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິທຸພກາສິຕ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິທຸພກາສິຕ ຂ້ານ້ອຍຕ້ອງອາບັຕິສັງฆາທິເສສ ສົງฆ໌ປັບທ່ານດ້ວຍອາບັຕິສັງฆາທິເສສ ກາຣປັບຢ່າງນີ້ ຊື່ວ່າ ທຳຕາມປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິທຸພກາສິຕ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິທຸພກາສິຕ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິທຸພກາສິຕ ຂ້ານ້ອຍຕ້ອງອາບັຕິຖຸລລັຈຈັຍ ສົງฆ໌ປັບທ່ານດ້ວຍອາບັຕິຖຸລລັຈຈັຍ ກາຣປັບຢ່າງນີ້ ຊື່ວ່າທຳຕາມ ປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິທຸພກາສິຕ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິທຸພກາສິຕ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິທຸພກາສິຕ ຂ້ານ້ອຍຕ້ອງອາບັຕິປາຈິຕຕີຍ໌ ສົງฆ໌ປັບທ່ານດ້ວຍອາບັຕິປາຈິຕຕີຍ໌ ກາຣປັບຢ່າງນີ້ ຊື່ວ່າທຳຕາມ ປຕິຍາฒບໍ່ເປັນສັມມ໌

ກິກຂຸຕ້ອງອາບັຕິທຸພກາສິຕ ສົງฆ໌ຫຼືກິກຂຸ ໔-໓ ອົງຄ໌ ຫຼືກິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິທຸພກາສິຕ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິທຸພກາສິຕ ຂ້ານ້ອຍຕ້ອງອາບັຕິປາຕິເທສນີຍະ

ສົງฆ໌ປັບທ່ານດ້ວຍອາບັຕິປາຕິເທສນີຍະ ການປັບຢ່າງນີ້ ຊື່ວ່າທຳຕາມປຕິຍາຕບໍ່ເປັນສັມມ໌

ພິກຂຸຕ້ອງອາບັຕິທຸພພາສິຕ ສົງฆ໌ ຫຼືພິກຂຸ ໔-໖ ອົງຄ໌ ຫຼືພິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາ-ບັຕິທຸພພາສິຕ ທ່ານກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍບໍ່ໄດ້ຕ້ອງອາບັຕິ ທຸພພາສິຕ ຂ້ານ້ອຍຕ້ອງອາບັຕິທຸກກົຏ ສົງฆ໌ປັບທ່ານດ້ວຍອາບັຕິທຸກກົຏ ການປັບຢ່າງນີ້ ຊື່ວ່າທຳຕາມປຕິຍາຕບໍ່ເປັນສັມມ໌

ດູຣາພິກຂຸທັ້ງຫຼາຍ ຢ່າງນີ້ແລ ທຳຕາມປຕິຍາຕບໍ່ເປັນສັມມ໌ ฯ

ທຳຕາມປຕິຍາຕເປັນສັມມ໌

[໖໑໐] ດູຣາພິກຂຸທັ້ງຫຼາຍ ການທຳຕາມປຕິຍາຕເປັນສັມມ໌ແນວໃດ

ພິກຂຸຕ້ອງອາບັຕິປາຣາຊິກ ສົງฆ໌ ຫຼືພິກຂຸ ໔-໖ ອົງຄ໌ ຫຼືພິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານກ່າວຢ່າງນີ້ວ່າ ຖືກລະ ທ່ານ ຂ້ານ້ອຍຕ້ອງອາບັຕິປາຣາຊິກ ສົງฆ໌ປັບທ່ານດ້ວຍອາບັຕິປາຣາຊິກ ການປັບຢ່າງນີ້ ຊື່ວ່າທຳຕາມປຕິຍາຕ ເປັນສັມມ໌

ພິກຂຸຕ້ອງອາບັຕິສັງฆາທິເສສ ...

ພິກຂຸຕ້ອງອາບັຕິຖຸລລັຈຈັຍ ...

ພິກຂຸຕ້ອງອາບັຕິປາຈິຕຕີຍ໌ ...

ພິກຂຸຕ້ອງອາບັຕິປາຕິເທສນີຍະ ...

ພິກຂຸຕ້ອງອາບັຕິທຸກກົຏ ...

ພິກຂຸຕ້ອງອາບັຕິທຸພພາສິຕ ສົງฆ໌ ຫຼືພິກຂຸ ໔-໖ ອົງຄ໌ ຫຼືພິກຂຸອົງຄ໌ດຽວ ໂຈທທ່ານວ່າ ທ່ານຕ້ອງອາບັຕິທຸພພາສິຕ ທ່ານກ່າວຢ່າງນີ້ວ່າ ຖືກລະຄຸຕ ຂ້ານ້ອຍຕ້ອງອາບັຕິ ທຸພພາສິຕ ສົງฆ໌ປັບທ່ານດ້ວຍອາບັຕິທຸພພາສິຕ ການປັບ ຢ່າງນີ້ ຊື່ວ່າທຳຕາມ ປຕິຍາຕເປັນສັມມ໌

ດູຣາພິກຂຸທັ້ງຫຼາຍ ຢ່າງນີ້ແລ ທຳຕາມປຕິຍາຕເປັນສັມມ໌ ฯ

ຣະງັບອທິກຣຕ໌ດ້ວຍເຢភຸຍຍສິກາ[6]

[໖໑໑] ສມັຍນັ້ນແລ ພິກຂຸທັ້ງຫຼາຍກໍ່ຄວາມບາດໜາງ ກໍ່ຄວາມທະເລາະ ເຖິງຄວາມວິວາທກັນ ໃນທ່າມກາງສົງฆ໌ ກ່າວຈິ່ມແທງກັນແລະກັນດ້ວຍຫອກຄືປາກຢູ່ ບໍ່ອາຈເພື່ອຣະງັບອທິກຣຕ໌ນັ້ນໄດ້ ຈຶ່ງ

[6] **ເຢភຸຍຍສິກາ** ກິຣິຍາເປັນໄປຕາມຂ້າງມາກໄດ້ແກ່ ວິທີຕັດສິນອທິກຣຕ໌ ໂດຍຖືເອົາຕາມຄຳຂອງຄົນຂ້າງມາກ ເຊັ່ນ ວິທີຈັບສລາກເພື່ອຊີ້ຂໍ້ຜິດຖືກຂ້າງໃດມີພິກຂຸຜູ້ຮ່ວມພິຈາຣຕາລົງຄວາມເຫັນຫຼາຍກວ່າ ກໍຄືເອົາພວກຂ້າງນັ້ນ ເປັນວິທີຢ່າງດຽວກັບການໂຫວຕຄະແນນສຽງ, ໃຊ້ສຳຫຼັບຣະງັບວິວາທາທິກຣຕ໌ ເບິ່ງ ອທິກໍຣຕສມຖະ

ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄໆ ຕຣັສວ່າ ດູຣາກິກຂຸທັ້ງຫຼາຍ ເຣົາອນຸຍາຕໃຫ້ຣະງັບອທິກຣົຕ໌ເຫັນປານນີ້ດ້ວຍເຢກຸຍຍສິກາ ຈຶ່ງສົມມຸຕິ ກິກຂຸຜູ້ປະກອບດ້ວຍອົງຄ໌ ໕ ໃຫ້ເປັນຜູ້ໃຫ້ຈັບສລາກ ຄື:-

໑. ບໍ່ເຖິງຄວາມລຳອຽງເພາະຄວາມຊອບພໍ

໒. ບໍ່ເຖິງຄວາມລຳອຽງເພາະຄວາມບໍ່ມັກ

໓. ບໍ່ເຖິງຄວາມລຳອຽງເພາະຄວາມງົມງາຍ

໔. ບໍ່ເຖິງຄວາມລຳອຽງເພາະຄວາມຢ້ານ ແລະ

໕. ຮູ້ຈັກສລາກທີ່ຈັບແລ້ວແລະຍັງບໍ່ຈັບ

ກໍແລ ສົງຄ໌ຄວຣສົມມຸຕິຢ່າງນີ້ ຄວຣຂໍຮ້ອງກິກຂຸກ່ອນ ຄັ້ນແລ້ວກິກຂຸຜູ້ສລາດ ຜູ້ສາມາຖຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ກັມມວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນຜູ້ໃຫ້ຈັບສລາກ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ສົງຄ໌ສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນຜູ້ໃຫ້ຈັບສລາກ ກາຣສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນຜູ້ໃຫ້ຈັບສລາກ ຄວຣແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ກິກຂຸມີຊື່ນີ້ອັນສົງຄ໌ສົມມຸຕິແລ້ວໃຫ້ເປັນຜູ້ໃຫ້ຈັບສລາກ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້ ໆ

ກາຣຈັບສລາກບໍ່ເປັນທັມມ໌ ໑໐ ຢ່າງ

[໖໑໒] ດູຣາກິກຂຸທັ້ງຫຼາຍ ກາຣຈັບສລາກບໍ່ເປັນທັມມ໌ ໑໐ ຢ່າງ ເປັນ ທັມມ໌ ໑໐ ຢ່າງ ເຫຼົ່ານີ້ ກາຣຈັບສລາກບໍ່ເປັນທັມມ໌ ໑໐ ຢ່າງ ເປັນແບບໃດ ຄື:-

໑. ອທິກຣົຕ໌ເປັນເຣື່ອງນ້ອຍນິ່ງ

໒. ບໍ່ລຸກລາມໄປໄກ

໓. ກິກຂຸພວກນັ້ນຣະລຶກບໍ່ໄດ້ເອງ ແລະພວກອື່ນກໍໃຫ້ຣະລຶກບໍ່ໄດ້

໔. ຮູ້ວ່າ ອທັມມວາທີຫຼາຍກວ່າ

໕. ຮູ້ວ່າ ເປັນຫຍັງ ອທັມມວາທີຈຶ່ງມີຫຼາຍກວ່າ

໖. ຮູ້ວ່າ ສົງຄ໌ຈະແຕກກັນ

໗. ຮູ້ວ່າ ເປັນຫຍັງ ສົງຄ໌ຄວຣແຕກກັນ

໘. ອທັມມວາທີກິກຂຸຈັບໂດຍບໍ່ເປັນທັມມ໌

໙. ອສັມມວາທີພິກຂຸຈັບເປັນພວກໆ

໑໐. ບໍ່ຈັບຕາມຄວາມເຫັນ

ການຈັບສລາກບໍ່ເປັນສັມມ໌ ໑໐ ຢ່າງ ເຫຼົ່ານີ້ ໆ

ການຈັບສລາກເປັນສັມມ໌ ໑໐ ຢ່າງ

[ຜ໑໓] ການຈັບສລາກເປັນສັມມ໌ ໑໐ ຢ່າງ ເປັນແບບໃດ ຄື:-

໑. ອທິກຣຓ໌ບໍ່ແມ່ນເຣື່ອງນ້ອຍ

໒. ລຸກລາມໄປໄກ

໓. ພິກຂຸພວກນັ້ນຣະລຶກໄດ້ ແລະພວກອື່ນກໍໃຫ້ຣະລຶກໄດ້

໔. ຮູ້ວ່າ ສັມມວາທີຫຼາຍກວ່າ

໕. ຮູ້ວ່າ ເປັນຫຍັງສັມມວາທີຈຶ່ງມີຫຼາຍກວ່າ

໖. ຮູ້ວ່າ ສົງຜ໌ຈະບໍ່ແຕກກັນ

໗. ຮູ້ວ່າ ເປັນຫຍັງສົງຜ໌ບໍ່ຄວຣແຕກກັນ

໘. ສັມມວາທີພິກຂຸຈັບໂດຍສັມມ໌

໙. ສັມມວາທີພິກຂຸພ້ອມພຽງກັນຈັບ

໑໐. ຈັບຕາມຄວາມເຫັນ

ການຈັບສລາກເປັນສັມມ໌ ໑໐ ຢ່າງ ເຫຼົ່ານີ້ ໆ

ສົງຜ໌ທຳຕັສສປາປີຍສິກາກັມມ໌

[ຜ໑໔] ສມັຍນັ້ນແລ ພຣະອຸປວາລຖືກຊັກຖາມເຖິງອາບັຕິ ໃນທ່າມກາງສົງຜ໌ ປຕິເສສແລ້ວປຕິຌາຓ ປຕິຌາຓແລ້ວປຕິເສສ ໃຫ້ການກັບໄປກັບມາ ກ່າວເທັຈທັ້ງຮູ້ຢູ່ ບັຣດາພິກຂຸທີ່ເປັນຜູ້ມັກນ້ອຍ ... ຕ່າງກໍເພ່ງໂທຜ ຕິຕຽນ ໂພນທະນາວ່າເປັນຫຍັງ ພຣະອຸປວາລຖືກຊັກຖາມເຖິງອາບັຕິໃນທ່າມກາງສົງຜ໌ ຈຶ່ງໄດ້ປຕິເສສແລ້ວປຕິຌາຓ ປຕິຌາຓ ແລ້ວປຕິເສສ ໃຫ້ການກັບໄປກັບມາ ກ່າວເທັຈທັ້ງຮູ້ຢູ່ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄໆ ທຣົງສອບຖາມພິກຂຸທັ້ງຫຼາຍວ່າ ດູຣາພິກຂຸທັ້ງຫຼາຍ ຂ່າວວ່າ ພິກຂຸອຸປວາລຖືກຊັກຖາມເຖິງອາບັຕິໃນທ່າມກາງສົງຜ໌ ປຕິເສສແລ້ວປຕິຌາຓ ປຕິຌາຓ ແລ້ວປຕິເສສ ໃຫ້ການກັບໄປກັບມາ ກ່າວເທັຈທັ້ງຮູ້ຢູ່ ແທ້ບໍ່

ພິກຂຸທັ້ງຫຼາຍຂາບທູລວ່າ ແທ້ ຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທຮເຈົ້າທຮົງຕິຕຽນ ... ຄັ້ນແລ້ວທຮົງທຳທັມມີກະຖາຮັບສັ່ງກັບກິກຂຸທັ້ງຫຼາຍວ່າ ດູຮາກິກຂຸທັ້ງຫຼາຍ ເພາະເຫຕຸນັ້ນແລ ສົງຆ໌ຈົງທຳຕັສສປາປິຍສິກາກັມມ໌ ໑- ແກ່ກິກຂຸອຸປວາລ

ກໍແລ ສົງຆ໌ຄວຣເຮັດຢ່າງນີ້ ຄວຣໂຈທກິກຂຸອຸປວາລກ່ອນ ຄັ້ນແລ້ວຄວຣໃຫ້ທ່ານ ໃຫ້ກາຣ ແລ້ວຄວຣປັບອາບັຕິ ຄັ້ນແລ້ວກິກຂຸຜູ້ສລາດ ຜູ້ສາມາຖຄວຣປະກາສໃຫ້ສົງຆ໌ ຮູ້ ດ້ວຍຍັຕຕິຈຕຸຕຖກັມມວາຈາ ວ່າດັ່ງນີ້:-

ກັມມວາຈາທຳຕັສສປາປິຍສິກາກັມມ໌

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ກິກຂຸອຸປວາລນີ້ຖືກຊັກຖາມ ເຖິງອາບັຕິໃນທ່າມກາງສົງຆ໌ ປຕິເສຣແລ້ວປຕິຍານ ປຕິຍານແລ້ວປຕິເສຣ ໃຫ້ກາຣກັບໄປກັບມາ ກ່າວເທັຈທັ້ງຮູ້ຢູ່ ຖ້າຄວາມພ້ອມພັ່ງຂອງສົງຆ໌ ເຖິງທີ່ແລ້ວ ສົງຆ໌ຄວຣເຮັດຕັສສປາປິຍສິກາກັມມ໌ແກ່ກິກຂຸອຸປວາລ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ກິກຂຸອຸປວາລນີ້ຖືກຊັກຖາມເຖິງ ອາບັຕິໃນທ່າມກາງສົງຆ໌ ປຕິເສຣແລ້ວປຕິຍານ ປຕິຍານແລ້ວປຕິເສຣ ໃຫ້ກາຣກັບໄປກັບມາ ກ່າວເທັຈທັ້ງຮູ້ຢູ່ ສົງຆ໌ທຳຕັສສປາປິຍສິກາກັມມ໌ແກ່ກິກຂຸອຸປວາລ ກາຣທຳຕັສສປາປິຍສິກາກັມມ໌ແກ່ກິກຂຸອຸປວາລ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສາມ ...

ຕັສສປາປິຍສິກາກັມມ໌ອັນສົງຆ໌ທຳແລ້ວແກ່ກິກຂຸອຸປວາລ ຖືກແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້ ฯ

ຕັສສປາປິຍສິກາກັມມ໌ເປັນທັມມ໌ ໕ ຢ່າງ

[໖໑໕] ດູຮາກິກຂຸທັ້ງຫຼາຍ ກາຣທຳຕັສສປາປິຍສິກາກັມມ໌ເປັນທັມມ໌ ໕ ຢ່າງນີ້ ຄື:-

໑. ກິກຂຸເປັນຜູ້ບໍ່ສະອາດ

໒. ເປັນອລັຊຊີ

໓. ເປັນຜູ້ຖືກໂຈທ

໔. ສົງຆ໌ທຳຕັສສປາປິຍສິກາກັມມ໌ແກ່ທ່ານ

໕. ສົງຆ໌ພ້ອມພຽງກັນທຳໂດຍທັມມ໌

ດູຮາກິກຂຸທັ້ງຫຼາຍ ກາຣທຳຕັສສປາປິຍສິກາກັມມ໌ເປັນທັມມ໌ ໕ ຢ່າງນີ້ແລ ฯ

ລັກษณะກັມມ໌ບໍ່ເປັນສັມມ໌ ໑໔ ໝວດ

ໝວດທີ່ ໑

[໓໑໓] ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳລັບຫລັງ ໑ ບໍ່ສອບຖາມກ່ອນແລ້ວທຳ ໑ ທຳບໍ່ຕາມປຕິຍາຓ ໑

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ນີ້ແລ ເປັນກັມມ໌ບໍ່ເປັນສັມມ໌ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ

ໝວດທີ່ ໔

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳເພາະບໍ່ຕ້ອງອາບັຕິ ໑ ທຳເພາະອາບັຕິບໍ່ແມ່ນເປັນເທສນາຄາມີນີ ໑ ທຳເພາະອາບັຕິທີ່ສແດງແລ້ວ ໑

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໓

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ບໍ່ໂຈທກ່ອນແລ້ວ ທຳ ໑ ບໍ່ໃຫ້ຈຳເລີຍໃຫ້ການກ່ອນແລ້ວທຳ ໑ ບໍ່ປັບອາບັຕິແລ້ວທຳ ໑

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໔

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳລັບຫລັງ ໑ ທຳ ໂດຍບໍ່ເປັນສັມມ໌ ໑ ສົງฆ໌ເປັນວັຄທຳ ໑

ດູຣາຫີກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໕

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນ ຂັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ບໍ່ສອບຖາມກ່ອນ ແລ້ວທຳ ໑ ທຳໂດຍບໍ່ເປັນຂັມມ໌ ໑ ສົງຂ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໖

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນ ຂັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳບໍ່ຕາມປຕິນາຓ ໑ ທຳໂດຍບໍ່ເປັນຂັມມ໌ ໑ ສົງຂ໌ເປັນ ວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໗

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນ ຂັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳເພາະບໍ່ຕ້ອງອາບັຕິ ໑ ທຳໂດຍບໍ່ເປັນຂັມມ໌ ໑ ສົງຂ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໘

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນ ຂັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳເພາະອາບັຕິບໍ່ແມ່ນເປັນເທສນາຄາມີນີ ໑ ທຳໂດຍບໍ່ ເປັນຂັມມ໌ ໑ ສົງຂ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໙

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນ ຂັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ທຳເພາະອາບັຕິທີ່ ສແດງແລ້ວ ໑ ທຳໂດຍບໍ່ເປັນຂັມມ໌ ໑ ສົງຂ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສິກາກັມມ໌ ...

ໝວດທີ່ ໑໐

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ບໍ່ໂຈທກ່ອນແລ້ວ ທຳ ໑ ທຳໂດຍບໍ່ເປັນສັມມ໌ ໑ ສົງຄ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ ...

ໝວດທີ່ ໑໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ບໍ່ໃຫ້ຈຳເລີຍໃຫ້ການ ກ່ອນແລ້ວທຳ ໑ ທຳໂດຍບໍ່ເປັນສັມມ໌ ໑ ສົງຄ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ ...

ໝວດທີ່ ໑໘

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຄື ບໍ່ປັບອາບັຕິກ່ອນ ແລ້ວທຳ ໑ ທຳໂດຍບໍ່ເປັນສັມມ໌ ໑ ສົງຄ໌ເປັນວັຄທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ນີ້ແລ ເປັນກັມມ໌ບໍ່ເປັນສັມມ໌ ບໍ່ເປັນວິນັຍ ແລະຣະງັບແລ້ວບໍ່ດີ ຯ

ລັກຂຓະກັມມ໌ບໍ່ເປັນສັມມ໌ ໑໘ ໝວດ ຈົບ

ລັກຂຓະກັມມ໌ເປັນສັມມ໌ ໑໘ ໝວດ

ໝວດທີ່ ໑

[໖໑໗] ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳຕໍ່ໜ້າ ໑ ສອບຖາມກ່ອນ ແລ້ວທຳ ໑ ທຳຕາມປຕິຍາຓ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປີຍສີກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ນີ້ແລ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ

ໝວດທີ່ ໘

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳເພາະຕ້ອງອາບັຕິ ໑ ທຳ ເພາະອາບັຕິເປັນເທສນາຄາມິນີ ໑ ທຳເພາະອາບັຕິຍັງບໍ່ໄດ້ສແດງ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໝວດທີ່ ໓

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ໂຈທກ່ອນແລ້ວທຳ ໑ ໃຫ້ຈຳເລີຍ ໃຫ້ກາຣກ່ອນແລ້ວທຳ ໑ ປັບອາບັຕິແລ້ວທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໝວດທີ່ ໔

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳຕໍ່ໜ້າ ໑ ທຳໂດຍສັມມ໌ ໑ ສົງຄ໌ພ້ອມພຽງກັນທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໝວດທີ່ ໕

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ສອບຖາມກ່ອນແລ້ວທຳ ໑ ທຳ ໂດຍສັມມ໌ ໑ ສົງຄ໌ພ້ອມພຽງກັນທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໝວດທີ່ ໖

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳຕາມປຕິຍາຕ ໑ ທຳໂດຍ ສັມມ໌ ໑ ສົງຄ໌ພ້ອມພຽງກັນທຳ ໑

ດູຣາພິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໜມວດທີ່ ៧

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳເພາະຕ້ອງອາບັຕິ ໑ ທຳ ໂດຍສັມມ໌ ໑ ສົງຆ໌ພ້ອມພຽງກັນທຳ ໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໜມວດທີ່ ໘

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳເພາະອາບັຕິເປັນເທສນາຄາມິນີ ໑ ທຳໂດຍສັມມ໌ ໑ ສົງຆ໌ພ້ອມພຽງກັນທຳ ໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໜມວດທີ່ ໙

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ທຳເພາະອາບັຕິຍັງບໍ່ໄດ້ສແດງ ໑ ທຳໂດຍສັມມ໌ ໑ ສົງຆ໌ພ້ອມພຽງກັນທຳ ໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໜມວດທີ່ ໑໐

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ໂຈທກ່ອນແລ້ວທຳ ໑ ທຳໂດຍ ສັມມ໌ ໑ ສົງຆ໌ພ້ອມພຽງກັນທຳ ໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໜມວດທີ່ ໑໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ໃຫ້ຈຳເລີຍໃຫ້ການກ່ອນແລ້ວທຳ ໑ ທຳໂດຍສັມມ໌ ໑ ສົງຆ໌ພ້ອມພຽງກັນທຳ ໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ ...

ໝວດທີ່ ໑໔

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ຄື ປັບອາບັຕິກ່ອນແລ້ວທຳ ໑ ທຳໂດຍສັມມ໌ ໑ ສົງຄ໌ພ້ອມພຽງກັນທຳ ໑

ດູຣາກິກຂຸທັ້ງຫຼາຍ ຕັສສປາປິຍສິກາກັມມ໌ທີ່ປະກອບດ້ວຍອົງຄ໌ ໓ ນີ້ແລ ເປັນກັມມ໌ເປັນສັມມ໌ ເປັນວິນັຍ ແລະຣະງັບດີແລ້ວ ฯ

ລັກษณะກັມມ໌ເປັນສັມມ໌ ໑໔ ໝວດ ຈົບ

ຂໍ້ທີ່ສົງຄ໌ຈຳນົງ ๖ ໝວດ

ໝວດທີ່ ໑

[໖໑໙] ດູຣາກິກຂຸທັ້ງຫຼາຍ ກິກຂຸປະກອບດ້ວຍອົງຄ໌ ໓ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ ຄື ເປັນຜູ້ກໍ່ຄວາມບາດໝາງ ກໍ່ການທະເລາະ ກໍ່ການ ວິວາທ ທຳຄວາມອື້ສາວ ກໍ່ອະທິກຣณ໌ໃນສົງຄ໌ ໑ ເປັນພາລ ບໍ່ສລາດ ມີອາບັຕິຫຼາຍ ມີມັຣຍາທບໍ່ສົມຄວຣ ໑ ເປັນຜູ້ມົ້ວສຸມກັບຄຣິຫັສຖ໌ ດ້ວຍການມົ້ວສຸມອັນບໍ່ສົມຄວຣ ໑

ດູຣາກິກຂຸທັ້ງຫຼາຍ ກິກຂຸປະກອບດ້ວຍອົງຄ໌ ໓ ນີ້ແລ ເມື່ອສົງຄ໌ຈຳນົງຄວຣເຮັດ ຕັສສປາປິຍສິກາກັມມ໌ ฯ

ໝວດທີ່ ໒

[໖໑໗] ດູຣາກິກຂຸທັ້ງຫຼາຍ ກິກຂຸປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເມື່ອສົງຄ໌ຈຳນົງຄວຣເຮັດ ຕັສສປາປິຍສິກາກັມມ໌ ຄື ເປັນຜູ້ມີສີລວິບັຕິໃນອະທິສີລ ໑ ເປັນຜູ້ມີອາຈາຣວິບັຕິໃນອັຊຍາຈາຣ ໑ ເປັນຜູ້ມີທິຖິວິບັຕິໃນອະຕິທິຖິ ໑

ດູຣາກິກຂຸທັ້ງຫຼາຍ ກິກຂຸປະກອບດ້ວຍອົງຄ໌ ໓ ນີ້ແລ ເມື່ອສົງຄ໌ຈຳນົງຄວຣເຮັດ ຕັສສປາປິຍ-ສິກາກັມມ໌ ฯ

ໝວດທີ່ ໓

[໖໔໐] ດູຣາກິກຂຸທັ້ງຫຼາຍ ກິກຂຸປະກອບດ້ວຍອົງຄ໌ ໓ ແມ້ອື່ນອີກ ເມື່ອ ສົງຄ໌ຈຳນົງຄວຣເຮັດ ຕັສສປາປິຍສິກາກັມມ໌ ຄື ກ່າວຕິຕຽນພຣະພຸທສເຈົ້າ ໑ ກ່າວຕິຕຽນພຣະສັມມ໌ ໑ ກ່າວຕິຕຽນພຣະສົງຄ໌ ໑

ດູຣາກິກຂຸທັ້ງຫຼາຍ ກິກຂຸປະກອບດ້ວຍອົງຄ໌ ໓ ນີ້ແລ ເມື່ອສົງຄ໌ຈຳນົງຄວຣເຮັດ ຕັສສປາປິຍ-ສິກາກັມມ໌ ฯ

ໝວດທີ່ ໔

[໗໘໑] ດູຣາພິກຂຸທັ້ງຫຼາຍ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ ແກ່ພິກຂຸ ໓ ອົງຄ໌ ຄື ອົງຄ໌ນຶ່ງເປັນຜູ້ກໍ່ຄວາມບາດໝາງ ກໍ່ການທະເລາະ ກໍ່ການວິວາທ ທຳຄວາມອື້ອາວ ກໍ່ອະທິກຣຕ໌ໃນສົງຄ໌ ອົງຄ໌ນຶ່ງເປັນພາລ ບໍ່ຮລາດ ມີອາບັຕິຫຼາຍ ມີ ມັຣຍາທບໍ່ສົມຄວຣ ອົງຄ໌ນຶ່ງມົ້ວສຸມກັບຄຣືຫັສຖ໌ດ້ວຍການ ມົ້ວສຸມອັນບໍ່ສົມຄວຣ

ດູຣາພິກຂຸທັ້ງຫຼາຍ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ ແກ່ພິກຂຸ ໓ ອົງຄ໌ນີ້ແລ ຯ

ໝວດທີ່ ໕

[໗໘໒] ດູຣາພິກຂຸທັ້ງຫຼາຍ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ ແກ່ພິກຂຸ ໓ ອົງຄ໌ ແມ້ ອື່ນອີກ ຄື ອົງຄ໌ນຶ່ງເປັນຜູ້ມີສີລວິບັຕິໃນອະທິສີລ ອົງຄ໌ນຶ່ງເປັນຜູ້ມີ ອາຈາຣວິບັຕິໃນອັຊຍາຈາຣ ອົງຄ໌ນຶ່ງເປັນຜູ້ມີ ທິຖິວິບັຕິໃນອະຕິທິຖິ

ດູຣາພິກຂຸທັ້ງຫຼາຍ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ ແກ່ພິກຂຸ ໓ ອົງຄ໌ນີ້ແລ ຯ

ໝວດທີ່ ໖

[໗໘໓] ດູຣາພິກຂຸທັ້ງຫຼາຍ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ແກ່ພິກຂຸ ໓ ອົງຄ໌ ແມ້ ອື່ນອີກ ຄື ອົງຄ໌ນຶ່ງກ່າວຕິຕຽນພຣະພຸທສເຈົ້າ ອົງຄ໌ນຶ່ງກ່າວຕິຕຽນພຣະທັມມ໌ ອົງຄ໌ນຶ່ງກ່າວຕິຕຽນພຣະສົງຄ໌

ດູຣາພິກຂຸທັ້ງຫຼາຍ ເມື່ອສົງຄ໌ຈຳນົງຄວຣເຮັດຕັສສປາປິຍສິກາກັມມ໌ແກ່ພິກຂຸ ໓ ອົງຄ໌ ນີ້ແລ ຯ

ຂໍ້ທີ່ສົງຄ໌ຈຳນົງ ໖ ໝວດ ຈົບ

ວັຕຣ໌ ໑໘ ຂໍ້

[໗໘໔] ດູຣາພິກຂຸທັ້ງຫຼາຍ ພິກຂຸທີ່ຖືກສົງຄ໌ທຳຕັສສປາປິຍສິກາກັມມ໌ແລ້ວນັ້ນ ຕ້ອງປະພຶຕຊອບ ວິທີປະພຶຕຊອບໃນຕັສສປາປິຍສິກາກັມມ໌ນັ້ນ ດັ່ງຕໍ່ໄປນີ້:-

໑. ບໍ່ຄວຣໃຫ້ອຸປສົມບົທ

໒. ບໍ່ຄວຣໃຫ້ນິສັຍ

໓. ບໍ່ຄວຣໃຫ້ສາມເຫຣອຸປັຕຖາກ

໔. ບໍ່ຄວຣຮັບສົມມຸຕິເປັນຜູ້ສັ່ງສອນພິກຂຸຕີ

໕. ແມ້ໄດ້ຮັບສົມມຸຕິໄວ້ແລ້ວ ກໍບໍ່ຄວຣສັ່ງສອນພິກຂຸນີ
໖. ສົງຄ໌ທຳຕັສສປາປິຍສິກາກັມມ໌ເພາະອາບັຕິໃດ ບໍ່ຄວຣຕ້ອງອາບັຕິນັ້ນ
໗. ບໍ່ຄວຣຕ້ອງອາບັຕິອື່ນອັນເຊັ່ນກັນ
໘. ບໍ່ຄວຣຕ້ອງອາບັຕິອັນຊົ່ວຊ້າກວ່ານັ້ນ
໙. ບໍ່ຄວຣຕິກັມມ໌
໑໐. ບໍ່ຄວຣຕິພິກຂຸທັ້ງຫຼາຍຜູ້ທຳກັມມ໌
໑໑. ບໍ່ຄວຣຫ້າມອຸໂບສົຖແກ່ປກັຕັຕຕະພິກຂຸ
໑໒. ບໍ່ຄວຣຫ້າມປວາຣຕາແກ່ປກັຕັຕຕະພິກຂຸ
໑໓. ບໍ່ຄວຣທຳການໄຕ່ສວນ
໑໔. ບໍ່ຄວຣເຣີ່ມອນຸວາທາທິກຣຕ໌
໑໕. ບໍ່ຄວຣໃຫ້ພິກຂຸອື່ນທຳໂອກາສ
໑໖. ບໍ່ຄວຣໂຈທພິກຂຸອື່ນ
໑໗. ບໍ່ຄວຣໃຫ້ພິກຂຸອື່ນໃຫ້ການ
໑໘. ບໍ່ຄວຣຊ່ອຍພິກຂຸກັບພິກຂຸໃຫ້ສູ້ກັນໃນອທິກຣຕ໌

ຍາມນັ້ນ ສົງຄ໌ໄດ້ທຳຕັສສປາປິຍສິກາກັມມ໌ແກ່ພຣະອຸປວາຄແລ້ວ ໆ

ພິກຂຸກໍ່ການວຸ່ນວາຍ

[໖໘໕] ສມັຍນັ້ນແລ ພິກຂຸທັ້ງຫຼາຍເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ສົມຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວ ດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຄັ້ງນັ້ນ ພວກທ່ານຄຶດວ່າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຕະ ຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນ ດ້ວຍອາບັຕິເຫຼົ່ານີ້ ບາງທີອທິກຣຕ໌ນັ້ນ ຈະຄວຣເປັນໄປເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ພວກເຮົາຈະຄວຣປຕິບັຕິແນວໃດນໍ ແລ້ວຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ

ພຸທສານຸຍາຕໃຫ້ຣະງັບອທິກຣຕ໌ດ້ວຍຕິຕວັຕຖາຣກະ

ພຣະຜູ້ມີພຣະພາຄຮັບສັ່ງກັບພິກຂຸທັ້ງຫຼາຍ ວ່າດັ່ງນີ້:-

[໖໘໖] ດູຣາພິກຂຸທັ້ງຫຼາຍ ກໍພວກພິກຂຸໃນທັມມ໌ວິນັຍນີ້ ເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍ

ວາຈາແລະພຍາຍາມທຳດ້ວຍກາຍ ຖ້າພວກທ່ານໃນໝູ່ນັ້ນຄຶດຢ່າງນີ້ ວ່າ ພວກເຮົາເກີດ ຄວາມບາດໝາງ ເກີດ ຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວ ດ້ວຍວາຈາແລະພຍາຍາມທຳດ້ວຍ ກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຓ໌ນັ້ນຈະຄວຣ ເປັນໄປເພື່ອຄວາມ ຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕ ໃຫ້ຣະງັບອະທິກຣຓ໌ເຫັນປານນັ້ນ ດ້ວຍຕິຓວັຕຖາຣກະ ໗

ວິທີຣະງັບ

[໖໘໗] ດູຣາພິກຂຸທັ້ງຫຼາຍ ກໍແລ ສົງຄ໌ຄວຣຣະງັບຢ່າງນີ້:-

ພິກຂຸທຸກໆ ອົງຄ໌ຄວຣປະຊຸມໃນທີ່ແຫ່ງດຽວກັນ ຄັ້ນແລ້ວພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ ສົງຄ໌ຮູ້ດ້ວຍຌັຕຕິກັມມວາຈາ ວ່າດັ່ງນີ້:-

ຌັຕຕິກັມມວາຈາຣະງັບອະທິກຣຓ໌ດ້ວຍຕິຓວັຕຖາຣກະ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າ ພວກເຮົາຈະໃຫ້ປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຓ໌ນັ້ນຈະຄວຣ ເປັນໄປ ເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງ ສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣຣະງັບອະທິກຣຓ໌ນີ້ດ້ວຍຕິຓວັຕຖາຣກະ ເວັ້ນອາບັຕິທີ່ມີໂທษໜັກ ເວັ້ນອາບັຕິເນື່ອງ ດ້ວຍຄຣິຫັສຖ໌

ບັຣດາພິກຂຸຝ່າຍດຽວກັນ ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ຝ່າຍຂອງ ຕົນຮູ້ດ້ວຍຄຓະ ຌັຕຕິກັມມວາຈາ ວ່າດັ່ງນີ້:-

ຄຓະຌັຕຕິກັມມວາຈາ

ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງ ຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະ ພຍາຍາມທຳດ້ວຍກາຍ ຖ້າ ພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຓ໌ນັ້ນຈະຄວຣເປັນໄປ ເພື່ອ ຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງທ່ານ ທັ້ງຫຼາຍເຖິງທີ່ແລ້ວ ຂ້າພເຈົ້າຄວຣສແດງອາບັຕິຂອງທ່ານທັ້ງຫຼາຍ ແລະອາບັຕິຂອງຕົນໃນທ່າມກາງ

ສົງຄ໌ດ້ວຍຕິຓວັຕຖາຣກະ ເວັ້ນ ອາບັຕິທີ່ມີໂທษໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານທັ້ງຫຼາຍ ແລະເພື່ອປະໂຍຊນ໌ແກ່ຕົນ ໆ

[໖໔໗] ລຳດັບນັ້ນ ບັຣດາພິກຂຸຝ່າຍດຽວກັນອີກພວກນຶ່ງ ພິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສໃຫ້ຝ່າຍຂອງຕົນຮູ້ດ້ວຍຄຓະລັຕຕິກັມມວາຈາ ວ່າດັ່ງນີ້:-

ຄຓະລັຕຕິກັມມວາຈາ

ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຖ້າ ພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຓ໌ນັ້ນຈະຄວຣເປັນໄປເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ຂ້າພເຈົ້າຄວຣສແດງອາບັຕິຂອງທ່ານທັ້ງຫຼາຍ ແລະອາບັຕິຂອງຕົນ ໃນທ່າມກາງສົງຄ໌ດ້ວຍຕິຓວັຕຖາຣກະ ເວັ້ນ ອາບັຕິທີ່ມີໂທษໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານທັ້ງຫຼາຍ ແລະເພື່ອປະໂຍຊນ໌ແກ່ຕົນ ໆ

[໖໔໘] ບັຣດາພິກຂຸຝ່າຍດຽວກັນ ພິກຂຸຜູ້ฉລາດ ຜູ້ສາມາຖ ຄວຣປະກາສ ໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ລັຕຕິທຸຕິຍກັມມວາຈາ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຖ້າ ພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຓ໌ນັ້ນຈະຄວຣເປັນໄປເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວຂ້າພເຈົ້າຄວຣສແດງອາບັຕິຂອງທ່ານເຫຼົ່ານີ້ ແລະອາບັຕິຂອງຕົນ ໃນທ່າມກາງສົງຄ໌ດ້ວຍຕິຓວັຕຖາຣກະເວັ້ນອາບັຕິທີ່ມີ ໂທษໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານເຫຼົ່ານີ້ ແລະເພື່ອປະໂຍຊນ໌ແກ່ຕົນ ນີ້ເປັນລັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະ

ພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກອນນັ້ນຈະຄວນເປັນໄປເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຂ້າພເຈົ້າ ສແດງອາບັຕິຂອງທ່ານເຫຼົ່ານີ້ ແລະອາບັຕິຂອງຕົນ ໃນທ່າມກາງສົງຄ໌ດ້ວຍ ຕິຕວັຕຖາຣກະ ເວັ້ນອາບັຕິທີ່ມີໂທສໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານເຫຼົ່ານີ້ ແລະເພື່ອປະໂຍຊນ໌ແກ່ຕົນ ການສແດງອາບັຕິເຫຼົ່ານີ້ຂອງພວກເຮົາ ໃນທ່າມກາງສົງຄ໌ດ້ວຍຕິຕວັຕຖາຣກະ ເວັ້ນ ອາບັຕິທີ່ມີໂທສໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ອາບັຕິເຫຼົ່ານີ້ຂອງພວກເຮົາເວັ້ນອາບັຕິທີ່ມີໂທສໜັກ ເວັ້ນອາບັຕິ ເນື່ອງດ້ວຍຄຣິຫັສຖ໌ ຂ້າພເຈົ້າສແດງແລ້ວໃນທ່າມກາງສົງຄ໌ດ້ວຍຕິຕວັຕຖາຣກະ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້ ໆ

[໖໓໐] ລຳດັບນັ້ນ ບັຣດາພິກຂຸຝ່າຍດຽວກັນອີກພວກນຶ່ງ ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ຍັຕຕິທຸຕິຍກັມມວາຈາ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຖ້າ ພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກອນນັ້ນຈະຄວຣເປັນໄປເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ຂ້າພເຈົ້າຄວຣສແດງອາບັຕິຂອງທ່ານເຫຼົ່ານີ້ ແລະອາບັຕິຂອງຕົນໃນທ່າມກາງສົງຄ໌ດ້ວຍຕິຕວັຕຖາຣກະ ເວັ້ນອາບັຕິທີ່ມີ ໂທສໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານເຫຼົ່ານີ້ ແລະເພື່ອປະໂຍຊນ໌ແກ່ຕົນ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຖ້າ ພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກອນນັ້ນຈະຄວຣເປັນໄປເພື່ອ ຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຂ້າພເຈົ້າ ສແດງອາບັຕິຂອງທ່ານເຫຼົ່ານີ້ ແລະອາບັຕິຂອງຕົນໃນທ່າມກາງສົງຄ໌ ດ້ວຍ ຕິຕວັຕຖາຣກະ ເວັ້ນອາບັຕິທີ່ມີໂທສໜັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານເຫຼົ່ານີ້ ແລະເພື່ອປະໂຍຊນ໌ແກ່ຕົນ ການສແດງ

ອາບັຕິເຫຼົ່ານີ້ຂອງພວກເຮົາໃນທ່າມກາງສົງຄ໌ດ້ວຍຕິດວັຕຖາຣກະ ເວັ້ນອາບັຕິ ທີ່ມີໂທษຫນັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ຖືກແກ່ທ່ານຜູ້ໃດ ທ່ານຜູ້ ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ອາບັຕິເຫຼົ່ານີ້ຂອງພວກເຮົາ ເວັ້ນອາບັຕິທີ່ມີໂທษຫນັກ ເວັ້ນອາບັຕິ ເນື່ອງດ້ວຍຄຣິຫັສຖ໌ ຂ້າພເຈົ້າສແດງແລ້ວໃນທ່າມກາງສົງຄ໌ດ້ວຍຕິດວັຕຖາຣກະ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້ ฯ

[໖໓໑] ດູຣາກິກຂຸທັ້ງຫຼາຍ ກໍແລ ດ້ວຍອາການຢ່າງນີ້ ກິກຂຸເຫຼົ່ານັ້ນເປັນຜູ້ອອກແລ້ວຈາກອາບັຕິເຫຼົ່ານັ້ນ ເວັ້ນອາບັຕິທີ່ມີໂທษຫນັກ ເວັ້ນອາບັຕິເນື່ອງດ້ວຍຄຣິຫັສຖ໌ ເວັ້ນຜູ້ສແດງຄວາມເຫັນແຍ້ງ ເວັ້ນຜູ້ບໍ່ໄດ້ຢູ່ໃນທີ່ນັ້ນ ฯ

ອະທິກຣຕ໌

[໖໓໔] ໂດຍສມັຍນັ້ນແລ ພວກກິກຂຸວິວາທກັບພວກກິກຂຸຕີແດ່ ພວກກິກຂຸຕີ ວິວາທກັບພວກກິກຂຸແດ່ ຝ່າຍພຣະຈັນນະເຂົ້າແຊກແຊງພວກກິກຂຸຕີ ແລ້ວວິວາທກັບ ພວກກິກຂຸ ໃຫ້ຖືຝ່າຍກິກຂຸຕີ ບັຣດາກິກຂຸທີ່ເປັນຜູ້ມັກນ້ອຍ...ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະຈັນນະຈຶ່ງໄດ້ເຂົ້າແຊກແຊງພວກກິກຂຸຕີແລ້ວວິວາທກັບພວກກິກຂຸ ໃຫ້ຖືຝ່າຍກິກຂຸຕີລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄທຣົງສອບຖາມ ກິກຂຸທັ້ງຫຼາຍວ່າ ຂ່າວວ່າ ກິກຂຸຈັນນະເຂົ້າແຊກແຊງພວກກິກຂຸຕີ ແລ້ວວິວາທກັບພວກກິກຂຸໃຫ້ຖືຝ່າຍກິກຂຸຕີ ແທ້ບໍ່

ກິກຂຸທັ້ງຫຼາຍຂາບທູລວ່າ ແທ້ ຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນ ... ຄັ້ນແລ້ວທຣົງທຳສັມມີກຖາຮັບສັ່ງ ກັບກິກຂຸທັ້ງຫຼາຍວ່າ ດູຣາກິກຂຸທັ້ງຫຼາຍ ອະທິກຣຕ໌ ໔ ນີ້ ຄື ວິວາທາທິກຣຕ໌ ອນຸວາທາທິກຣຕ໌ ອາປັຕຕາທິກຣຕ໌ ກິຈຈາທິກຣຕ໌ ฯ

ອະທິກຣຕ໌ ໔ ຢ່າງ

໑. ວິວາທາທິກຣຕ໌

[໖໓໕] ໃນອະທິກຣຕ໌ ໔ ຢ່າງນັ້ນ ວິວາທາທິກຣຕ໌ ເປັນແບບໃດ ດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນທັມມ໌ວິນັຍນີ້ ຍ່ອມວິວາທກັນວ່າ

໑. ນີ້ເປັນທັມມ໌ ນີ້ບໍ່ເປັນທັມມ໌

໒. ນີ້ເປັນວິນັຍ ນີ້ບໍ່ເປັນວິນັຍ

໓. ນີ້ພຣະຕຖາຄົຕເຈົ້າຕຣັສກາບົຕໄວ້ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ຕຣັສກາບົຕໄວ້

໔. ນີ້ພຣະຕຖາຄົຕເຈົ້າທຣົງປະພຶຕມາ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ທຣົງປະພຶຕມາ

໕. ນີ້ພຣະຕຖາຄົຕເຈົ້າທຣົງບັນລັດຕິໄວ້ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ທຣົງບັນລັດຕິໄວ້

໖. ນີ້ເປັນອາບັຕິ ນີ້ບໍ່ເປັນອາບັຕິ

໗. ນີ້ເປັນອາບັຕິເບົາ ນີ້ເປັນອາບັຕິໜັກ

໘. ນີ້ເປັນອາບັຕິມີສ່ວນເຫລືອ ນີ້ເປັນອາບັຕິຫາສ່ວນເຫລືອບໍ່ໄດ້

໙. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຄວາມບາດໝາງ ຄວາມທະເລາະ ຄວາມແກ່ງແຍ່ງ ຄວາມທິກຖຽງ ຄວາມກ່າວຕ່າງກັນ ຄວາມກ່າວປະກາຣອື່ນ ກາຣເວົ້າເພື່ອຄວາມກລັດກລຸ້ມໃຈ ຄວາມໝາຍມັ່ນ ໃນເຣື່ອງນັ້ນອັນໃດ ນີ້ເອີ້ນວ່າວິວາທາທິກຣຕ໌ ฯ

໒. ອນຸວາທາທິກຣຕ໌

[໖໓໔] ໃນອທິກຣຕ໌ ໔ ຢ່າງນັ້ນ ອນຸວາທາທິກຣຕ໌ ເປັນແບບໃດ ດູຣາພິກຂຸ ທັ້ງຫຼາຍ ອີກຢ່າງພິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ຍ່ອມໂຈທພິກຂຸດ້ວຍສີລວິບັຕິ ອາຈາຣວິບັຕິ ທິຖິວິບັຕິ ຫຼືອາຊີວວິບັຕິ ກາຣໂຈທ ກາຣກ່າວຫາ ກາຣຟ້ອງຮ້ອງ ກາຣປະທ້ວງ ຄວາມເປັນຜູ້ຄ້ອຍຕາມ ກາຣທຳຄວາມອຸຕສາຫະໂຈທກ໌ ກາຣຕາມເພີ່ມກຳລັງໃຫ້ ໃນເຣື່ອງ ນັ້ນອັນໃດ ນີ້ເອີ້ນວ່າອນຸວາທາທິກຣຕ໌ ฯ

໓. ອາປັຕຕາທິກຣຕ໌

[໖໓໕] ໃນອທິກຣຕ໌ ໔ ຢ່າງນັ້ນ ອາປັຕຕາທິກຣຕ໌ ເປັນແບບໃດ ອາບັຕິທັ້ງ ໕ ກອງ ຊື່ອາປັຕຕາທິກຣຕ໌ ອາບັຕິທັ້ງ ໗ ກອງ ຊື່ອາປັຕຕາທິກຣຕ໌ ນີ້ເອີ້ນວ່າ ອາປັຕຕາທິກຣຕ໌ ฯ

໔. ກິຈຈາທິກຣຕ໌

[໖໓໖] ໃນອທິກຣຕ໌ ໔ ຢ່າງນັ້ນ ກິຈຈາທິກຣຕ໌ ເປັນແບບໃດ ຄວາມເປັນ ໜ້າທີ່ ຄວາມເປັນກຣຕີຍ໌ແຫ່ງສົງຂ໌ອັນໃດ ຄື ອປໂລກນກັມມ໌ ລັຕຕິກັມມ໌ ລັຕຕິທຸຕິຍກັມມ໌ ລັຕຕິຈຕຸຕຖກັມມ໌ ນີ້ເອີ້ນວ່າກິຈຈາທິກຣຕ໌ ฯ

ອທິກຣຕ໌ ໔ ຢ່າງ ຈົບ

ມູລແຫ່ງວິວາທາທິກຣຕ໌

[໖໘໗] ແມ່ນຫຍັງເປັນມູລແຫ່ງວິວາທາທິກຣຕ໌ ຮາກແຫ່ງການຖຽງກັນ ໖ ຢ່າງ ເປັນມູລແຫ່ງວິວາທາທິກຣຕ໌ ຮາກແຫ່ງອກຸສົລທັ້ງ ໓ ເປັນມູລແຫ່ງວິວາທາທິກຣຕ໌ ຮາກແຫ່ງກຸສົລທັ້ງ ໓ ເປັນມູລແຫ່ງວິວາທາທິກຣຕ໌

ຮາກແຫ່ງການຖຽງກັນ ໖ ຢ່າງ ເປັນມູລແຫ່ງວິວາທາທິກຣຕ໌ ເປັນແບບໃດ

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸໃນສົມມ໌ວິນັຍນີ້ເປັນຜູ້ມັກໂກຼຣ ເປັນຜູ້ຖືໂກຼຣ ພິກຂຸທີ່ມັກໂກຼຣຖືໂກຼຣນັ້ນ ຍ່ອມບໍ່ມີຄວາມເຄາຣົພນັບຖືໃນພຣະສາສດາ ໃນພຣະສົມມ໌ ໃນພຣະສົງຄ໌ຢູ່ ຍ່ອມບໍ່ທຳໃຫ້ບໍຣິບູຣຕ໌ ແມ້ໃນສິກຂາ ພິກຂຸທີ່ບໍ່ມີຄວາມເຄາຣົພນັບຖື ໃນພຣະສາສດາ ໃນພຣະສົມມ໌ ໃນພຣະສົງຄ໌ ແມ້ໃນສິກຂາກໍບໍ່ທຳ ໃຫ້ບໍຣິບູຣຕ໌ນັ້ນ ຍ່ອມຍັງວິວາທໃຫ້ເກີດໃນສົງຄ໌ ການວິວາທຍ່ອມເປັນໄປເພື່ອຄວາມບໍ່ເກື້ອກູລແກ່ຊົນຫຼາຍ ເພື່ອບໍ່ເປັນສຸຂແກ່ຊົນຫຼາຍ ເພື່ອຄວາມພິນາສແກ່ຊົນຫຼາຍ ເພື່ອຄວາມ ບໍ່ເກື້ອກູລເພື່ອທຸກຂ໌ແກ່ເທພຍດາແລະມນຸษຍ໌ ດູຣາພິກຂຸທັ້ງຫຼາຍ ຖ້າພວກທ່ານເລັງເຫັນ ຮາກແຫ່ງການຖຽງກັນເຫັນປານນີ້ ທັ້ງກາຍໃນແລະກາຍນອກໄດ້ ພວກທ່ານໃນບໍຣິษັທນັ້ນ ຄວຣພຍາຍາມລະຮາກແຫ່ງການຖຽງກັນອັນລາມກນັ້ນແຫລະເສັຍ ຖ້າພວກທ່ານບໍ່ເລັງເຫັນ ຮາກແຫ່ງການຖຽງກັນເຫັນປານນີ້ ທັ້ງກາຍໃນແລະກາຍນອກ ພວກທ່ານໃນບໍຣິษັທນັ້ນຄວຣປຕິບັຕິເພື່ອຄວາມຍຶດຍາວໄປ ແຫ່ງຮາກແຫ່ງການຖຽງກັນອັນລາມກນັ້ນແຫລະ ຄວາມລະຮາກແຫ່ງການຖຽງກັນອັນລາມກນັ້ນ ຍ່ອມມີດ້ວຍຢ່າງນີ້ ຄວາມຍຶດເຍື້ອແຫ່ງຮາກແຫ່ງການ ຖຽງກັນອັນລາມກນັ້ນຍ່ອມມີຕໍ່ໄປດ້ວຍຢ່າງນີ້ ໆ

[໖໘໘] ດູຣາພິກຂຸທັ້ງຫຼາຍ ກໍຂໍ້ອື່ນຍັງມີອີກ ພິກຂຸເປັນຜູ້ລົບຫລູ່ຕິສເມີ ທ່ານ ...

ພິກຂຸເປັນຜູ້ມີປົກຕິອິສສາ ຂີ້ຖີ່ ...

ພິກຂຸເປັນຜູ້ອວດດີ ເຈົ້າມາຍາ ...

ພິກຂຸເປັນຜູ້ມີຄວາມປັຕຖນາລາມກ ມີຄວາມເຫັນຜິດ ...

ພິກຂຸເປັນຜູ້ຖືແຕ່ຄວາມເຫັນຂອງຕົນ ຖືຢ່າງແນ່ນແຟ້ນ ປົດໄດ້ຍາກ ພິກຂຸຜູ້ທີ່ຖືແຕ່ຄວາມເຫັນຂອງຕົນ ຖືຢ່າງແນ່ນແຟ້ນ ປົດໄດ້ຍາກນັ້ນ ຍ່ອມ ບໍ່ມີຄວາມເຄາຣົພ ນັບຖື ໃນພຣະສາສດາ ໃນພຣະສົມມ໌ ໃນພຣະສົງຄ໌ຢູ່ ຍ່ອມບໍ່ທຳໃຫ້ບໍຣິບູຣຕ໌ແມ້ໃນສິກຂາ ພິກຂຸຜູ້ບໍ່ມີຄວາມເຄາຣົພ ນັບຖື ໃນພຣະສາສດາ ໃນພຣະສົມມ໌ ໃນພຣະສົງຄ໌ຢູ່ ແມ້ໃນສິກຂາກໍບໍ່ທຳໃຫ້ບໍຣິບູຣຕ໌ນັ້ນ ຍ່ອມຍັງວິວາທໃຫ້ເກີດໃນສົງຄ໌ ການວິວາທຍ່ອມເປັນໄປເພື່ອຄວາມບໍ່ເກື້ອກູລແກ່ຊົນຫຼາຍ ເພື່ອບໍ່ເປັນສຸຂ ແກ່ຊົນຫຼາຍ ເພື່ອຄວາມພິນາສແກ່ຊົນຫຼາຍ ເພື່ອຄວາມບໍ່ເກື້ອກູລ ເພື່ອທຸກຂ໌ແກ່ເທພຍດາ ແລະມນຸษຍ໌ ດູຣາພິກຂຸທັ້ງຫຼາຍ ຖ້າພວກທ່ານເລັງເຫັນຮາກແຫ່ງການຖຽງກັນເຫັນປານນີ້ ທັ້ງກາຍໃນແລະກາຍນອກໄດ້ ພວກທ່ານໃນບໍຣິษັທນັ້ນຄວຣພຍາຍາມລະຮາກແຫ່ງການຖຽງກັນ ອັນລາມກນັ້ນແຫລະເສັຍ ຖ້າພວກທ່ານບໍ່ເລັງເຫັນຮາກແຫ່ງການຖຽງກັນ

ເຫັນປານນີ້ ທັ້ງ ຄາຍໃນແລະຄາຍນອກ ພວກທ່ານໃນບໍຣິษັທນັ້ນ ຄວຣປຕິບັຕິເພື່ອຄວາມຍຶດເຍື້ອແຫ່ງຮາກແຫ່ງ ຄາຣຖຽງກັນອັນລາມກນັ້ນ ຍ່ອມມີດ້ວຍຢ່າງນີ້ ຄວາມຍຶດເຍື້ອແຫ່ງຮາກແຫ່ງຄາຣຖຽງກັນອັນລາມກນັ້ນ ຍ່ອມມີຕໍ່ໄປດ້ວຍຢ່າງນີ້ ຮາກແຫ່ງຄາຣວິວາທ ៦ ຢ່າງນີ້ເປັນມູລແຫ່ງວິວາທາທິກຣຕ໌ ฯ

ອກຸສົລມູລ ៣

[៦៣៧] ຮາກແຫ່ງອກຸສົລ ៣ ເປັນມູລແຫ່ງວິວາທາທິກຣຕ໌ ເປັນແບບໃດດູຣາກິກຂຸ ທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌

ວິນັຍນີ້ ມີຈິຕໂລກວິວາທກັນ ມີຈິຕໂກຼສວິວາທກັນ ມີຈິຕຫລົງວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌

໒. ນີ້ເປັນວິນັຍ ນີ້ບໍ່ເປັນວິນັຍ

៣. ນີ້ພຣະຕຖາຄົຕເຈົ້າຕຣັສການິຕໄວ້ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ຕຣັສການິຕໄວ້

៤. ນີ້ພຣະຕຖາຄົຕເຈົ້າທຣົງປະພຶຕມາ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ທຣົງປະພຶຕມາ

໕. ນີ້ພຣະຕຖາຄົຕເຈົ້າທຣົງບັຍຍັຕິໄວ້ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ທຣົງບັຍຍັຕິໄວ້

៦. ນີ້ເປັນອາບັຕິ ນີ້ບໍ່ເປັນອາບັຕິ

៧. ນີ້ເປັນອາບັຕິເບົາ ນີ້ເປັນອາບັຕິໜັກ

៨. ນີ້ເປັນອາບັຕິມີສ່ວນເຫລືອ ນີ້ເປັນອາບັຕິທາສ່ວນເຫລືອບໍ່ໄດ້

៩. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຮາກແຫ່ງອກຸສົລ ៣ ຢ່າງນີ້ເປັນມູລແຫ່ງວິວາທາທິກຣຕ໌ ฯ

ກຸສົລມູລ ៣

[៦៤໐] ຮາກແຫ່ງກຸສົລ ៣ ເປັນມູລແຫ່ງວິວາທາທິກຣຕ໌ ເປັນແບບໃດ ດູຣາກິກຂຸ ທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ມີຈິຕບໍ່ໂລກວິວາທກັນ ມີຈິຕບໍ່ໂກຼສວິວາທກັນ ມີຈິຕບໍ່ຫລົງວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌ ...

៩. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຮາກແຫ່ງກຸສົລ ៣ ຢ່າງນີ້ເປັນມູລແຫ່ງວິວາທາທິກຣຕ໌ ฯ

ມູລແຫ່ງອນຸວາທາທິກຣຕ໌

[៦៤໑] ແມ່ນຫຍັງເປັນມູລແຫ່ງອນຸວາທາທິກຣຕ໌ ຮາກແຫ່ງຄາຣໂຈທ ៦ ຢ່າງ ເປັນມູລແຫ່ງອນຸວາທາທິກຣຕ໌ ຮາກແຫ່ງອກຸສົລທັ້ງ ៣ ເປັນມູລແຫ່ງອນຸວາທາທິກຣຕ໌ ຮາກແຫ່ງກຸສົລທັ້ງ ៣ ເປັນມູລແຫ່ງອນຸວາທາທິກຣຕ໌ ແມ້ຄາຍກໍເປັນມູລແຫ່ງອນຸວາທາທິກຣຕ໌ ແມ້ວາຈາກໍເປັນມູລແຫ່ງອນຸວາທາທິກຣຕ໌ ฯ

[໒໘໔] ຮາກແຫ່ງການໂຈທ ໖ ຢ່າງ ເປັນມູລແຫ່ງອນຸວາທາທິກຣຕ໌ ເປັນແບບໃດ ດູຮາພິກຂຸທັ້ງຫຼາຍ ກໍພິກຂຸໃນສັມມ໌ວິນັຍນີ້ເປັນຜູ້ມັກໂກຼຮ ຖືໂກຼຮ ພິກຂຸທີ່ມັກ ໂກຼຮ ຖືໂກຼຮນັ້ນ ຍ່ອມບໍ່ມີຄວາມເຄາຮົພ ນັບຖືໃນພຣະສາສດາ ໃນພຣະສັມມ໌ ໃນພຣະສົງຟ໌ຢູ່ ຍ່ອມບໍ່ທຳໃຫ້ບໍຣິບູຣຕ໌ແມ້ໃນສິກຂາ ພິກຂຸທີ່ບໍ່ ເຄາຣົພນັບຖືໃນພຣະສາສດາ ໃນພຣະສັມມ໌ ໃນພຣະສົງຟ໌ຢູ່ ແມ້ໃນສິກຂາກໍບໍ່ທຳໃຫ້ບໍຣິບູຣຕ໌ນັ້ນ ຍ່ອມ ຍັງການໂຈທກັນໃຫ້ເກີດໃນສົງຟ໌ ການໂຈທຍ່ອມເປັນໄປເພື່ອຄວາມບໍ່ເກື້ອກູລແກ່ຊົນຫຼາຍ ເພື່ອບໍ່ເປັນສຸຂແກ່ ຊົນຫຼາຍ ເພື່ອຄວາມພິນາສແກ່ຊົນຫຼາຍ ເພື່ອຄວາມບໍ່ເກື້ອກູລ ເພື່ອທຸກຂ໌ແກ່ເທພຍດາແລະມນຸษຍ໌ ດູຮາພິກຂຸ ທັ້ງຫຼາຍ ຖ້າພວກທ່ານເລັງເຫັນຮາກແຫ່ງການ ໂຈທກັນເຫັນປານນີ້ ທັ້ງກາຍໃນແລະກາຍນອກໄດ້ ພວກທ່ານໃນ ບໍຣິษັທນັ້ນ ຄວຣພຍາຍາມລະຮາກແຫ່ງການໂຈທກັນອັນລາມກນັ້ນແຫລະເສັຍ ຖ້າພວກທ່ານບໍ່ເລັງເຫັນຮາກແຫ່ງ ການໂຈທກັນເຫັນປານນີ້ ທັ້ງກາຍໃນແລະກາຍນອກ ພວກທ່ານໃນບໍຣິษັທນັ້ນຄວຣປຕິບັຕິເພື່ອຄວາມຍຶດເຍື້ອແຫ່ງ ຮາກ ແຫ່ງການໂຈທກັນອັນລາມກນັ້ນແຫລະ ຄວາມລະຮາກແຫ່ງການໂຈທກັນອັນລາມກນັ້ນ ຍ່ອມມີດ້ວຍຢ່າງນີ້ ການຍຶດເຍື້ອແຫ່ງຮາກແຫ່ງການໂຈທກັນອັນລາມກນັ້ນ ຍ່ອມມີຕໍ່ໄປດ້ວຍຢ່າງນີ້ ໆ

[໒໘໕] ດູຮາພິກຂຸທັ້ງຫຼາຍ ກໍຂໍ້ອື່ນຍັງມີອີກ ພິກຂຸເປັນຜູ້ລົບຫລູ່ຕີສເນີທ່ານ ...

ພິກຂຸເປັນຜູ້ມີປົກຕິອິສສາ ຂີ້ຖີ່ ...

ພິກຂຸເປັນຜູ້ອວດດີ ເຈົ້າມາຍາ ...

ພິກຂຸເປັນຜູ້ມີຄວາມປັຕຖນາລາມກ ມີຄວາມເຫັນຜິດ ...

ພິກຂຸເປັນຜູ້ຖືແຕ່ຄວາມເຫັນຂອງຕົນ ຖືຢ່າງແນ່ນແຟ້ນ ປົດໄດ້ຍາກ ພິກຂຸທີ່ຖືແຕ່ຄວາມເຫັນ ຂອງຕົນ ຖືຢ່າງແນ່ນແຟ້ນ ປົດໄດ້ຍາກນັ້ນ ຍ່ອມບໍ່ມີຄວາມ ເຄາຣົພນັບຖືໃນພຣະສາສດາ ໃນພຣະ ສັມມ໌ ໃນພຣະສົງຟ໌ຢູ່ ຍ່ອມບໍ່ທຳໃຫ້ບໍຣິບູຣຕ໌ ແມ້ໃນສິກຂາ ພິກຂຸທີ່ບໍ່ມີຄວາມເຄາຣົພນັບຖື ໃນພຣະສາສດາ ໃນພຣະສັມມ໌ ໃນພຣະສົງຟ໌ ຢູ່ ແມ້ໃນສິກຂາ ກໍບໍ່ທຳໃຫ້ບໍຣິບູຣຕ໌ນັ້ນ ຍ່ອມຍັງການ ໂຈທກັນໃຫ້ເກີດໃນສົງຟ໌ ການ ໂຈທກັນຍ່ອມເປັນໄປເພື່ອຄວາມບໍ່ເກື້ອກູລແກ່ຊົນຫຼາຍ ເພື່ອບໍ່ເປັນສຸຂແກ່ຊົນຫຼາຍ ເພື່ອຄວາມພິນາສແກ່ຊົນຫຼາຍ ເພື່ອຄວາມບໍ່ເກື້ອກູລ ເພື່ອທຸກຂ໌ແກ່ເທພຍດາແລະມນຸษຍ໌ດູຮາພິກຂຸທັ້ງຫຼາຍ ຖ້າພວກທ່ານເລັງເຫັນຮາກແຫ່ງການໂຈທກັນເຫັນປານນີ້ ທັ້ງກາຍໃນ ແລະກາຍນອກໄດ້ ພວກທ່ານໃນບໍຣິษັທ ນັ້ນ ຄວຣພຍາຍາມແລະຮາກແຫ່ງການໂຈທກັນອັນລາມກນັ້ນແຫລະເສັຍ ຖ້າພວກທ່ານບໍ່ເລັງເຫັນຮາກແຫ່ງ ການໂຈທກັນເຫັນປານນີ້ ທັ້ງກາຍໃນ ແລະກາຍນອກ ພວກທ່ານໃນບໍຣິษັທນັ້ນ ຄວຣປຕິບັຕິເພື່ອຄວາມຍຶດເຍື້ອ ແຫ່ງຮາກແຫ່ງການໂຈທກັນອັນລາມກນັ້ນແຫລະ ຄວາມລະຮາກແຫ່ງການໂຈທກັນອັນລາມກນັ້ນຍ່ອມມີດ້ວຍ ຢ່າງນີ້ ຄວາມຍຶດເຍື້ອແຫ່ງຮາກແຫ່ງການໂຈທກັນອັນລາມກນັ້ນ ຍ່ອມມີຕໍ່ໄປດ້ວຍຢ່າງນີ້

ຮາກແຫ່ງການໂຈທກັນ ໖ ຢ່າງນີ້ເປັນມູລແຫ່ງອນຸວາທາທິກຣຕ໌ ໆ

ອກຸສົລມູລ ໓

[໖໘໔] ອກຸສົລມູລ ໓ ຢ່າງ ເປັນມູລແຫ່ງອນຸວາທາທິກຣຕ໌ ເປັນແບບໃດດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ຍ່ອມມີຈິຕໂລກໂຈທ ຍ່ອມມີຈິຕໂກຼສໂຈທຍ່ອມມີຈິຕຫລົງໂຈທກິກຂຸ ດ້ວຍສີລວິບັຕິ ອາຈາຣວິບັຕິ ທິກິວິບັຕິ ຫຼືອາຊີວວິບັຕິ ອກຸສົລມູລ ໓ ຢ່າງນີ້ເປັນມູລແຫ່ງອນຸວາທາທິກຣຕ໌ ໆ

ກຸສົລມູລ ໓

[໖໘໕] ກຸສົລມູລ ໓ ຢ່າງ ເປັນມູລແຫ່ງອນຸວາທາທິກຣຕ໌ ເປັນແບບໃດ ດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ຍ່ອມມີຈິຕບໍ່ໂລກໂຈທ ຍ່ອມມີຈິຕບໍ່ໂກຼສໂຈທ ຍ່ອມມີຈິຕບໍ່ຫລົງໂຈທກິກຂຸ ດ້ວຍສີລວິບັຕິ ອາຈາຣວິບັຕິ ທິກິວິບັຕິ ຫຼື ອາຊີວວິບັຕິ ກຸສົລມູລ ໓ ຢ່າງນີ້ເປັນມູລແຫ່ງອນຸວາທາທິກຣຕ໌ ໆ

ກາຍ

[໖໘໖] ອີກຢ່າງ ກາຍ ເປັນມູລແຫ່ງອນຸວາທາທິກຣຕ໌ ເປັນແບບໃດ ກິກຂຸບາງອົງຄ໌ໃນສັມມ໌ວິນັຍນີ້ ເປັນຜູ້ມີຜິວພັຣຕ໌ບໍ່ໜ້າເບິ່ງ ມີຮູປຮ່າງນ້ອຍ ມີອາພາສຫຼາຍເປັນຄົນບອດ ງ່ອຍ ບໍ່ໄດ້ເຣື່ອງ ຫຼືອັມພາຕ ກິກຂຸທັ້ງຫຼາຍຍ່ອມໂຈທກິກຂຸນັ້ນ ດ້ວຍ ກາຍໃດ ກາຍນີ້ເປັນມູລແຫ່ງອນຸວາທາທິກຣຕ໌ ໆ

ວາຈາ

[໖໘໗] ອີກຢ່າງ ວາຈາ ເປັນມູລແຫ່ງອນຸວາທາທິກຣຕ໌ ເປັນແບບໃດ ກິກຂຸບາງອົງຄ໌ໃນສັມມ໌ວິນັຍນີ້ ເປັນຄົນເວົ້າບໍ່ດີ ເວົ້າບໍ່ຊັດ ເວົ້າຣະຣານ ກິກຂຸທັ້ງຫຼາຍຍ່ອມໂຈທກິກຂຸນັ້ນ ດ້ວຍວາຈາໃດ ວາຈານີ້ເປັນມູລແຫ່ງອນຸວາທາທິກຣຕ໌ ໆ

ມູລແຫ່ງອາປັຕຕາທິກຣຕ໌

[໖໘໘] ແມ່ນຫຍັງເປັນມູລແຫ່ງອາປັຕຕາທິກຣຕ໌

ສມຸຕຖານແຫ່ງອາບັຕິ ໖ ຢ່າງ ເປັນມູລແຫ່ງອາປັຕຕາທິກຣຕ໌ ຄື:-

໑. ອາບັຕິເກີດທາງກາຍ ບໍ່ແມ່ນທາງວາຈາ ບໍ່ແມ່ນທາງຈິຕ ກໍມີ

໒. ອາບັຕິເກີດທາງວາຈາ ບໍ່ແມ່ນທາງກາຍ ບໍ່ແມ່ນທາງຈິຕ ກໍມີ

໓. ອາບັຕິເກີດທາງກາຍກັບວາຈາ ບໍ່ແມ່ນທາງຈິຕ ກໍມີ

໔. ອາບັຕິເກີດທາງກາຍກັບຈິຕ ບໍ່ແມ່ນທາງວາຈາ ກໍມີ

໕. ອາບັຕິເກີດທາງວາຈາກັບຈິຕ ບໍ່ແມ່ນທາງກາຍ ກໍມີ

໖. ອາບັຕິເກີດທາງກາຍ ວາຈາ ແລະຈິຕ ກໍມີ

ສມຸຕຖານແຫ່ງອາບັຕິ ໖ ຢ່າງນີ້ເປັນມູລແຫ່ງອາປັຕຕາທິກຣຕ໌ ໆ

ມູລແຫ່ງກິຈຈາທິກຣຕ໌

[໖໔໙] ແມ່ນຫຍັງເປັນມູລແຫ່ງກິຈຈາທິກຣຕ໌

ສົງຄ໌ເປັນມູລອັນນຶ່ງແຫ່ງກິຈຈາທິກຣຕ໌ ຯ

ອທິກຣຕ໌ເປັນກຸສົລ ອກຸສົລ ແລະອັພຍາກຣົຕ

[໖໕໐] ວິວາທາທິກຣຕ໌ເປັນກຸສົລ ອກຸສົລ ອັພຍາກຣົຕ ວິວາທາທິກຣຕ໌ເປັນກຸສົລກໍມີ ເປັນອກຸສົລກໍມີ ເປັນອັພຍາກຣົຕກໍມີ ຯ

[໖໕໑] ບັຣດາວິວາທາທິກຣຕ໌ນັ້ນ ວິວາທາທິກຣຕ໌ ເປັນອກຸສົລ ເປັນແບບໃດ

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ມີຈິຕເປັນອກຸສົລວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌ ...

໙. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຄວາມບາດໝາງ ຄວາມທະເລາະ ຄວາມແກ່ງແຍ່ງ ຄວາມທິກຖຽງ ກາຣກ່າວຕ່າງກັນ ກາຣກ່າວໂດຍປະກາຣອື່ນ ກາຣເວົ້າເພື່ອຄວາມກລັດກລຸ້ມໃຈ ຄວາມໝາຍມັ່ນໃນເຣື່ອງນັ້ນ ອັນໃດ ນີ້ເອີ້ນວ່າ ວິວາທາທິກຣຕ໌ເປັນອກຸສົລ ຯ

[໖໕໒] ບັຣດາວິວາທາທິກຣຕ໌ນັ້ນ ວິວາທາທິກຣຕ໌ເປັນກຸສົລ ເປັນແບບໃດ

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ມີຈິຕເປັນກຸສົລ ວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌ ...

໙. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຄວາມບາດໝາງ ຄວາມທະເລາະ ຄວາມແກ່ງແຍ່ງ ຄວາມທິກຖຽງ ກາຣກ່າວຕ່າງກັນ ກາຣກ່າວໂດຍປະກາຣອື່ນ ກາຣເວົ້າເພື່ອຄວາມກລັດກລຸ້ມໃຈ ຄວາມໝາຍມັ່ນໃນເຣື່ອງນັ້ນອັນໃດ ນີ້ເອີ້ນວ່າ ວິວາທາທິກຣຕ໌ເປັນກຸສົລ ຯ

[໖໕໓] ບັຣດາວິວາທາທິກຣຕ໌ນັ້ນ ວິວາທາທິກຣຕ໌ເປັນອັພຍາກຣົຕເປັນແບບໃດ

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ມີຈິຕເປັນອັພຍາກຣົຕ ວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌ ...

໙. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຄວາມບາດໝາງ ຄວາມທະເລາະ ຄວາມແກ່ງແຍ່ງ ຄວາມທິກຖຽງ ການກ່າວຕ່າງກັນ ການກ່າວໂດຍປະການອື່ນ ການເວົ້າເພື່ອຄວາມກລັດກລຸ້ມໃຈ ຄວາມໝາຍມັ່ນໃນເຣື່ອງນັ້ນ ອັນໃດ ນີ້ເອີ້ນວ່າ ວິວາທາທິກຣຕ໌ເປັນອັພຍາກຣິຕ ໆ

[໖໕໔] ອນຸວາທາທິກຣຕ໌ ເປັນກຸສົລ ອກຸສົລ ອັພຍາກຣິຕ ອນຸວາທາທິກຣຕ໌ ເປັນກຸສົລກໍມີ ອກຸສົລກໍມີ ອັພຍາກຣິຕກໍມີ ໆ

[໖໕໕] ບັຣດາອນຸວາທາທິກຣຕ໌ນັ້ນ ອນຸວາທາທິກຣຕ໌ທີ່ເປັນອກຸສົລ ເປັນແບບໃດ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ເປັນຜູ້ມີຈິຕເປັນອກຸສົລຍ່ອມໂຈທກິກຂຸດ້ວຍສີລວິບັຕິ ອາຈາຣວິບັຕິ ທິກີວິບັຕິ ຫຼືອາຊີວວິບັຕິ ການໂຈທ ການກ່າວຫາ ການຟ້ອງຮ້ອງ ການປະທ້ວງຄວາມເປັນຜູ້ຄ້ອຍຕາມ ການທຳຄວາມອຸຕສາຫະໂຈທ ການຕາມເພີ່ມກຳລັງໃຫ້ ໃນເຣື່ອງນັ້ນ ອັນໃດ ນີ້ເອີ້ນວ່າ ອນຸວາທາທິກຣຕ໌ເປັນອກຸສົລ ໆ

[໖໕໖] ບັຣດາອນຸວາທາທິກຣຕ໌ນັ້ນ ອນຸວາທາທິກຣຕ໌ທີ່ເປັນກຸສົລ ເປັນແບບໃດ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ເປັນຜູ້ມີຈິຕເປັນກຸສົລ ຍ່ອມໂຈທກິກຂຸດ້ວຍສີລວິບັຕິ ອາຈາຣວິບັຕິ ທິກີວິບັຕິ ຫຼືອາຊີວວິບັຕິ ການໂຈທ ການກ່າວຫາ ການຟ້ອງຮ້ອງ ການປະທ້ວງຄວາມເປັນຜູ້ຄ້ອຍຕາມ ການທຳຄວາມອຸຕສາຫະໂຈທ ການຕາມເພີ່ມກຳລັງໃຫ້ ໃນເຣື່ອງນັ້ນ ອັນໃດ ນີ້ເອີ້ນວ່າ ອນຸວາທາທິກຣຕ໌ເປັນກຸສົລ ໆ

[໖໕໗] ບັຣດາອນຸວາທາທິກຣຕ໌ນັ້ນ ອນຸວາທາທິກຣຕ໌ທີ່ເປັນອັພຍາກຣິຕ ເປັນແບບໃດ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ເປັນຜູ້ມີຈິຕເປັນອັພຍາກຣິຕຍ່ອມໂຈທກິກຂຸດ້ວຍສີລວິບັຕິ ອາຈາຣວິບັຕິ ທິກີວິບັຕິ ຫຼືອາຊີວວິບັຕິ ການໂຈທ ການກ່າວຫາ ການຟ້ອງຮ້ອງ ການປະທ້ວງຄວາມເປັນຜູ້ຄ້ອຍຕາມ ການທຳຄວາມອຸຕສາຫະໂຈທ ການຕາມເພີ່ມກຳລັງໃຫ້ ໃນເຣື່ອງນັ້ນ ອັນໃດ ນີ້ເອີ້ນວ່າ ອນຸວາທາທິກຣຕ໌ເປັນອັພຍາກຣິຕ ໆ

[໖໕໘] ອາປັຕຕາທິກຣຕ໌ເປັນອກຸສົລ ອັພຍາກຣິຕ ອາປັຕຕາທິກຣຕ໌ເປັນອກຸສົລກໍມີ ອັພຍາກຣິຕກໍມີ ອາປັຕຕາທິກຣຕ໌ເປັນກຸສົລບໍ່ມີ ໆ

[໖໕໙] ບັຣດາອາປັຕຕາທິກຣຕ໌ນັ້ນ ອາປັຕຕາທິກຣຕ໌ທີ່ເປັນອກຸສົລ ເປັນແບບໃດ

ກິກຂຸຮູ້ຢູ່ ເຂົ້າໃຈຢູ່ ຈົງໃຈ ຝ່າຝືນ ລະເມີດອາບັຕິ ໃດ ນີ້ເອີ້ນວ່າ ອາປັຕຕາທິກຣຕ໌ເປັນອກຸສົລ

ບັຣດາອາປັຕຕາທິກຣຕ໌ນັ້ນ ອາປັຕຕາທິກຣຕ໌ທີ່ເປັນອັພຍາກຣິຕ ເປັນແບບໃດ

ກິກຂຸບໍ່ຮູ້ ບໍ່ເຂົ້າໃຈ ບໍ່ຈົງໃຈ ບໍ່ຝ່າຝືນ ລະເມີດອາບັຕິ ໃດ ນີ້ເອີ້ນວ່າ ອາປັຕຕາທິກຣຕ໌ເປັນອັພຍາກຣິຕ ໆ

[໖໖໐] ກິຈຈາທິກຣຓ໌ເປັນກຸສົລ ອກຸສົລ ອັພຢາກຣິຕ ກິຈຈາທິກຣຓ໌ເປັນກຸສົລກໍມີ ອກຸສົລກໍມີ ອັພຢາກຣິຕກໍມີ ຯ

[໖໖໑] ບັຣດາກິຈຈາທິກຣຓ໌ນັ້ນ ກິຈຈາທິກຣຓ໌ທີ່ເປັນອກຸສົລ ເປັນແບບໃດ

ສົງຄ໌ມີຈິຕເປັນອກຸສົລ ທຳກັມມ໌ອັນໃດ ຄື ອປໂລກນກັມມ໌ ຍັຕຕິກັມມ໌ຍັຕຕິທຸຕິຍກັມມ໌ ຍັຕຕິຈຕຸຕຖກັມມ໌ ນີ້ເອີ້ນວ່າ ກິຈຈາທິກຣຓ໌ເປັນອກຸສົລ ຯ

[໖໖໒] ບັຣດາກິຈຈາທິກຣຓ໌ນັ້ນ ກິຈຈາທິກຣຓ໌ທີ່ເປັນກຸສົລ ເປັນແບບໃດ

ສົງຄ໌ມີ ຈິຕເປັນກຸສົລ ທຳກັມມ໌ອັນໃດ ຄື ອປໂລກນກັມມ໌ ຍັຕຕິກັມມ໌ ຍັຕຕິທຸຕິຍກັມມ໌ ຍັຕຕິຈຕຸຕຖກັມມ໌ ນີ້ເອີ້ນວ່າ ກິຈຈາທິກຣຓ໌ເປັນກຸສົລ ຯ

[໖໖໓] ບັຣດາກິຈຈາທິກຣຓ໌ນັ້ນ ກິຈຈາທິກຣຓ໌ທີ່ເປັນອັພຢາກຣິຕ ເປັນແບບໃດ

ສົງຄ໌ມີຈິຕເປັນອັພຢາກຣິຕ ທຳກັມມ໌ອັນໃດ ຄື ອປໂລກນກັມມ໌ ຍັຕຕິກັມມ໌ ຍັຕຕິທຸຕິຍກັມມ໌ ຍັຕຕິຈຕຸຕຖກັມມ໌ ນີ້ເອີ້ນວ່າ ກິຈຈາທິກຣຓ໌ເປັນອັພຢາກຣິຕ ຯ

ວິວາທາທິກຣຓ໌

[໖໖໔] ວິວາທ ເປັນວິວາທາທິກຣຓ໌ ວິວາທບໍ່ເປັນອທິກຣຓ໌ ອທິກຣຓ໌ບໍ່ເປັນວິວາທ ເປັນອທິກຣຓ໌ດ້ວຍເປັນວິວາທດ້ວຍ ວິວາທເປັນວິວາທາທິກຣຓ໌ກໍມີ ວິວາທບໍ່ເປັນອທິກຣຓ໌ກໍມີ ອທິກຣຓ໌ບໍ່ເປັນວິວາທກໍມີ ເປັນອທິກຣຓ໌ດ້ວຍເປັນວິວາທດ້ວຍກໍມີ ຯ

[໖໖໕] ບັຣດາວິວາທນັ້ນ ວິວາທທີ່ເປັນວິວາທາທິກຣຓ໌ ເປັນແບບໃດ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ຍ່ອມວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌ ...

໙. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ຄວາມບາດໝາງ ຄວາມທະເລາະ ຄວາມແກ່ງແຍ່ງ ຄວາມທິກຖຽງ ຄວາມກ່າວຕ່າງກັນ ຄວາມກ່າວໂດຍປະການອື່ນ ການເວົ້າເພື່ອຄວາມກລັດກລຸ້ມໃຈ ຄວາມໝາຍມັ່ນ ໃນເຣື່ອງນັ້ນ ອັນໃດ ນີ້ຊື່ວ່າ ວິວາທເປັນວິວາທາທິກຣຓ໌

ບັຣດາວິວາທນັ້ນ ວິວາທບໍ່ເປັນອທິກຣຓ໌ ເປັນແບບໃດ

ມາຣດາວິວາທກັບບຸຕຣ໌ແດ່ບຸຕຣ໌ວິວາທກັບມາຣດາແດ່ ບິດາວິວາທກັບບຸຕຣ໌ແດ່ ບຸຕຣ໌ວິວາທກັບບິດາແດ່ ອ້າຍວິວາທ ກັບນ້ອງຊາຍແດ່ ອ້າຍວິວາທກັບນ້ອງສາວແດ່ ນ້ອງສາວວິວາທກັບອ້າຍແດ່ ສຫາຍວິວາທກັບສຫາຍແດ່ ນີ້ຊື່ວ່າ ວິວາທບໍ່ເປັນອທິກຣຓ໌

ບັຣດາວິວາທນັ້ນ ອະິກຣຓ໌ບໍ່ເປັນວິວາທ ເປັນແບບໃດ

ອນຸວາທາະິກຣຓ໌ ອາປັຕຕາະິກຣຓ໌ ກິຈຈາະິກຣຓ໌ ນີ້ຊື່ວ່າ ອະິກຣຓ໌ບໍ່ເປັນວິວາທ

ບັຣດາວິວາທນັ້ນ ອະິກຣຓ໌ ເປັນອະິກຣຓ໌ດ້ວຍວິວາທດ້ວຍ ເປັນແບບໃດ

ວິວາທາະິກຣຓ໌ ເປັນອະິກຣຓ໌ດ້ວຍ ເປັນວິວາທດ້ວຍ ฯ

ອນຸວາທາະິກຣຓ໌

[໖໖໖] ກາຣໂຈທເປັນອນຸວາທາະິກຣຓ໌ ກາຣໂຈທບໍ່ເປັນອະິກຣຓ໌ ອະິກຣຓ໌ບໍ່ເປັນກາຣໂຈທ ເປັນອະິກຣຓ໌ດ້ວຍເປັນກາຣໂຈທດ້ວຍ ກາຣໂຈທເປັນອນຸວາທາະິກຣຓ໌ກໍມີກາຣໂຈທບໍ່ເປັນອະິກຣຓ໌ກໍມີ ອະິກຣຓ໌ບໍ່ເປັນກາຣໂຈທກໍມີ ເປັນອະິກຣຓ໌ດ້ວຍເປັນກາຣໂຈທດ້ວຍກໍມີ ฯ

[໖໖໗] ບັຣດາກາຣໂຈທນັ້ນ ກາຣໂຈທທີ່ເປັນອນຸວາທາະິກຣຓ໌ ເປັນແບບໃດ

ດູຣາພິກຂຸທັ້ງຫຼາຍ ພິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ຍ່ອມໂຈທພິກຂຸດ້ວຍສີລວິບັຕິ ອາຈາຣວິບັຕິ ທິຖິວິບັຕິ ຫຼືອາຊີວວິບັຕິ ກາຣໂຈທ ກາຣກ່າວຫາ ກາຣຟ້ອງຮ້ອງ ກາຣປະທ້ວງ ຄວາມເປັນຜູ້ຄ້ອຍຕາມ ກາຣທຳຄວາມອຸຕສາຫະໂຈທ ກາຣຕາມເພີ່ມກຳລັງໃຫ້ ໃນເຣື່ອງນັ້ນ ອັນໃດ ນີ້ຊື່ວ່າ ກາຣໂຈທເປັນອນຸວາທາະິກຣຓ໌

ບັຣດາກາຣໂຈທນັ້ນ ກາຣໂຈທທີ່ບໍ່ເປັນອະິກຣຓ໌ ເປັນແບບໃດ

ມາຣດາກ່າວຫາບຸຕຣ໌ແດ່ ບຸຕຣ໌ກ່າວຫາມາຣດາແດ່ ບິດາກ່າວຫາບຸຕຣ໌ແດ່ ບຸຕຣ໌ກ່າວຫາບິດາແດ່ ອ້າຍກ່າວຫານ້ອງຊາຍແດ່ ອ້າຍກ່າວຫານ້ອງສາວແດ່ ນ້ອງສາວກ່າວຫາອ້າຍແດ່ ສຫາຍກ່າວຫາສຫາຍແດ່ ນີ້ຊື່ວ່າ ກາຣໂຈທບໍ່ເປັນອະິກຣຓ໌

ບັຣດາອະິກຣຓ໌ນັ້ນ ອະິກຣຓ໌ທີ່ບໍ່ເປັນກາຣໂຈທ ເປັນແບບໃດ

ອາປັຕຕາະິກຣຓ໌ ກິຈຈາະິກຣຓ໌ ວິວາທາະິກຣຓ໌ ນີ້ຊື່ວ່າ ອະິກຣຓ໌ບໍ່ເປັນກາຣໂຈທ

ບັຣດາອະິກຣຓ໌ນັ້ນ ອະິກຣຓ໌ທີ່ເປັນອະິກຣຓ໌ດ້ວຍ ເປັນກາຣໂຈທດ້ວຍ ເປັນແບບໃດ

ອນຸວາທາະິກຣຓ໌ ເປັນອະິກຣຓ໌ດ້ວຍ ເປັນກາຣໂຈທດ້ວຍ ฯ

ອາປັຕຕາະິກຣຓ໌

[໖໖໘] ອາບັຕິເປັນອາປັຕຕາະິກຣຓ໌ ອາບັຕິບໍ່ເປັນອະິກຣຓ໌ ອະິກຣຓ໌ບໍ່ເປັນອາບັຕິ ເປັນອະິກຣຓ໌ດ້ວຍເປັນອາບັຕິດ້ວຍ ອາບັຕິເປັນອາປັຕຕາະິກຣຓ໌ກໍມີ ອາບັຕິບໍ່ເປັນອະິກຣຓ໌ກໍມີ ອະິກຣຓ໌ບໍ່ເປັນອາບັຕິກໍມີ ເປັນອະິກຣຓ໌ດ້ວຍເປັນອາບັຕິດ້ວຍກໍມີ ฯ

[໖໖໙] ບັຣດາອະທິກຣຓ໌ນັ້ນ ອາບັຕິເປັນອາປັຕຕາທິກຣຓ໌ ເປັນແບບໃດ

ອາບັຕິ ໕ ກອງເປັນອາປັຕຕາທິກຣຓ໌ແດ່ ອາບັຕິ ໗ ກອງເປັນອາປັຕຕາທິກຣຓ໌ແດ່ນີ້ຊື່ວ່າ ອາບັຕິເປັນອາປັຕຕາທິກຣຓ໌

ບັຣດາອະທິກຣຓ໌ນັ້ນ ອາບັຕິທີ່ບໍ່ເປັນອະທິກຣຓ໌ ເປັນແບບໃດ

ໂສດາບັຕິ ສມາບັຕິ ນີ້ຊື່ວ່າ ອາບັຕິບໍ່ເປັນອະທິກຣຓ໌

ບັຣດາອະທິກຣຓ໌ນັ້ນ ອະທິກຣຓ໌ທີ່ບໍ່ເປັນອາບັຕິ ເປັນແບບໃດ

ກິຈຈາທິກຣຓ໌ ວິວາທາທິກຣຓ໌ ອນຸວາທາທິກຣຓ໌ ນີ້ຊື່ວ່າອະທິກຣຓ໌ບໍ່ເປັນອາບັຕິ

ບັຣດາອະທິກຣຓ໌ນັ້ນ ອະທິກຣຓ໌ທີ່ເປັນອະທິກຣຓ໌ດ້ວຍ ເປັນອາບັຕິດ້ວຍ ເປັນແບບໃດ

ອາປັຕຕາທິກຣຓ໌ ເປັນອະທິກຣຓ໌ດ້ວຍ ເປັນອາບັຕິດ້ວຍ ฯ

ກິຈຈາທິກຣຓ໌

[໖໗໐] ກິຈເປັນກິຈຈາທິກຣຓ໌ ກິຈບໍ່ເປັນອະທິກຣຓ໌ ອະທິກຣຓ໌ບໍ່ເປັນກິຈ ເປັນອະທິກຣຓ໌ດ້ວຍເປັນກິຈດ້ວຍ ກິຈເປັນກິຈຈາທິກຣຓ໌ກໍມີ ກິຈບໍ່ເປັນອະທິກຣຓ໌ກໍມີ ອະທິກຣຓ໌ບໍ່ເປັນກິຈກໍມີ ເປັນອະທິກຣຓ໌ດ້ວຍເປັນກິຈດ້ວຍກໍມີ ฯ

[໖໗໑] ບັຣດາອະທິກຣຓ໌ນັ້ນ ກິຈເປັນກິຈຈາທິກຣຓ໌ ເປັນແບບໃດ

ຄວາມເປັນໜ້າທີ່ ຄວາມເປັນກຣະນີຍະແຫ່ງສົງຄ໌ອັນໃດ ຄື ອປໂລກນກັມມ໌ ຌັຕຕິກັມມ໌ ຌັຕຕິທຸຕິຍກັມມ໌ ຌັຕຕິຈຕຸຕຖກັມມ໌ ນີ້ຊື່ວ່າ ກິຈເປັນກິຈຈາທິກຣຓ໌

ບັຣດາອະທິກຣຓ໌ນັ້ນ ກິຈບໍ່ເປັນອະທິກຣຓ໌ ເປັນແບບໃດ

ກິຈທີ່ຈະຕ້ອງທຳແກ່ພຣະອາຈາຣຍ໌ ກິຈທີ່ຈະຕ້ອງທຳແກ່ພຣະອຸປັຊຊາຍະ ກິຈທີ່ຈະຕ້ອງທຳແກ່ພິກຂຸຜູ້ສເມີອຸປັຊຊາຍະ ກິຈທີ່ຈະຕ້ອງທຳແກ່ພິກຂຸຜູ້ສເມີພຣະອາຈາຣຍ໌ ນີ້ຊື່ວ່າ ກິຈບໍ່ເປັນອະທິກຣຓ໌

ບັຣດາອະທິກຣຓ໌ນັ້ນ ອະທິກຣຓ໌ບໍ່ເປັນກິຈ ເປັນແບບໃດ

ວິວາທາທິກຣຓ໌ ອນຸວາທາທິກຣຓ໌ ອາປັຕຕາທິກຣຓ໌ ນີ້ຊື່ວ່າ ອະທິກຣຓ໌ບໍ່ເປັນກິຈ

ບັຣດາອະທິກຣຓ໌ນັ້ນ ອະທິກຣຓ໌ທີ່ເປັນອະທິກຣຓ໌ດ້ວຍເປັນກິຈດ້ວຍ ເປັນແບບໃດ

ກິຈຈາທິກຣຓ໌ ເປັນອະທິກຣຓ໌ດ້ວຍ ເປັນກິຈດ້ວຍ ฯ

ວິວາທາທິກຣຓ໌ຣະງັບດ້ວຍສມຖະ ໔ ຢ່າງ

[໖໗໔] ວິວາທາທິກຣຓ໌ຍ່ອມຣະງັບດ້ວຍສມຖະເທົ່າໃດ

ວິວາທາທິກຣຕ໌ ຍ່ອມຣະງັບດ້ວຍສມຖະ ໒ ຄື ສັມມຸຂາວິນັຍ ໑ ເຢភុຍຍສິກາ ໑ ບາງທີວິວາທາທິກຣຕ໌ບໍ່ອາສັຍສມຖະຢ່າງນຶ່ງ ຄື ເຢភຸຍຍສິກາ ຄວຣຣະງັບດ້ວຍສມຖະຢ່າງດຽວ ຄືສັມມຸຂາວິນັຍ ບາງທີຄວຣຕົກລົງກັນໄດ້ ສົມຈິງດັ່ງທີ່ຕຣັສໄວ້ວ່າ

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸທັ້ງຫຼາຍໃນສັມມ໌ວິນັຍນີ້ ຍ່ອມວິວາທກັນວ່າ

໑. ນີ້ເປັນສັມມ໌ ນີ້ບໍ່ເປັນສັມມ໌

໒. ນີ້ເປັນວິນັຍ ນີ້ບໍ່ເປັນວິນັຍ

໓. ນີ້ພຣະຕຖາຄົຕເຈົ້າຕຣັສການິຕໄວ້ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ຕຣັສການິຕໄວ້

໔. ນີ້ພຣະຕຖາຄົຕເຈົ້າທຣົງປະພຶຕມາ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ທຣົງ ປະພຶຕມາ

໕. ນີ້ພຣະຕຖາຄົຕເຈົ້າທຣົງບັນລັຕິໄວ້ ນີ້ພຣະຕຖາຄົຕເຈົ້າບໍ່ໄດ້ທຣົງບັນລັຕິໄວ້

໖. ນີ້ເປັນອາບັຕິ ນີ້ບໍ່ເປັນອາບັຕິ

໗. ນີ້ເປັນອາບັຕິເບົາ ນີ້ເປັນອາບັຕິຫນັກ

໘. ນີ້ເປັນອາບັຕິມີສ່ວນເຫລືອ ນີ້ເປັນອາບັຕິບໍ່ມີສ່ວນເຫລືອ

໙. ນີ້ເປັນອາບັຕິຊົ່ວຫຍາບ ນີ້ເປັນອາບັຕິບໍ່ຊົ່ວຫຍາບ

ດູຣາພິກຂຸທັ້ງຫຼາຍ ຫາກພິກຂຸພວກນັ້ນສາມາຖຣະງັບອທິກຣຕ໌ນັ້ນໄດ້ ນີ້ເອີ້ນວ່າ ອທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍ ໃນສັມມຸຂາວິນັຍນັ້ນ ມີຫຍັງແດ່ ມີຄວາມພ້ອມຫນ້າສົງฆ໌ ຄວາມພ້ອມຫນ້າສັມມ໌ ຄວາມພ້ອມຫນ້າວິນັຍ ຄວາມພ້ອມຫນ້າບຸຄຄົລ

ກໍຄວາມພ້ອມຫນ້າສົງฆ໌ ໃນສັມມຸຂາວິນັຍນັ້ນແນວໃດ ຄື ພິກຂຸຜູ້ເຂົ້າກັມມ໌ມີຈຳນວນເທົ່າໃດ ພິກຂຸເຫຼົ່ານັ້ນມາປະຊຸມກັນ ນຳສັນທະຂອງຜູ້ຄວຣສັນທະມາ ຜູ້ຢູ່ພ້ອມຫນ້າກັນບໍ່ຄັດຄ້ານ ນີ້ຊື່ວ່າ ຄວາມພ້ອມຫນ້າສົງฆ໌ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມຫນ້າສັມມ໌ ຄວາມພ້ອມຫນ້າວິນັຍ ໃນສັມມຸຂາວິນັຍນັ້ນແນວໃດ ຄື ອທິກຣຕ໌ນັ້ນຣະງັບໂດຍສັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ໃດ ນີ້ຊື່ວ່າ ຄວາມພ້ອມຫນ້າສັມມ໌ ຄວາມພ້ອມຫນ້າວິນັຍ ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມຫນ້າບຸຄຄົລໃນສັມມຸຂາວິນັຍນັ້ນແນວໃດ ຄື ໂຈທກ໌ແລະຈຳເລີຍ ທັ້ງສອງ ເປັນຄູ່ຕໍ່ສູ້ໃນຄດີຢູ່ພ້ອມຫນ້າກັນ ນີ້ຊື່ວ່າ ຄວາມພ້ອມຫນ້າບຸຄຄົລໃນສັມມຸຂາວິນັຍນັ້ນ

ດູຣາພິກຂຸທັ້ງຫຼາຍ ຫາກອທິກຣຕ໌ຣະງັບຢ່າງນີ້ ຜູ້ທຳຣື້ຟື້ນເປັນປາຈິຕຕິຍ໌ ທີ່ຣື້ຟື້ນ ຜູ້ໃຫ້ສັນທະຕິຕຽນ ເປັນປາຈິຕຕິຍ໌ທີ່ຕິຕຽນ

[ຜາ໗໓] ດູຣາກິກຂຸທັ້ງຫຼາຍ ຖ້າກິກຂຸເຫຼົ່ານັ້ນບໍ່ສາມາຖຣະງັບອະທິກຣຕ໌ນັ້ນ ໃນອາວາສນັ້ນໄດ້ພວກທ່ານຄວຣໄປສູ່ອາວາສທີ່ມີກິກຂຸຫຼາຍກວ່າ ຫາກພວກທ່ານກຳລັງໄປສູ່ ອາວາສນັ້ນ ສາມາຖຣະງັບອະທິກຣຕ໌ໄດ້ໃນຣະຫວ່າງທາງ ນີ້ເອີ້ນວ່າ ອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມ ຫນ້າສົງຄ໌ ຄວາມພ້ອມຫນ້າທັມມ໌ ຄວາມພ້ອມຫນ້າວິນັຍ ຄວາມພ້ອມຫນ້າບຸຄຄົລ

ກໍຄວາມພ້ອມຫນ້າສົງຄ໌ ໃນສັມມຸຂາວິນັຍນັ້ນແນວໃດ ຄື ກິກຂຸຜູ້ເຂົ້າກັມມ໌ມີຈຳນວນເທົ່າໃດກິກຂຸເຫຼົ່ານັ້ນມາປະຊຸມກັນ ນຳຈັນທະຂອງຜູ້ຄວຣຈັນທະມາ ຜູ້ຢູ່ ພ້ອມຫນ້າກັນບໍ່ຄັດຄ້ານ ນີ້ຊື່ວ່າຄວາມພ້ອມຫນ້າສົງຄ໌ ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມຫນ້າທັມມ໌ ຄວາມພ້ອມຫນ້າວິນັຍ ໃນສັມມຸຂາວິນັຍນັ້ນແນວໃດ ຄື ອະທິກຣຕ໌ນັ້ນຣະງັບໂດຍທັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ໃດ ນີ້ຊື່ວ່າ ຄວາມພ້ອມຫນ້າທັມມ໌ ຄວາມພ້ອມຫນ້າວິນັຍ ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມຫນ້າບຸຄຄົລ ໃນສັມມຸຂາວິນັຍນັ້ນແນວໃດ ຄືໂຈທກ໌ແລະຈຳເລີຍ ທັ້ງສອງ ເປັນຄູ່ຕໍ່ສູ້ໃນຄດີຢູ່ພ້ອມຫນ້າກັນ ນີ້ຊື່ວ່າ ຄວາມພ້ອມຫນ້າບຸຄຄົລ ໃນ ສັມມຸຂາວິນັຍນັ້ນ

ດູຣາກິກຂຸທັ້ງຫຼາຍ ຖ້າອະທິກຣຕ໌ຣະງັບຢ່າງນີ້ ຜູ້ທຳຮື້ຟື້ນ ເປັນປາຈິຕຕີຍ໌ ທີ່ຮື້ຟື້ນ ຜູ້ໃຫ້ຈັນທະຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ໆ

[ຜາ໗໔] ດູຣາກິກຂຸທັ້ງຫຼາຍ ຖ້າກິກຂຸເຫຼົ່ານັ້ນກຳລັງໄປສູ່ອາວາສນັ້ນ ບໍ່ສາມາຖຣະງັບອະທິກຣຕ໌ນັ້ນໃນຣະຫວ່າງທາງໄດ້ ພວກທ່ານໄປເຖິງອາວາສນັ້ນແລ້ວ ຄວຣກ່າວກັບກິກຂຸ ເຈົ້າຖິ່ນວ່າ ທ່ານທັ້ງຫຼາຍອະທິກຣຕ໌ນີ້ເກີດແລ້ວຢ່າງນີ້ ບັງເກີດແລ້ວຢ່າງນີ້ ຂໍໂອກາສ ທ່ານທັ້ງຫຼາຍຈົ່ງຣະງັບອະທິກຣຕ໌ນີ້ໂດຍທັມມ໌ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ຕາມວິທີ ທາງທີ່ອະທິກຣຕ໌ນີ້ຈະຄວຣຣະງັບດ້ວຍດີ

ດູຣາກິກຂຸທັ້ງຫຼາຍ ຖ້າພວກກິກຂຸເຈົ້າຖິ່ນເປັນຜູ້ແກ່ກວ່າ ພວກກິກຂຸອາຄັນຕຸກະອ່ອນກວ່າ ພວກທ່ານຄວຣກ່າວກັບກິກຂຸອາຄັນຕຸກະວ່າ ທ່ານທັ້ງຫຼາຍ ຂໍນິມົນຕ໌ທ່ານທັ້ງຫຼາຍຈົ່ງຮວມຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງບຶດນຶ່ງ ຕລອດເວລາທີ່ພວກຂ້ານ້ອຍຈະ ປຶກษາກັນ ແຕ່ຖ້າພວກກິກຂຸເຈົ້າຖິ່ນເປັນຜູ້ອ່ອນກວ່າ ພວກກິກຂຸອາຄັນຕຸກະແກ່ກວ່າ ພວກທ່ານຄວຣກ່າວກັບກິກຂຸອາຄັນຕຸກະວ່າ ທ່ານທັ້ງຫຼາຍ ຖ້າເຊັ່ນນັ້ນຂໍທ່ານທັ້ງຫຼາຍຈົ່ງຢູ່ ໓ ທີ່ນີ້ບຶດນຶ່ງຈົນກວ່າພວກຂ້ານ້ອຍຈະປຶກษາກັນ

ດູຣາກິກຂຸທັ້ງຫຼາຍ ຖ້າພວກກິກຂຸເຈົ້າຖິ່ນກຳລັງປຶກษາ ຄຶດກັນຢ່າງນີ້ວ່າ ພວກເຮົາບໍ່ສາມາຖຣະງັບອະທິກຣຕ໌ນີ້ໂດຍທັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ພວກທ່ານບໍ່ຄວຣຮັບອະທິກຣຕ໌ນັ້ນໄວ້ ແຕ່ຖ້າກຳລັງປຶກษາ ຄຶດກັນຢ່າງນີ້ວ່າ ພວກເຮົາ ສາມາຖຣະງັບອະທິກຣຕ໌ນີ້ໄດ້ໂດຍທັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌

ພວກທ່ານຄວຣກ່າວກະ ພວກພິກຂຸອາຄັນຕຸກະວ່າ ທ່ານທັ້ງຫຼາຍ ຖ້າພວກທ່ານຈະແຈ້ງອະທິກຣຕ໌ນີ້ຕາມທີ່ເກີດແລ້ວ ຕາມທີ່ອຸບັຕິແລ້ວແກ່ພວກເຮົາ ເຫມືອນຢ່າງພວກເຮົາຈະຣະງັບອະທິກຣຕ໌ນີ້ໂດຍທັມມ໌ ໂດຍວິນັຍ ແລະໂດຍ ສັຕຖຸສາສນ໌ແນວໃດ ອະທິກຣຕ໌ນີ້ຈະຣະງັບດ້ວຍດີແນວນັ້ນ ຢ່າງນີ້ພວກເຮົາ ຈຶ່ງຈະຮັບອະທິກຣຕ໌ນີ້ ຫາກພວກ ທ່ານຈະບໍ່ແຈ້ງອະທິກຣຕ໌ນີ້ຕາມທີ່ເກີດແລ້ວ ຕາມທີ່ອຸບັຕິແລ້ວແກ່ພວກເຮົາ ເຫມືອນຢ່າງພວກເຮົາຈະຣະງັບ ອະທິກຣຕ໌ນີ້ໂດຍທັມມ໌ ໂດຍວິນັຍ ແລະໂດຍ ສັຕຖຸສາສນ໌ ແນວໃດ ອະທິກຣຕ໌ນີ້ຈະບໍ່ຣະງັບດ້ວຍດີ ແນວນັ້ນ ພວກເຮົາຈະບໍ່ຮັບອະທິກຣຕ໌ນີ້

ດູຣາພິກຂຸທັ້ງຫຼາຍ ພວກພິກຂຸເຈົ້າຖິ່ນຄວຣຮອບຄອບຢ່າງນີ້ແລ້ວຮັບອະທິກຣຕ໌ນັ້ນໄວ້ ພວກພິກຂຸ ອາຄັນຕຸກະນັ້ນ ຄວຣກ່າວກະພວກພິກຂຸເຈົ້າຖິ່ນວ່າ ພວກຂ້ານ້ອຍຈະແຈ້ງອະທິກຣຕ໌ນີ້ ຕາມທີ່ເກີດແລ້ວ ຕາມທີ່ ອຸບັຕິແລ້ວ ແກ່ທ່ານທັ້ງຫຼາຍ ຖ້າທ່ານສາມາຖຣະງັບອະທິກຣຕ໌ນີ້ ໂດຍທັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ຣະຫວ່າງເວລາເທົ່ານີ້ໄດ້ ອະທິກຣຕ໌ຈະຣະງັບ ດ້ວຍດີເຊັ່ນວ່ານັ້ນ ຢ່າງນີ້ ພວກຂ້ານ້ອຍຈະມອບອະທິກຣຕ໌ແກ່ທ່ານ ທັ້ງຫຼາຍ ຫາກທ່ານທັ້ງຫຼາຍ ບໍ່ສາມາຖຣະງັບອະທິກຣຕ໌ນີ້ໂດຍທັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ຣະຫວ່າງ ເວລາເທົ່ານີ້ໄດ້ ອະທິກຣຕ໌ຈະບໍ່ຣະງັບດ້ວຍດີເຊັ່ນວ່ານັ້ນ ພວກຂ້ານ້ອຍຈະບໍ່ມອບອະທິກຣຕ໌ນີ້ແກ່ທ່ານທັ້ງຫຼາຍ ພວກຂ້ານ້ອຍນີ້ແຫລະຈະເປັນເຈົ້າຂອງອະທິກຣຕ໌ນີ້

ດູຣາພິກຂຸທັ້ງຫຼາຍ ພວກພິກຂຸອາຄັນຕຸກະຄວຣຮອບຄອບຢ່າງນີ້ ແລ້ວຈຶ່ງມອບອະທິກຣຕ໌ນັ້ນແກ່ພວກ ພິກຂຸເຈົ້າຖິ່ນ

ດູຣາພິກຂຸທັ້ງຫຼາຍ ຖ້າພິກຂຸເຫຼົ່ານັ້ນສາມາຖຣະງັບອະທິກຣຕ໌ນັ້ນໄດ້ ນີ້ເອີ້ນວ່າອະທິກຣຕ໌ຣະງັບ ດີແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍ ໃນສັມມຸຂາວິນັຍນັ້ນ ມີຫຍັງແດ່ ມີຄວາມພ້ອມຫນ້າສົງຄ໌ ຄວາມພ້ອມຫນ້າທັມມ໌ ຄວາມພ້ອມຫນ້າວິນັຍ ຄວາມພ້ອມຫນ້າບຸຄຄົລ ...

ດູຣາພິກຂຸທັ້ງຫຼາຍ ຖ້າອະທິກຣຕ໌ຣະງັບແລ້ວຢ່າງນີ້ ຜູ້ທຳຮື້ຟື້ນ ເປັນປາຈິຕຕີຍ໌ ທີ່ຮື້ຟື້ນ ຜູ້ໃຫ້ ສັນທະຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ໗

ອຸພພາຫິກາວິທີ

[໖໓໔] ດູຣາພິກຂຸທັ້ງຫຼາຍ ຖ້າເມື່ອພິກຂຸເຫຼົ່ານັ້ນວິນິຈສັຍອະທິກຣຕ໌ນັ້ນຢູ່ມີສຽງເຊັງແຊ່ເກີດ ຂຶ້ນແລະບໍ່ຮູ້ຄວາມແຫ່ງຄຳເວົ້າທີ່ກ່າວແລ້ວນັ້ນ ເຮົາອນຸຍາຕໃຫ້ ຣະງັບອະທິກຣຕ໌ເຫັນປານນີ້ດ້ວຍ**ອຸພພາຫິກາ**[7]ວິທີ ພິກຂຸຜູ້ປະກອບດ້ວຍອົງຄ໌ຄຸຕ ໑໐ ປະການ ສົງຄ໌ຄວຣສົມມຸຕິດ້ວຍອຸພພາຫິກາວິທີ

---

[7] **ອຸພພາຫິກາ** ກິຣິຍາທີ່ຖອນນຳໄປ, ການເລືອກແຍກອອກໄປ, ຫມາຍເຖິງວິທີຣະງັບວິວາທາທິກຣຕ໌ ໃນກໍຣະນີທີ່ທີ່ປະຊຸມ ສົງຄ໌ມີຄວາມບໍ່ ສະດວກ ດ້ວຍເຫຕຸຢ່າງໃດຢ່າງນຶ່ງສົງຄ໌ຈຶ່ງເລືອກພິກຂຸບາງອົງຄ໌ໃນທີ່ປະຊຸມນັ້ນ ຕັ້ງເປັນຄຕະ ແລ້ວມອບ ເຣື່ອງໃຫ້ນຳເອົາໄປ ວິນິຈສັຍ (ເປັນທຳນອງຕັ້ງຄຕະກັມມການພິເສສ)

ອົງຄ໌ຄຸຓ ໑໐ ປະການ

໑. ເປັນຜູ້ມີສີລ ສຳຮວມໃນປາຕິໂມກຂ໌ສັງວຣ ເຖິງພ້ອມດ້ວຍອາຈາຣະແລະໂຄຈຣ ມີປົກຕິເຫັນກັຍໃນໂທษມີປະມາຓນ້ອຍນຶ່ງ ສມາທານສຶກษາຢູ່ໃນສິກຂາບົທ ທັ້ງຫຼາຍ

໒. ເປັນພຫູສູຕ ທຣົງສຸຕະ ສັ່ງສົມສຸຕະ ຮັມມ໌ເຫຼົ່ານັ້ນໃດມ່ວນ ໃນເບື້ອງຕົ້ນ ທ່າມກາງແລະທີ່ສຸດ ຍ່ອມສັຣເສີລພຣົຫ້ມຈັຣຍ໌ອັນບໍຣິສຸທຮິ໌ບໍຣິບູຣຓ໌ສິ້ນເຊີງ ພ້ອມທັ້ງອັຖພ້ອມທັ້ງພຍັລຊນະຮັມມ໌ທັ້ງຫຼາຍເຫັນປານນີ້ ຍ່ອມເປັນອັນທ່ານຟັງຫຼາຍ ທຣົງໄວ້ ສັ່ງສົມດ້ວຍວາຈາ ເຂົ້າໄປເພ່ງດ້ວຍໃຈແທງຕລອດດີແລ້ວດ້ວຍທິກິ

໓. ຈຳປາຕິໂມກຂ໌ທັ້ງສອງໄດ້ດີໂດຍພິສດາຣ ຈຳແນກດີ ສູຕດີ ວິນິຈລັຍຖືກຕ້ອງໂດຍສູຕຣ໌ໂດຍອນຸພຍັລຊນະ

໔. ເປັນຜູ້ຕັ້ງມັ່ນໃນພຣະວິນັຍ ບໍ່ຄອນແຄນ

໕. ເປັນຜູ້ອາຈຊີ້ແຈງໃຫ້ຄູ່ຕໍ່ສູ້ໃນອທິກຣຓ໌ຍິນຍອມ ເຂົ້າໃຈ ເພ່ງເຫັນ ເລື່ອມໃສ

໖. ເປັນຜູ້ລລາດເພື່ອຍັງອທິກຣຓ໌ອັນເກີດຂຶ້ນໃຫ້ຣະງັບ

໗. ຮູ້ອທິກຣຓ໌

໘. ຮູ້ເຫຕຸເກີດອທິກຣຓ໌

໙. ຮູ້ຄວາມຣະງັບແຫ່ງອທິກຣຓ໌

໑໐. ຮູ້ທາງຣະງັບອທິກຣຓ໌

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ສົມມຸຕິກິກຂຸຜູ້ປະກອບດ້ວຍອົງຄ໌ຄຸຓ ໑໐ ນີ້ ດ້ວຍອຸພພາຫິກາວິຣີ ໗

[໖໗໖] ດູຣາກິກຂຸທັ້ງຫຼາຍ ກໍແລ ສົງຄ໌ຄວຣສົມມຸຕິຢ່າງນີ້ ຄວຣຂໍຮ້ອງກິກຂຸກ່ອນ ຄັ້ນແລ້ວກິກຂຸຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ກັມມວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ເມື່ອພວກເຮົາວິນິຈລັຍອທິກຣຓ໌ນີ້ ຢູ່ ມີສຽງເຊັ່ງແຊ່ເກີດຂຶ້ນແລະບໍ່ຮູ້ອັຖແຫ່ງຄຳເວົ້າທີ່ກ່າວແລ້ວນັ້ນ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຈົ່ງສົມມຸຕິກິກຂຸມີຊື່ນີ້ດ້ວຍ ມີ ມີຊື່ນີ້ດ້ວຍ ເພື່ອຣະງັບອທິກຣຓ໌ນີ້ ດ້ວຍອຸພພາຫິກາວິຣີ ນີ້ເປັນລັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ເມື່ອພວກເຮົາວິນິຈລັຍອທິກຣຓ໌ ນີ້ຢູ່ ມີສຽງເຊັ່ງແຊ່ເກີດຂຶ້ນ ແລະບໍ່ຮູ້ຄວາມແຫ່ງຄຳເວົ້າທີ່ກ່າວ ແລ້ວນັ້ນ ສົງຄ໌ສົມມຸຕິກິກຂຸມີຊື່ນີ້ດ້ວຍ ມີຊື່ນີ້ດ້ວຍ ເພື່ອ

ຣະງັບອະທິກຣະນີ້ ດ້ວຍອຸພພາຫິກາວິທີ ການສົມມຸຕິພິກຂຸມີຊື່ນີ້ດ້ວຍ ມີຊື່ນີ້ດ້ວຍ ເພື່ອຣະງັບອະທິກຣະນີ້ ດ້ວຍອຸພພາຫິກາວິທີ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ພິກຂຸມີຊື່ນີ້ດ້ວຍ ມີຊື່ນີ້ດ້ວຍ ອັນສົງຄ໌ສົມມຸຕິແລ້ວ ເພື່ອຣະງັບອະທິກຣະນີ້ ດ້ວຍອຸພພາຫິກາວິທີ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງ ຄວາມນີ້ໄວ້ ດ້ວຍຢ່າງນີ້ ຯ

[໖໗໗] ດູຣາພິກຂຸທັ້ງຫຼາຍ ຖ້າພິກຂຸເຫຼົ່ານັ້ນສາມາຖຣະງັບອະທິກຣະນັ້ນດ້ວຍອຸພພາຫິກາວິທີນີ້ເອີ້ນວ່າ ອະທິກຣະຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມໜ້າສົງຄ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ ...

ດູຣາພິກຂຸທັ້ງຫຼາຍ ຖ້າອະທິກຣະຣະງັບແລ້ວຢ່າງນີ້ ຜູ້ທຳຮື້ຟື້ນ ເປັນປາຈິຕຕີຍ໌ ທີ່ຮື້ຟື້ນ ຯ

[໖໗໘] ດູຣາພິກຂຸທັ້ງຫຼາຍ ຖ້າເມື່ອພິກຂຸເຫຼົ່ານັ້ນວິນິຈສັຍອະທິກຣະນັ້ນຢູ່ໃນບໍຣິຫັນນັ້ນຄວຣມີພິກຂຸທັມມກຖິກ ທ່ານຈຳສູຕຣ໌ບໍ່ໄດ້ເລີຍ ຈຳວິພັງຄ໌ແຫ່ງສູຕຣ໌ກໍບໍ່ໄດ້ ທ່ານບໍ່ໄດ້ສັງເກຕໃຈຄວາມ ຍ່ອມຄ້ານໃຈຄວາມຕາມເຄົ້າພຍັນຊນະ ພິກຂຸຜູ້ສລາດ ຜູ້ສາມາຖຄວຣປະກາສໃຫ້ພິກຂຸເຫຼົ່ານັ້ນຮູ້ດ້ວຍຄຕະລັຕຕິວ່າດັ່ງນີ້:-

ກັມມວາຈາຄຕະລັຕຕິ

ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ອົງຄ໌ນີ້ເປັນທັມມກຖິກທ່ານຈຳສູຕຣ໌ບໍ່ໄດ້ເລີຍ ຈຳວິພັງຄ໌ແຫ່ງສູຕຣ໌ກໍບໍ່ໄດ້ ທ່ານບໍ່ໄດ້ສັງເກຕ ໃຈຄວາມ ຍ່ອມຄ້ານໃຈຄວາມຕາມເຄົ້າພຍັນຊນະ ຖ້າຄວາມພ້ອມພັ່ງຂອງ ທ່ານທັ້ງຫຼາຍເຖິງທີ່ແລ້ວ ພວກເຮົາຈຶ່ງຂັບພິກຂຸມີຊື່ນີ້ໃຫ້ອອກໄປ ແລ້ວທີ່ເຫລືອຄວຣຣະງັບອະທິກຣະນີ້

ດູຣາພິກຂຸທັ້ງຫຼາຍ ຖ້າພິກຂຸເຫຼົ່ານັ້ນຂັບພິກຂຸນັ້ນອອກໄປແລ້ວສາມາຖຣະງັບອະທິກຣະນັ້ນໄດ້ນີ້ເອີ້ນວ່າ ອະທິກຣະຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມໜ້າສົງຄ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ ...

ດູຣາພິກຂຸທັ້ງຫຼາຍ ຫາກອະທິກຣະຣະງັບແລ້ວຢ່າງນີ້ ຜູ້ທຳຮື້ຟື້ນ ເປັນປາຈິຕຕີຍ໌ທີ່ຮື້ຟື້ນ ຯ

[໖໗໙] ດູຣາພິກຂຸທັ້ງຫຼາຍ ຖ້າເມື່ອພິກຂຸເຫຼົ່ານັ້ນວິນິຈສັຍອະທິກຣະນັ້ນຢູ່ໃນບໍຣິຫັນນັ້ນຄວຣມີພິກຂຸທັມມກຖິກ ທ່ານຈຳສູຕຣໄດ້ ແຕ່ຈຳວິພັງຄ໌ແຫ່ງສູຕຣ໌ບໍ່ໄດ້ເລີຍ ທ່ານບໍ່ສັງເກຕໃຈຄວາມ ຍ່ອມຄ້ານໃຈຄວາມຕາມເຄົ້າພຍັນຊນະ ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ພິກຂຸເຫຼົ່ານັ້ນຮູ້ດ້ວຍຄຕະລັຕຕິວ່າດັ່ງນີ້:-

ກັມມວາຈາຄຕະລັຕຕິ

ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ກິກຂຸມີຊື່ນີ້ອົງຄ໌ນີ້ເປັນສົມມກາຖືກທ່ານຈໍາສູຕຣໄດ້ ແຕ່ຈໍາວິກັງຄ໌ແຫ່ງສູຕຣ໌ບໍ່ໄດ້ເລີຍ ທ່ານບໍ່ສັງເກຕໃຈຄວາມ ຍ່ອມຄ້ານໃຈຄວາມຕາມເຄົ້າພຍັຍຊນະ ຖ້າຄວາມພ້ອມພັ່ງຂອງທ່ານທັ້ງ ຫຼາຍເຖິງທີ່ແລ້ວ ພວກເຮົາຈຶ່ງຂັບກິກຂຸມີຊື່ນີ້ໃຫ້ອອກໄປ ແລ້ວທີ່ເຫລືອຄວຣ ຣະງັບອທິກຣຕນີ້

ດູຣາກິກຂຸທັ້ງຫຼາຍ ຖ້າກິກຂຸເຫຼົ່ານັ້ນຂັບກິກຂຸນັ້ນອອກໄປແລ້ວ ສາມາຖຣະງັບອທິກຣຕນັ້ນໄດ້ນີ້ເອີ້ນວ່າ ອທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ມີຄວາມພ້ອມໜ້າສົງຄ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ ...

ດູຣາກິກຂຸທັ້ງຫຼາຍ ຫາກອທິກຣຕ໌ຣະງັບແລ້ວຢ່າງນີ້ ຜູ້ທໍາຮື້ຟື້ນເປັນປາຈິຕຕີຍ໌ ທີ່ຮື້ຟື້ນ ຯ

[໖໒໐] ດູຣາກິກຂຸທັ້ງຫຼາຍ ຖ້າກິກຂຸເຫຼົ່ານັ້ນບໍ່ສາມາຖຣະງັບອທິກຣຕນັ້ນດ້ວຍອຸພພາຫິກາວິທີພວກທ່ານຄວຣມອບອທິກຣຕ໌ນັ້ນແກ່ສົງຄ໌ວ່າ ທ່ານຂ້ານ້ອຍ ພວກຂ້າພເຈົ້າ ບໍ່ສາມາຖຣະງັບອທິກຣຕ໌ນີ້ດ້ວຍອຸພພາຫິກາວິທີ ຂໍສົງຄ໌ນັ້ນແຫລະຈົ່ງຣະງັບອທິກຣຕ໌ນີ້

ດູຣາກິກຂຸທັ້ງຫຼາຍ ເຮົາອນຸຍາຕ ໃຫ້ຣະງັບອທິກຣຕ໌ເຫັນປານນີ້ດ້ວຍເຢກຸຍຍສິກາຈຶ່ງສົມມຸຕິກິກຂຸຜູ້ປະກອບດ້ວຍອົງຄ໌ຄຸຕ ໕ ໃຫ້ເປັນຜູ້ໃຫ້ຈັບສລາກ ຄື

໑. ບໍ່ເຖິງຄວາມລໍາອຽງເພາະຄວາມຊອບພໍ

໒. ບໍ່ເຖິງຄວາມລໍາອຽງເພາະຄວາມບໍ່ມັກ

໓. ບໍ່ເຖິງຄວາມລໍາອຽງເພາະຄວາມງົມງາຍ

໔. ບໍ່ເຖິງຄວາມລໍາອຽງເພາະຄວາມຢ້ານ ແລະ

໕. ພຶງຮູ້ຈະສລາກທີ່ຈັບແລ້ວແລະຍັງບໍ່ຈັບ

ກໍແລ ສົງຄ໌ຄວຣສົມມຸຕິຢ່າງນີ້ ຄວຣຂໍຮ້ອງກິກຂຸກ່ອນ ຄັ້ນແລ້ວກິກຂຸຜູ້ສລາດຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ກັມມວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພັ່ງຂອງສົງຄ໌ ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິກິກຂຸມີຊື່ນີ້ ໃຫ້ເປັນຜູ້ໃຫ້ຈັບສລາກ ນີ້ເປັນລັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສົງຄ໌ສົມມຸຕິກິກຂຸມີຊື່ນີ້ ໃຫ້ເປັນຜູ້ໃຫ້ຈັບສລາກ ການສົມມຸຕິກິກຂຸມີຊື່ນີ້ ໃຫ້ເປັນຜູ້ໃຫ້ຈັບສລາກ ຖືກແກ່ ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ພິກຂຸມີຊື່ນີ້ອັນສົງຄ໌ສົມມຸຕິແລ້ວ ໃຫ້ເປັນຜູ້ໃຫ້ຈັບລລາກ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້

ພິກຂຸຜູ້ໃຫ້ຈັບລລາກນັ້ນຄວຣໃຫ້ພິກຂຸທັ້ງຫຼາຍຈັບລລາກ ພິກຂຸພວກສົມມວາທີຫຼາຍກວ່າ ຍ່ອມກ່າວ ແນວໃດ ຄວຣຣະງັບອະທິກຣຕ໌ນັ້ນ ແນວນັ້ນ ນີ້ເອີ້ນວ່າ ອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາ ວິນັຍ ແລະເຢກຸຍຍສິກາ ໃນສັມມຸຂາວິນັຍນັ້ນມີ ຫຍັງແດ່ ມີຄວາມພ້ອມຫນ້າສົງຄ໌ ຄວາມພ້ອມຫນ້າສັມມ໌ ຄວາມພ້ອມຫນ້າວິນັຍ ຄວາມພ້ອມຫນ້າບຸຄຄົລ

ກໍຄວາມພ້ອມຫນ້າສົງຄ໌ ໃນສັມມຸຂາວິນັຍນັ້ນແນວໃດ ຄື ພິກຂຸຜູ້ເຂົ້າກັມມ໌ມີຈຳນວນເທົ່າໃດ ພິກຂຸເຫຼົ່ານັ້ນມາປະຊຸມກັນ ນຳສັນທະຂອງຜູ້ຄວຣສັນທະມາ ຜູ້ຢູ່ພ້ອມຫນ້າກັນບໍ່ຄັດຄ້ານ ນີ້ຊື່ວ່າຄວາມ ພ້ອມຫນ້າສົງຄ໌ ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມຫນ້າສັມມ໌ ຄວາມພ້ອມຫນ້າວິນັຍ ໃນສັມມຸຂາວິນັຍນັ້ນແນວໃດ ຄື ອະທິກຣຕ໌ນັ້ນ ຣະງັບໂດຍສັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ໃດ ນີ້ຊື່ວ່າ ຄວາມພ້ອມຫນ້າສັມມ໌ ຄວາມພ້ອມຫນ້າ ວິນັຍ ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມຫນ້າບຸຄຄົລ ໃນສັມມຸຂາວິນັຍນັ້ນແນວໃດ ຄືໂຈທກ໌ແລະຈຳເລີຍ ທັ້ງສອງ ເປັນຄູ່ ຕໍ່ສູ້ໃນຄດີຢູ່ພ້ອມຫນ້າກັນ ນີ້ຊື່ວ່າຄວາມພ້ອມຫນ້າບຸຄຄົລ ໃນສັມມຸຂາວິນັຍນັ້ນ

ກໍໃນເຢກຸຍຍສິການັ້ນມີຫຍັງແດ່ ມີກິຣິຍາ ຄວາມກະທຳ ຄວາມເຂົ້າໄປ ຄວາມເຂົ້າໄປຈະເພາະ ຄວາມ ຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ໃນເຢກຸຍຍສິກາອັນໃດ ນີ້ມີໃນເຢກຸຍຍສິການັ້ນ

ດູຣາພິກຂຸທັ້ງຫຼາຍ ຫາກອະທິກຣຕ໌ຣະງັບຢ່າງນີ້ ຜູ້ທຳຣື້ຟື້ນເປັນປາຈິຕຕີຍ໌ທີ່ຣື້ຟື້ນ ຜູ້ໃຫ້ສັນທະ ຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ຯ

ວິທີຈັບລລາກ ໓ ວິທີ

[໕໗໑] ໂດຍສມັຍນັ້ນແລ ອະທິກຣຕ໌ເກີດແລ້ວຢ່າງນີ້ ອຸບັຕິແລ້ວຢ່າງນີ້ ໃນພຣະນຄຣສາວັຕຖີ ຈຶ່ງພິກຂຸເຫຼົ່ານັ້ນບໍ່ພໍໃຈດ້ວຍການຣະງັບອະທິກຣຕ໌ຂອງສົງຄ໌ ໃນພຣະນຄຣສາວັຕຖີ ໄດ້ຮູ້ຂ່າວວ່າ ໃນ ອາວາສໂນ້ນ ມີພຣະເຖຣະຢູ່ຫຼາຍອົງຄ໌ ເປັນຜູ້ຄົງແກ່ຮຽນ ຊຳນານໃນຄັມພີຣ໌ ທຣົງສັມມ໌ ທຣົງວິນັຍ ທຣົງມາຕິກາ ລລາດ ລຽບແຫຼມ ມີປັນຍາ ເປັນລັຊຊີ ມີຄວາມບໍ່ມັກ ພໍໃຈຕໍ່ສິກຂາ ຫາກພຣະເຖຣະ ເຫຼົ່ານັ້ນຄວຣຣະງັບ ອະທິກຣຕ໌ນີ້ໂດຍສັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ຢ່າງນີ້ອະທິກຣຕ໌ນີ້ຄວຣຣະງັບ ດ້ວຍດີ ຈຶ່ງໄປສູ່ອາວາສນັ້ນ ແລ້ວຮຽນກັບພຣະເຖຣະພວກນັ້ນວ່າ ທ່ານຂ້ານ້ອຍ ອະທິກຣຕ໌ນີ້ ເກີດແລ້ວຢ່າງນີ້ ອຸບັຕິແລ້ວຢ່າງນີ້ ຂໍໂອກາສ ຂ້ານ້ອຍ ຂໍພຣະເຖຣະທັ້ງຫຼາຍຈົ່ງຣະງັບອະທິກຣຕ໌ນີ້ ໂດຍສັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ຕາມວິທີທາງທີ່ອະທິກຣຕ໌ນີ້ຄວຣຣະງັບດ້ວຍດີ

ຈຶ່ງພຣະເຖຣະພວກນັ້ນຊ່ວຍຣະງັບອະທິກຣະນັ້ນແລ້ວ ເຫມືອນຢ່າງທີ່ສົງຄ໌ໃນພຣະນຄຣສາວັຕຖີຣະງັບແລ້ວ ຕາມວິທີທີ່ຣະງັບດ້ວຍດີແລ້ວດັ່ງນັ້ນ ຄັ້ງນັ້ນ ພິກຂຸຜູ້ບໍ່ຍິນດີ ບໍ່ພໍໃຈດ້ວຍການຣະງັບອະທິກຣະຂອງສົງຄ໌ໃນພຣະນຄຣສາວັຕຖີນັ້ນ ບໍ່ພໍໃຈດ້ວຍການ ຣະງັບອະທິກຣະຂອງພຣະເຖຣະມາກອົງຄ໌ ໄດ້ຮູ້ຂ່າວວ່າ ໃນອາວາສໂນ້ນ ມີພຣະເຖຣະຢູ່ ໓ ອົງຄ໌ ... ມີພຣະເຖຣະຢູ່ ໒ ອົງຄ໌ ... ມີພຣະເຖຣະຢູ່ອົງຄ໌ດຽວ ເປັນຜູ້ຄົງແກ່ຮຽນຊຳນານ ໃນຄັມພີຣ໌ ທຣົງທັມມ໌ ທຣົງວິນັຍ ທຣົງມາຕິກາ ສລາດ ສຸຂຸມ ມີປັນຍາ ເປັນລັຊຊີມີຄວາມບໍ່ມັກ ພໍໃຈຕໍ່ສິກຂາ ຫາກພຣະເຖຣະນັ້ນຄວຣຣະງັບອະທິກຣະນີ້ໂດຍທັມມ໌ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ຢ່າງນີ້ ອະທິກຣະນີ້ຄວຣຣະງັບດ້ວຍດີ ຈຶ່ງໄປສູ່ອາວາສນັ້ນ ແລ້ວຮຽນກັບພຣະເຖຣະນັ້ນວ່າ ທ່ານຂ້ານ້ອຍ ອະທິກຣະນີ້ເກີດແລ້ວຢ່າງນີ້ ອຸບັຕິແລ້ວຢ່າງນີ້ ຂໍໂອກາສ ຂ້ານ້ອຍ ຂໍພຣະເຖຣະຈົ່ງຣະງັບອະທິກຣະນີ້ ໂດຍທັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ ຕາມວິທີທາງທີ່ອະທິກຣະນີ້ຈະຄວຣຣະງັບດ້ວຍດີ

ຈຶ່ງພຣະເຖຣະນັ້ນຊ່ວຍຣະງັບອະທິກຣະນັ້ນແລ້ວ ເຫມືອນຢ່າງທີ່ສົງຄ໌ໃນພຣະນຄຣສາວັຕຖີຣະງັບແລ້ວ ເຫມືອນຢ່າງທີ່ພຣະເຖຣະມາກອົງຄ໌ຣະງັບແລ້ວ ເຫມືອນຢ່າງທີ່ພຣະເຖຣະ ໓ ອົງຄ໌ຣະງັບແລ້ວ ແລະເຫມືອນຢ່າງທີ່ພຣະເຖຣະ ໒ ອົງຄ໌ຣະງັບແລ້ວ ຕາມວິທີທີ່ຣະງັບດ້ວຍ ດີແລ້ວ ດັ່ງນັ້ນ

ຄັ້ງນັ້ນ ພິກຂຸຜູ້ທີ່ບໍ່ພໍໃຈດ້ວຍການຣະງັບອະທິກຣະຂອງສົງຄ໌ໃນພຣະນຄຣສາວັຕຖີ ບໍ່ພໍໃຈດ້ວຍການຣະງັບອະທິກຣະຂອງພຣະເຖຣະມາກອົງຄ໌ ບໍ່ພໍໃຈດ້ວຍການຣະງັບອະທິກຣະ ຂອງພຣະເຖຣະ ໓ ອົງຄ໌ ບໍ່ພໍໃຈດ້ວຍການຣະງັບອະທິກຣະຂອງພຣະເຖຣະ ໒ ອົງຄ໌ ບໍ່ພໍໃຈ ດ້ວຍການຣະງັບອະທິກຣະຂອງພຣະເຖຣະອົງຄ໌ດຽວ ຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ແລ້ວ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄໆ ຕຣັສວ່າ

ດູຣາພິກຂຸທັ້ງຫຼາຍ ອະທິກຣະທີ່ພິຈາຣະນາແລ້ວນັ້ນເປັນອັນສງົບຣະງັບດີແລ້ວ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕວິທີຈັບສລາກ ໓ ຢ່າງ ຄື ປົກປິດ ໑ ຊື່ມບອກ ໑ ເປີດເຜີຍ ໑ ຕາມຄວາມຍິນຍອມຂອງພິກຂຸພວກນັ້ນ

ດູຣາພິກຂຸທັ້ງຫຼາຍ ກໍວິທີຈັບສລາກປົກປິດ ເປັນແບບໃດ

ພິກຂຸຜູ້ໃຫ້ຈັບສລາກນັ້ນຄວຣເຮັດສລາກໃຫ້ມີສີ ແລະບໍ່ມີສີ ແລ້ວເຂົ້າໄປຫາ ພິກຂຸທີລະອົງຄ໌ໆ ແລ້ວແນະນຳຢ່າງນີ້ວ່າ ນີ້ສລາກຂອງຜູ້ກ່າວຢ່າງນີ້ ນີ້ສລາກຂອງຜູ້ ກ່າວຢ່າງນີ້ ທ່ານຈົ່ງຈັບສລາກທີ່ພໍໃຈ ເມື່ອພິກຂຸນັ້ນຈັບແລ້ວ ຄວຣແນະນຳວ່າ ທ່ານຢ່າສແດງແກ່ໃຜໆ ຖ້າຮູ້ວ່າອະທັມມວາທີຫຼາຍກວ່າ ຄວຣບອກວ່າ ສລາກຈັບບໍ່ດີແລ້ວໃຫ້ຈັບໃຫມ່ ຖ້າຮູ້ວ່າທັມມວາທີຫຼາຍກວ່າ ຄວຣປະກາສວ່າ ສລາກຈັບດີແລ້ວ ດູຣາພິກຂຸທັ້ງຫຼາຍ ວິທີຈັບສລາກປົກປິດເປັນຢ່າງນີ້ແຫລະ

ດູຣາພິກຂຸທັ້ງຫຼາຍ ກໍວິທີຈັບສລາກຊື່ມບອກ ເປັນແບບໃດ

ກິກຂຸຜູ້ໃຫ້ຈັບສລາກນັ້ນ ຄວຣຊື່ມບອກທີ່ໃກ້ຫູຂອງກິກຂຸແຕ່ລະອົງຄ໌ໆ ວ່າ ນີ້ສລາກຂອງຜູ້ກ່າວຢ່າງນີ້ ນີ້ສລາກຂອງຜູ້ກ່າວຢ່າງນີ້ ທ່ານຈົງຈັບສລາກທີ່ພໍໃຈເມື່ອກິກຂຸນັ້ນຈັບແລ້ວ ຄວຣແນະນຳວ່າ ທ່ານຢ່າບອກແກ່ໃຜໆ ຖ້າຮູ້ວ່າ ອະັມມວາທີ ຫຼາຍກວ່າ ຄວຣບອກວ່າ ສລາກຈັບບໍ່ດີແລ້ວໃຫ້ຈັບໃໝ່ ຖ້າຮູ້ວ່າທັມມວາທີຫຼາຍກວ່າ ຄວຣປະກາສວ່າ ສລາກຈັບດີແລ້ວ ດູຣາກິກຂຸທັ້ງຫຼາຍ ວິທີຈັບສລາກຊື່ມບອກເປັນຢ່າງນີ້ແຫລະ

ດູຣາກິກຂຸທັ້ງຫຼາຍ ກໍວິທີຈັບສລາກເປີດເຜີຍ ເປັນແບບໃດ

ຖ້າຮູ້ວ່າທັມມວາທີຫຼາຍກວ່າ ຄວຣໃຫ້ຈັບສລາກເປີດເຜີຍ ຢ່າງແຈ່ມແຈ້ງ ວິທີຈັບສລາກເປີດເຜີຍເປັນຢ່າງນີ້ແຫລະ

ດູຣາກິກຂຸທັ້ງຫຼາຍ ວິທີຈັບສລາກ ໓ ຢ່າງນີ້ແລ ໆ

ອນຸວາທາທິກຣຕ໌ຣະງັບດ້ວຍສມຖະ ໔ ຢ່າງ

[໖໗໔] ອນຸວາທາທິກຣຕ໌ຍ່ອມຣະງັບດ້ວຍສມຖະເທົ່າໃດ

ອນຸວາທາທິກຣຕ໌ຍ່ອມຣະງັບດ້ວຍສມຖະ ໔ ຄື ສັມມຸຂາວິນັຍ ໑ ສຕິວິນັຍ ໑ ອມູລຫວິນັຍ ໑ ຕັສສປາປິຍສິກາ ໑ ໆ

[໖໗໓] ບາງທີອນຸວາທາທິກຣຕ໌ ບໍ່ອາສັຍສມຖະ ໔ ຢ່າງ ຄື ອມູລຫວິນັຍ ໑ ຕັສສປາປິຍສິກາ ໑ ຣະງັບດ້ວຍສມຖະ ໔ ຢ່າງ ຄື ສັມມຸຂາວິນັຍ ໑ ສຕິ ວິນັຍ ໑ ບາງທີຄວຣຕົກລົງກັນໄດ້ ສົມຈິງດັ່ງທີ່ຕຣັສໄວ້ວ່າ ດູຣາກິກຂຸທັ້ງຫຼາຍ ກໍກິກຂຸ ທັ້ງຫຼາຍໃນທັມມ໌ວິນັຍນີ້ ໂຈທກິກຂຸດ້ວຍສີລວິບັຕິອັນບໍ່ມີມູລ ສົງຄ໌ຄວຣໃຫ້ສຕິວິນັຍແກ່ກິກຂຸນັ້ນ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິຢູ່ແລ້ວ ກໍແລ ສົງຄ໌ຄວຣໃຫ້ສຕິວິນັຍຢ່າງນີ້

ວິທີໃຫ້ສຕິວິນັຍ

ກິກຂຸນັ້ນຄວຣເຂົ້າໄປຫາສົງຄ໌ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ໄຫວ້ຕີນກິກຂຸຜູ້ແກ່ກວ່າ ນັ່ງຫຍ່ອງຍໍ້ປະຄອງອັນຊລີ ແລ້ວກ່າວຄຳຂໍວ່າດັ່ງນີ້:-

ຄຳຂໍສຕິວິນັຍ

ທ່ານຂ້ານ້ອຍ ກິກຂຸທັ້ງຫຼາຍຍ່ອມໂຈທຂ້າພເຈົ້າດ້ວຍສີລວິບັຕິ ອັນບໍ່ມີມູລ ທ່ານຂ້ານ້ອຍ ຂ້າພເຈົ້ານັ້ນເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງຄ໌

ຄວຣຂໍແມ້ຄັ້ງທີ່ສອງ ຄວຣຂໍແມ້ຄັ້ງທີ່ສາມ ໆ

[໖໗໕] ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິ ຈຕຸຕຖກັມມວາຈາ ວ່າດັ່ງນີ້:-

ກັມມວາຈາໃຫ້ສຕິວິນັຍ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ກິກຂຸທັ້ງຫຼາຍຍ່ອມໂຈທກິກຂຸ ມີຊື່ນີ້ ດ້ວຍສີລວິບັຕິອັນບໍ່ມີມູລ ທ່ານເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງຄ໌ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣໃຫ້ສຕິວິນັຍ ແກ່ກິກຂຸມີຊື່ນີ້ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ນີ້ເປັນຍັດຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ກິກຂຸທັ້ງຫຼາຍຍ່ອມໂຈທກິກຂຸ ມີຊື່ນີ້ ດ້ວຍສີລວິບັຕິອັນບໍ່ມີມູລ ທ່ານເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຂໍສຕິວິນັຍກັບສົງຄ໌ ສົງຄ໌ໃຫ້ສຕິວິນັຍແກ່ກິກຂຸມີຊື່ນີ້ ຜູ້ເຖິງຄວາມໄພບູລຍ໌ແຫ່ງ ສຕິແລ້ວ ກາຣໃຫ້ສຕິວິນັຍແກ່ກິກຂຸມີຊື່ນີ້ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສາມ ...

ສຕິວິນັຍອັນສົງຄ໌ ໃຫ້ແລ້ວແກ່ກິກຂຸມີຊື່ນີ້ ຜູ້ເຖິງຄວາມໄພບູລຍ໌ແຫ່ງສຕິແລ້ວ ຖືກແກ່ສົງຄ໌ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍ ຢ່າງນີ້

ດູຣາກິກຂຸທັ້ງຫຼາຍ ນີ້ເອີ້ນວ່າ ອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງດ້ວຍສັມມຸຂາວິນັຍກັບສຕິວິນັຍ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມໜ້າສົງຄ໌ ຄວາມພ້ອມໜ້າທັມມ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ ...

ກໍຄວາມພ້ອມໜ້າບຸຄຄົລໃນສັມມຸຂາວິນັຍນັ້ນແນວໃດ ຄື ໂຈທກ໌ແລະຈໍາເລີຍທັ້ງສອງເປັນຄູ່ຕໍ່ສູ້ໃນຄດີຢູ່ພ້ອມໜ້າກັນ ນີ້ຊື່ວ່າ ຄວາມພ້ອມໜ້າບຸຄຄົລ ໃນສັມມຸຂາວິນັຍນັ້ນ

ໃນສຕິວິນັຍນັ້ນມີຫຍັງແດ່ ມີກິຣິຍາ ຄວາມກະທໍາ ຄວາມເຂົ້າໄປ ຄວາມເຂົ້າໄປຈະເພາະ ຄວາມຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ ຄືສຕິວິນັຍອັນໃດ ນີ້ມີໃນສຕິວິນັຍນັ້ນ

ດູຣາກິກຂຸທັ້ງຫຼາຍ ຫາກອະທິກຣຕ໌ຣະງັບແລ້ວຢ່າງນີ້ ຜູ້ທໍາຮື້ຟື້ນ ເປັນປາຈິຕຕີຍ໌ທີ່ຮື້ຟື້ນ ຜູ້ໃຫ້ຈັນທະຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ๆ

[໖໗໕] ບາງທີອນຸວາທາທິກຣຕ໌ບໍ່ອາສັຍສມຖະ ໔ ຢ່າງ ຄື ສຕິວິນັຍ ໑ ຕັສສປາປິຍສິກາ ໑ ຄວຣຣະງັບດ້ວຍສມຖະ ໔ ຢ່າງ ຄື ສັມມຸຂາວິນັຍ ໑ ອມູຄຫວິນັຍ ໑ ບາງທີຄວຣຕົກລົງກັນໄດ້ ສົມຈິງດັ່ງທີ່ຕຣັສໄວ້ວ່າ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນທັມມ໌ວິນັຍນີ້ ວິກົລຈຣິຕ ມີຈິຕແປຼປ່ວນ ໄດ້ ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມ ທໍາດ້ວຍກາຍ ກິກຂຸທັ້ງຫຼາຍຍ່ອມໂຈທ

ທ່ານດ້ວຍອາບັຕິທີ່ທ່ານວິກົລຈຣິຕ ມີຈິຕແປຼປວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດ ກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງໄດ້ທຳສິ່ງນີ້ແລ້ວ ກິກຂຸທັ້ງຫຼາຍຜູ້ອັນທ່ານກ່າວຢູ່ແມ້ ຢ່າງນັ້ນ ກໍຍັງໂຈທທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້

ດູຣາກິກຂຸທັ້ງຫຼາຍ ສົງຄ໌ຄວຣໃຫ້ອມູລຫວິນັຍແກ່ກິກຂຸນັ້ນ ຜູ້ຫາຍຫລົງແລ້ວ ກໍແລ ສົງຄ໌ຄວຣໃຫ້ອມູລຫວິນັຍຢ່າງນີ້ ກິກຂຸນັ້ນຄວຣເຂົ້າໄປຫາສົງຄ໌ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ໄຫວ້ຕີນກິກຂຸຜູ້ແກ່ກວ່າ ນັ່ງຫຢ່ອງຢໍ້ປະຄອງອັຌຊລີ ແລ້ວກ່າວຄຳຂໍ ວ່າດັ່ງນີ້:-

ຄຳຂໍອມູລຫວິນັຍ

ທ່ານຂ້ານ້ອຍ ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ກິກຂຸທັ້ງຫຼາຍໂຈທຂ້າພເຈົ້າ ດ້ວຍອາບັຕິທີ່ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປວນ ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ຂ້າພເຈົ້າກ່າວກະ ກິກຂຸພວກນັ້ນຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້າພເຈົ້າວິກົລຈຣິຕ ມີຈິຕແປຼປວນໄດ້ປະພຶຕ ລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້າພເຈົ້າຣະລຶກອາບັຕິນັ້ນບໍ່ໄດ້ ຂ້າພເຈົ້າຫລົງໄດ້ທຳສິ່ງນີ້ແລ້ວ ກິກຂຸທັ້ງຫຼາຍຜູ້ອັນຂ້າພເຈົ້າກ່າວຢູ່ແມ້ຢ່າງນັ້ນ ກໍຍັງໂຈທຂ້າພເຈົ້າຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານຂ້ານ້ອຍຂ້າພເຈົ້ານັ້ນຫາຍຫລົງແລ້ວ ຂໍອມູລຫວິນັຍກັບສົງຄ໌

ຄວຣຂໍແມ້ຄັ້ງທີ່ສອງ ຄວຣຂໍແມ້ຄັ້ງທີ່ສາມ ໆ

[໖໘໖] ກິກຂຸຜູ້ຌລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຌັຕຕິຈຕຸຕຖກັມມວາຈາ ວ່າດັ່ງນີ້:-

ກັມມວາຈາໃຫ້ອມູລຫວິນັຍ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ກິກຂຸມີຊື່ນີ້ອົງຄ໌ນີ້ ວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ກິກຂຸທັ້ງຫຼາຍໂຈທທ່ານ ດ້ວຍອາບັຕິທີ່ທ່ານວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົ່ງຣະລຶກອາບັຕິເຫັນປານນີ້ ທ່ານກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດກິຈອັນ ບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະ

ພຍາຍາມທຳດ້ວຍ ກາຍ ຂ້ານ້ອຍຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງໄດ້ທຳສິ່ງນີ້ແລ້ວ ກິກຂຸທັ້ງຫຼາຍຜູ້ອັນທ່ານກ່າວຢູ່ແມ້ຢ່າງນັ້ນ ກໍຍັງໂຈທທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົງຣະລຶກອາບັຕິເຫັນປານນີ້ ທ່ານຫາຍຫລົງແລ້ວ ຂໍອມູລຫວິນັຍກັບສົງຄ໌ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣໃຫ້ອມູລຫວິນັຍແກ່ກິກຂຸມີຊື່ນີ້ ຜູ້ຫາຍຫລົງແລ້ວ ນີ້ເປັນຍັດຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົງຟັງຂ້າພເຈົ້າ ກິກຂຸມີຊື່ນີ້ອົງຄ໌ນີ້ ວິກົລຈຣິຕມີຈິຕແປຼປວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ກິກຂຸທັ້ງຫຼາຍໂຈທທ່ານດ້ວຍ ອາບັຕິທີ່ທ່ານວິກົລຈຣິຕ ມີຈິຕແປຼປວນປະພຶຕລະເມີດຕ້ອງແລ້ວວ່າ ທ່ານຕ້ອງອາບັຕິແລ້ວ ຈົງຣະລຶກອາບັຕິເຫັນປານນີ້ ທ່ານກ່າວຢ່າງນີ້ວ່າ ທ່ານທັ້ງຫຼາຍ ຂ້ານ້ອຍວິກົລຈຣິຕ ມີຈິຕແປຼປວນ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣແກ່ສມຓະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາແລະພຍາຍາມທຳດ້ວຍກາຍ ຂ້ານ້ອຍຣະລຶກອາບັຕິນັ້ນບໍ່ໄດ້ ຂ້ານ້ອຍຫລົງໄດ້ທຳສິ່ງນີ້ແລ້ວ ກິກຂຸທັ້ງຫຼາຍຜູ້ອັນທ່ານກ່າວຢູ່ແມ້ຢ່າງນັ້ນ ກໍຍັງໂຈທທ່ານຢູ່ຕາມເດີມວ່າ ທ່ານຕ້ອງອາບັຕິແລ້ວ ຈົງຣະລຶກອາບັຕິເຫັນປານນີ້ ທ່ານຫາຍຫລົງແລ້ວ ຂໍອມູລຫວິນັຍກັບສົງຄ໌ ສົງຄ໌ໃຫ້ອມູລຫວິນັຍແກ່ກິກຂຸມີຊື່ນີ້ ຜູ້ຫາຍຫລົງແລ້ວ ຄວຣແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສາມ ...

ອມູລຫວິນັຍອັນສົງຄ໌ໃຫ້ແລ້ວ ແກ່ກິກຂຸມີຊື່ນີ້ ຜູ້ຫາຍຫລົງແລ້ວຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້

ດູຣາກິກຂຸທັ້ງຫຼາຍ ນີ້ເອີ້ນວ່າອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍກັບອມູລຫວິນັຍ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມໜ້າສົງຄ໌ ຄວາມພ້ອມ ໜ້າທັມມ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ ...

ໃນອມູລຫວິນັຍນັ້ນ ມີຫຍັງແດ່ ມີກິຣິຍາ ຄວາມກະທຳ ຄວາມເຂົ້າໄປ ຄວາມເຂົ້າໄປຈະເພາະ ຄວາມຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ ຄືອມູລຫວິນັຍອັນໃດ ນີ້ມີໃນອມູລຫວິນັຍນັ້ນ

ດູຣາກິກຂຸທັ້ງຫຼາຍ ຫາກອະທິກຣຕ໌ຣະງັບແລ້ວຢ່າງນີ້ ຜູ້ທຳຮື້ຟື້ນ ເປັນປາຈິຕຕີຍ໌ທີ່ຮື້ຟື້ນ ຜູ້ໃຫ້ສັນທະຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ๗

[໖໘໗] ບາງທີ ອນຸວາທາທິກຣຕ໌ບໍ່ອາສັຍສມຖະ ໔ ຢ່າງ ຄື ສຕິວິນັຍ ໑ ອມູລຫວິນັຍ ໑ ຄວຣຣະງັບດ້ວຍອສມຖະ ໔ ຢ່າງ ຄື ສັມມຸຂາວິນັຍ ໑ ຕັສສປາປິຍສິກາ ໑ ບາງທີຄວຣຕົກລົງກັນໄດ້ ສົມຈິງດັ່ງທີ່ຕຣັສໄວ້ວ່າ

ດູຣາກິກຂຸທັ້ງຫຼາຍ ກໍກິກຂຸໃນສັມມ໌ວິນັຍນີ້ ໂຈທກິກຂຸດ້ວຍຄຣຸກາບັຕິໃນທ່າມກາງສົງຆ໌ວ່າ ທ່ານຕ້ອງຄຣຸກາບັຕິ ຄືອາບັຕິປາຣາຊິກ ຫຼືອາບັຕິທີ່ໃກ້ປາຣາຊິກແລ້ວ ຈົງຣະລຶກອາບັຕິເຫັນປານນີ້

ກິກຂຸຈຳເລີຍນັ້ນກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຣະລຶກບໍ່ໄດ້ເລີຍວ່າ ຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກ ຫຼືອາບັຕິໃກ້ປາຣາຊິກ

ກິກຂຸຜູ້ໂຈທກ໌ນັ້ນ ຍ່ອມຄາດຄັ້ນກິກຂຸຈຳເລີຍນັ້ນທັ່ນຜູ້ຊ່ອຍຕົນຢູ່ວ່າ ເອົາຖ້ອນ ທ່ານຈົງຮູ້ດ້ວຍດີ ຖ້າທ່ານຣະລຶກໄດ້ວ່າຕ້ອງຄຣຸກາບັຕິເຫັນປານນີ້ຄືອາບັຕິປາຣາຊິກ ຫຼືອາບັຕິ ທີ່ໃກ້ປາຣາຊິກ

ກິກຂຸຈຳເລີຍນັ້ນກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຣະລຶກບໍ່ໄດ້ວ່າ ຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກ ຫຼືອາບັຕິໃກ້ປາຣາຊິກ ແຕ່ຣະລຶກໄດ້ວ່າ ຕ້ອງອາບັຕິແມ້ນ້ອຍນຶ່ງເຫັນປານນີ້

ກິກຂຸຜູ້ໂຈທກ໌ນັ້ນ ຍ່ອມຄາດຄັ້ນກິກຂຸຈຳເລີຍນັ້ນທັ່ນຜູ້ຊ່ອຍຕົນຢູ່ວ່າ ເອົາຖ້ອນທ່ານຈົງຮູ້ດ້ວຍດີຖ້າທ່ານຣະລຶກໄດ້ວ່າ ຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກ ຫຼື ອາບັຕິທີ່ໃກ້ປາຣາຊິກ

ກິກຂຸຈຳເລີຍນັ້ນກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຕ້ອງອາບັຕິນ້ອຍນຶ່ງຊື່ນີ້ ຂ້ານ້ອຍບໍ່ຖືກຖາມ ກໍປຕິຍາຓຂ້ານ້ອຍຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກຫຼືອາບັຕິທີ່ໃກ້ປາຣາຊິກ ຂ້ານ້ອຍຖືກຖາມແລ້ວຈະບໍ່ປຕິຍາຓບໍ່

ກິກຂຸຜູ້ໂຈທກ໌ນັ້ນກ່າວຢ່າງນີ້ວ່າ ທ່ານ ກໍທ່ານຕ້ອງອາບັຕິແມ້ນ້ອຍນຶ່ງຊື່ນີ້ ທ່ານບໍ່ຖືກຖາມແລ້ວຈະບໍ່ປຕິຍາຓ ກໍທ່ານຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກ ຫຼືອາບັຕິທີ່ໃກ້ປາຣາຊິກ ທ່ານບໍ່ຖືກຖາມແລ້ວຈະປຕິຍາຓບໍ່ ເອົາຖ້ອນ ທ່ານຈົງຮູ້ດ້ວຍດີ ຖ້າທ່ານຣະລຶກໄດ້ວ່າຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກ ຫຼືອາບັຕິທີ່ໃກ້ປາຣາຊິກ

ກິກຂຸຈຳເລີຍນັ້ນກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຣະລຶກໄດ້ວ່າ ຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາ-ຣາຊິກຫຼືອາບັຕິທີ່ໃກ້ປາຣາຊິກ ຄຳນັ້ນຂ້ານ້ອຍເວົ້າຫຼິ້ນ ຄຳນັ້ນຂ້ານ້ອຍເວົ້າບໍ່ດີໄປຂ້ານ້ອຍຣະລຶກບໍ່ໄດ້ວ່າ ຕ້ອງຄຣຸກາບັຕິເຫັນປານນີ້ ຄືອາບັຕິປາຣາຊິກ ຫຼືອາບັຕິທີ່ໃກ້ປາຣາຊິກ

ດູຣາກິກຂຸທັ້ງຫຼາຍ ສົງຆ໌ຄວຣເຮັດຕັສສປາປິຍສິກາກັມມ໌ນັ່ນແກ່ກິກຂຸນັ້ນແລ ຯ

ວິທີທຳຕັສສປາປິຍສິກາກັມມ໌

[໖໘໘] ດູຣາກິກຂຸທັ້ງຫຼາຍ ກໍແລ ສົງຆ໌ຄວຣເຮັດຕັສສປາປິຍສິກາກັມມ໌ຢ່າງນີ້ ກິກຂຸຜູ້ຉລາດຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິຈຕຸຕຖກັມມວາຈາ ວ່າດັ່ງນີ້:-

ກັມມວາຈາທຳຕັສສປາປິຍສິກາ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ອົງຄ໌ນີ້ ຖືກຊັກຖາມເຖິງຄຣຸກາບັຕິໃນທ່າມກາງສົງຄ໌ ປຕິເສຮແລ້ວປຕິຍາຕາ ປຕິຍາຕາແລ້ວປຕິເສຮ ໃຫ້ການກັບໄປກັບມາ ກ່າວເທັຈທັ້ງທີ່ຮູ້ ຖ້າຄວາມພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣເຮັດຕັສສປາປິຍສິກາກັມມ໌ແກ່ພິກຂຸມີຊື່ນີ້ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ອົງຄ໌ນີ້ ຖືກຊັກຖາມເຖິງຄຣຸກາບັຕິໃນທ່າມກາງສົງຄ໌ ປຕິເສຮແລ້ວປຕິຍາຕາ ປຕິຍາຕາແລ້ວປຕິເສຮ ໃຫ້ການກັບໄປກັບມາ ກ່າວເທັຈທັ້ງທີ່ຮູ້ ສົງຄ໌ທຳຕັສສປາປິຍສິກາກັມມ໌ແກ່ພິກຂຸມີຊື່ນີ້ ການທຳຕັສສປາປິຍສິກາກັມມ໌ແກ່ພິກຂຸມີຊື່ນີ້ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສອງ ...

ຂ້າພເຈົ້າກ່າວຄວາມນີ້ ແມ້ຄັ້ງທີ່ສາມ ...

ຕັສສປາປິຍສິກາກັມມ໌ ອັນສົງຄ໌ທຳແລ້ວແກ່ພິກຂຸມີຊື່ນີ້ ຖືກແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ ດ້ວຍຢ່າງນີ້

ດູຣາພິກຂຸທັ້ງຫຼາຍ ນີ້ເອີ້ນວ່າອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍກັບຕັສສ-ປາປິຍສິກາ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມໜ້າສົງຄ໌ ຄວາມພ້ອມໜ້າທັມມ໌ ຄວາມພ້ອມວິນັຍ ຄວາມພ້ອມໜ້າບຸຄຄົລ ...

ໃນຕັສສປາປິຍສິການັ້ນມີຫຍັງແດ່ ມີກິຣິຍາ ຄວາມກະທຳ ຄວາມເຂົ້າໄປ ຄວາມເຂົ້າໄປຈະເພາະ ຄວາມຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ ຄື ຕັສສປາປິຍສິກາ ອັນໃດ ນີ້ມີໃນຕັສສປາປິຍສິການັ້ນ

ດູຣາພິກຂຸທັ້ງຫຼາຍ ຫາກອະທິກຣຕ໌ຣະງັບແລ້ວຢ່າງນີ້ ຜູ້ທຳຮື້ຟື້ນເປັນປາຈິຕຕີຍ໌ທີ່ຮື້ຟື້ນ ຜູ້ໃຫ້ຈັນທະຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ฯ

ອາປັຕຕາທິກຣຕ໌ຣະງັບດ້ວຍສມຖະ ໓ ຢ່າງ

[໖໗໙] ອາປັຕຕາທິກຣຕ໌ ຣະງັບດ້ວຍສມຖະເທົ່າໃດ ອາປັຕຕາທິກຣຕ໌ຣະງັບດ້ວຍສມຖະ ໓ ຢ່າງ ຄື ສັມມຸຂາວິນັຍ ໑ ປຕິຍາຕາຕກຣຕະ ໑ ຕິຕວັຕຖາຣກະ ໑ ฯ

[໖໘໐] ບາງທີ ອາປັຕຕາທິກຣຕ໌ ບໍ່ອາສັຍສມຖະຢ່າງນຶ່ງ ຄືຕິຕວັຕຖາຣກະ ຄວຣຣະງັບດ້ວຍສມຖະ ໒ ຢ່າງ ຄື ສັມມຸຂາວິນັຍ ໑ ປຕິຍາຕາຕກຣຕະ ໑ ບາງທີຄວຣຕົກລົງກັນໄດ້ ສົມຈິງດັ່ງທີ່ຕຣັສໄວ້ວ່າ

ດູຣາພິກຂຸທັ້ງຫຼາຍ ກໍພິກຂຸໃນທັມມ໌ວິນັຍນີ້ ຕ້ອງລຫຸກາບັຕິແລ້ວທ່ານຄວຣເຂົ້າໄປຫາພິກຂຸອົງຄ໌ນຶ່ງ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນັ່ງຫຍ່ອງຍໍ້ປະຄອງອັຍຊລີ ແລ້ວກ່າວຢ່າງນີ້ວ່າ ທ່ານ ຂ້ານ້ອຍຕ້ອງອາບັຕິຊື່ນີ້ ຂ້ານ້ອຍສແດງຄືນອາບັຕິນັ້ນ

ພິກຂຸຜູ້ຮັບນັ້ນຄວຣກ່າວວ່າ ທ່ານເຫັນບໍ່

ພິກຂຸຜູ້ສແດງນັ້ນຄວຣກ່າວວ່າ ຂ້ານ້ອຍ ຜມເຫັນ

ພິກຂຸຜູ້ຮັບນັ້ນຄວຣກ່າວວ່າ ທ່ານຄວຣສຳຣວມຕໍ່ໄປ

ດູຣາພິກຂຸທັ້ງຫຼາຍ ນີ້ເອີ້ນວ່າອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍກັບປຕິຍາຕກຣະ ໃນສັມມຸຂາວິນັຍມີຫຍັງແດ່ ມີຄວາມພ້ອມໜ້າສັມມ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ ...

ກໍຄວາມພ້ອມໜ້າບຸຄຄົລ ໃນສັມມຸຂາວິນັຍນັ້ນແນວໃດ ຄືຜູ້ສແດງກັບຜູ້ຮັບສແດງ ທັ້ງສອງຢູ່ພ້ອມໜ້າກັນ ນີ້ຊື່ວ່າ ຄວາມພ້ອມໜ້າບຸຄຄົລໃນສັມມຸຂາວິນັຍນັ້ນ

ໃນປຕິຍາຕກຣະນັ້ນ ມີຫຍັງແດ່ ມີກິຣິຍາ ຄວາມກະທຳ ຄວາມເຂົ້າໄປ ຄວາມເຂົ້າໄປຈະເພາະ ຄວາມຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ ຄື ປຕິຍາຕກຣະອັນໃດ ນີ້ມີໃນປຕິຍາຕກຣະນັ້ນ

ດູຣາພິກຂຸທັ້ງຫຼາຍ ຫາກອະທິກຣຕ໌ຣະງັບແລ້ວຢ່າງນີ້ ຜູ້ຮັບຮື້ຟື້ນເປັນປາຈິຕຕີຍ໌ທີ່ຮື້ຟື້ນ ຫາກໄດ້ການສແດງນັ້ນຢ່າງນີ້ ທັ່ນເປັນຄວາມດີ ຫາກບໍ່ໄດ້ ພິກຂຸນັ້ນຄວຣເຂົ້າໄປຫາພິກຂຸມາກອົງຄ໌ດ້ວຍກັນ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ໄຫວ້ຕີນພິກຂຸຜູ້ແກ່ກວ່າ ນັ່ງຫຍ່ອງຍໍ້ປະຄອງອັນຊລີ ແລ້ວກ່າວຢ່າງນີ້ວ່າ ທ່ານຂ້ານ້ອຍ ຂ້າພເຈົ້າຕ້ອງອາບັຕິຊື່ນີ້ ຂ້າພເຈົ້າສແດງຄືນອາບັຕິນັ້ນ

ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ພິກຂຸພວກນັ້ນຮູ້ດ້ວຍຄຕະລັຕຕິວ່າ ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ພິກຂຸມີຊື່ນີ້ອົງຄ໌ນີ້ຣະລຶກ ເປີດເຜີຍ ທຳໃຫ້ຕື້ນ ສແດງອາບັຕິ ຖ້າຄວາມພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ຂ້າພເຈົ້າຂ້ານ້ອຍອາບັຕິຂອງພິກຂຸມີຊື່ນີ້ ແລ້ວກ່າວວ່າ ທ່ານເຫັນບໍ່

ພິກຂຸຜູ້ສແດງຄວຣກ່າວວ່າ ຂ້ານ້ອຍ ຂ້ານ້ອຍເຫັນ

ພິກຂຸຜູ້ຮັບຄວຣກ່າວວ່າ ທ່ານຄວຣສຳຣວມຕໍ່ໄປ

ດູຣາພິກຂຸທັ້ງຫຼາຍ ນີ້ເອີ້ນວ່າອະທິກຣຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍກັບປຕິຍາຕກຣະ ໃນສັມມຸຂາວິນັຍນັ້ນ ມີຫຍັງແດ່ ມີຄວາມພ້ອມໜ້າສັມມ໌ ຄວາມພ້ອມໜ້າວິນັຍຄວາມພ້ອມໜ້າບຸຄຄົລ ...

ກໍຄວາມພ້ອມໜ້າບຸຄຄົລ ໃນສັມມຸຂາວິນັຍນັ້ນແນວໃດ ຄື ຜູ້ສແດງກັບຜູ້ຮັບສແດງ ທັ້ງສອງຢູ່ພ້ອມໜ້າກັນ ນີ້ຊື່ວ່າ ຄວາມພ້ອມໜ້າບຸຄຄົລໃນສັມມຸຂາວິນັຍນັ້ນ ໃນປຕິຍາຕກຣະນັ້ນ ມີຫຍັງແດ່ ມີກິຣິຍາ ຄວາມກະທຳ ຄວາມເຂົ້າໄປ ຄວາມເຂົ້າໄປ ຈະເພາະ ຄວາມຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ ຄື ປຕິຍາຕກຣະອັນໃດ ນີ້ມີໃນປຕິຍາຕກຣະນັ້ນ

ດູຣາພິກຂຸທັ້ງຫຼາຍ ຫາກອະທິກອນຣະງັບແລ້ວຢ່າງນີ້ ຜູ້ຮັບຮີ້ພື້ນ ເປັນປາຈິຕຕີຍ໌ທີ່ຮີ້ພື້ນ ຫາກ ໄດ້ກາຣສແດງນັ້ນຢ່າງນີ້ ທັ່ນເປັນຄວາມດີ ຫາກບໍ່ໄດ້ ພິກຂຸນັ້ນຄວຣເຂົ້າໄປຫາສົງຂ໌ ຫົ່ມຜ້າອຸຕຣາສົງຄ໌ ພາດບ່າ ໄຫວ້ຕີນພິກຂຸຜູ້ແກ່ກວ່າ ນັ່ງຫຍ່ອງຍໍ້ປະຄອງອັຍຊລີ ແລ້ວກ່າວຢ່າງນີ້ວ່າ ທ່ານຂ້ານ້ອຍ ຂ້າພເຈົ້າ ຕ້ອງອາບັຕິຊື່ນີ້ ຂ້າພເຈົ້າສແດງຄືນອາບັຕິນັ້ນ

ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຂ໌ຮູ້ດ້ວຍຍັຕຕິກັມມ໌ວ່າ ທ່ານຂ້ານ້ອຍຂໍສົງຂ໌ຈົ່ງຟັງ ຂ້າພເຈົ້າ ພິກຂຸມີຊື່ນີ້ອົງຄ໌ນີ້ ຣະລຶກ ເປີດເຜີຍ ທຳໃຫ້ຕື້ນ ສແດງອາບັຕິ ຖ້າຄວາມພ້ອມພັ່ງຂອງສົງຂ໌ເຖິງທີ່ແລ້ວ ຂ້າພເຈົ້າຄວຣຮັບອາບັຕິຂອງພິກຂຸມີຊື່ນີ້ ແລ້ວຄວຣກ່າວວ່າ ທ່ານເຫັນບໍ່

ພິກຂຸຜູ້ສແດງຄວຣກ່າວວ່າ ຂ້ານ້ອຍ ຂ້ານ້ອຍເຫັນ

ພິກຂຸຜູ້ຮັບຄວຣກ່າວວ່າ ທ່ານຄວຣສຳຣວມຕໍ່ໄປ

ດູຣາພິກຂຸທັ້ງຫຼາຍ ນີ້ເອີ້ນວ່າອະທິກອນຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍກັບ ປຕິຍຍາຕກາຣຕະ ໃນສັມມຸຂາວິນັຍນັ້ນ ມີຫຍັງແດ່ ມີຄວາມພ້ອມຫນ້າສົງຂ໌ ຄວາມພ້ອມຫນ້າທັມມ໌ ຄວາມພ້ອມຫນ້າວິນັຍ ຄວາມພ້ອມຫນ້າບຸຄຄົລ ...

ດູຣາພິກຂຸທັ້ງຫຼາຍ ຫາກອະທິກອນຣະງັບແລ້ວຢ່າງນີ້ ຜູ້ຮັບຮີ້ພື້ນ ເປັນປາຈິຕຕີຍ໌ ທີ່ຮີ້ພື້ນ ຜູ້ໃຫ້ລົນທະຕິຕຽນ ເປັນປາຈິຕຕີຍ໌ທີ່ຕິຕຽນ ๗

[໖໙໑] ບາງທີອາປັຕຕາທິກອນບໍ່ອາສັຍສມຖະຢ່າງນຶ່ງ ຄື ປຕິຍຍາຕກາຣຕະຄວຣຣະງັບດ້ວຍ ສມຖະ ໔ ຢ່າງ ຄື ສັມມຸຂາວິນັຍ ໑ ຕິຓວັຕຖາຣກະ ໑ ບາງທີຄວຣຕົກລົງກັນໄດ້ ສົມຈິງດັ່ງທີ່ຕຣັສໄວ້ວ່າ

ດູຣາພິກຂຸທັ້ງຫຼາຍ ກໍພວກພິກຂຸໃນທັມມ໌ວິນັຍນີ້ ເກີດຄວາມບາດຫມາງ ເກີດຄວາມທະເລາະ ເຖິງ ຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ສົມຄວຣແກ່ສມຕະຢ່າງຫຼວງຫາຍທັ້ງທີ່ກ່າວດ້ວຍວາຈາ ແລະ ພຍາຍາມທຳດ້ວຍກາຍ ຖ້າພວກພິກຂຸໃນຫມູ່ນັ້ນຄຶດຢ່າງນີ້ວ່າພວກເຮົາເກີດຄວາມບາດຫມາງ ເກີດຄວາມ ທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດ ກິຈອັນບໍ່ຄວຣແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກອນນັ້ນຈະຄວຣເປັນໄປເພື່ອ ຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ດູຣາພິກຂຸທັ້ງຫຼາຍ ເຮົາອນຸຍາຕໃຫ້ຣະງັບ ອະທິກອນເຫັນປານນີ້ ດ້ວຍຕິຓວັຕຖາຣກະ

ວິທີຣະງັບ

ດູຣາພິກຂຸທັ້ງຫຼາຍ ກໍແລ ສົງຂ໌ຄວຣຣະງັບອະທິກອນຢ່າງນີ້

ພິກຂຸທຸກໆ ອົງຄ໌ ຄວຣປະຊຸມໃນທີ່ແຫ່ງດຽວກັນ ຄັ້ນແລ້ວພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສ ໃຫ້ສົງຂ໌ຮູ້ດ້ວຍຍັຕຕິກັມມວາຈາ ວ່າດັ່ງນີ້:-

ຍັຕຕິກັມມວາຈາ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດຫມາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຕ໌ນັ້ນຈະຄວຣເປັນໄປ ເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣຣະງັບອະທິກຣຕ໌ນີ້ ດ້ວຍຕິຕວັຕຖາຣກະເວັ້ນອາບັຕິທີ່ມີໂທษຫນັກ ເວັ້ນອາບັຕິທີ່ເນື່ອງດ້ວຍຄຣືຫັສຖ໌

ບັຣດາພິກຂຸຝ່າຍດຽວກັນ ພິກຂຸຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ຝ່າຍຂອງຕົນຮູ້ ດ້ວຍຄຕະຍັຕຕິກັມມວາຈາ ວ່າດັ່ງນີ້:-

ຄຕະຍັຕຕິກັມມວາຈາ

ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດຫມາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຕ໌ນັ້ນຈະຄວຣເປັນໄປ ເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ຂ້າພເຈົ້າຄວຣສແດງອາບັຕິຂອງທ່ານທັ້ງຫຼາຍແລະອາບັຕິຂອງຕົນໃນທ່າມກາງສົງຄ໌ ດ້ວຍຕິຕວັຕຖາຣກະ ເວັ້ນອາບັຕິ ທີ່ມີໂທษຫນັກ ເວັ້ນອາບັຕິທີ່ເນື່ອງດ້ວຍຄຣືຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານທັ້ງຫຼາຍ ແລະເພື່ອປະໂຍຊນ໌ແກ່ຕົນ ๆ

[໖໙໔] ລຳດັບນັ້ນ ບັຣດາພິກຂຸຝ່າຍດຽວກັນອີກພວກນຶ່ງ ພິກຂຸຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ຝ່າຍຂອງຕົນຮູ້ ດ້ວຍຄຕະຍັຕຕິກັມມວາຈາ ວ່າດັ່ງນີ້:-

ຄຕະຍັຕຕິກັມມວາຈາ

ຂໍທ່ານທັ້ງຫຼາຍຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດຫມາງ ເກີດຄວາມທະເລາະ ເຖິງຄວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່ຄວຣ ແກ່ສມຕະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣຕ໌ນັ້ນຈະຄວຣເປັນໄປ ເພື່ອຄວາມຮຸນແຮງ ເພື່ອຄວາມຮ້າຍກາຈ ເພື່ອຄວາມແຕກກັນກໍໄດ້ ຖ້າຄວາມ ພ້ອມພັ່ງຂອງທ່ານທັ້ງຫຼາຍເຖິງທີ່ແລ້ວ ຂ້າພເຈົ້າຄວຣສແດງອາບັຕິຂອງທ່ານທັ້ງຫຼາຍ ແລະອາບັຕິຂອງຕົນໃນທ່າມກາງສົງຄ໌

ດ້ວຍຕິណວັតຖາຣກະເວັ້ນອາບັຕິທີ່ມີໂທษຫນັກ ເວັ້ນອາບັຕິທີ່ເນື່ອງດ້ວຍគຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານທັ້ງ ຫຼາຍ ແລະເພື່ອປະໂຍຊນ໌ແກ່ຕົນ ។

[ຜល៣] ບັຣດາភິກຂຸຝ່າຍດຽວກັນ ភិກຂຸຜູ້ฉລາດ ຜູ້ສາມາຖ គວຣປະກາឝໃຫ້ສົງฆ໌ຮູ້ ດ້ວຍញັតຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ញັតຕິທຸຕິຍກັມມວາຈາ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດគວາມບາດຫມາງ ເກີດគວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່គວຣ ແກ່ສມណະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣណ໌ນັ້ນຈະគວຣເປັນໄປ ເພື່ອគວາມຮຸນແຮງ ເພື່ອគວາມຮ້າຍກາຈ ເພື່ອគວາມແຕກກັນກໍໄດ້ ຖ້າគວາມພ້ອມພັ່ງຂອງສົງฆ໌ເຖິງທີ່ແລ້ວ ຂ້າພເຈົ້າគວຣສແດງອາບັຕິຂອງທ່ານເຫຼົ່ານີ້ ແລະອາບັຕິຂອງຕົນໃນທ່າມກາງສົງฆ໌ ດ້ວຍຕິណວັតຖາຣກະ ເວັ້ນອາບັຕິທີ່ມີ ໂທษຫນັກ ເວັ້ນອາບັຕິທີ່ເນື່ອງດ້ວຍគຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານເຫຼົ່ານີ້ ແລເພື່ອປະໂຍຊນ໌ແກ່ຕົນ ນີ້ເປັນញັតຕິ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດគວາມບາດຫມາງ ເກີດគວາມທະເລາະ ເຖິງគວາມວິວາທຢູ່ ໄດ້ປະພຶຕລະເມີດກິຈອັນບໍ່គວຣ ແກ່ສມណະຢ່າງຫຼວງຫາຍ ທັ້ງທີ່ກ່າວດ້ວຍວາຈາ ແລະພຍາຍາມທຳດ້ວຍກາຍ ຖ້າພວກເຮົາຈະປັບກັນດ້ວຍອາບັຕິເຫຼົ່ານີ້ ບາງທີອະທິກຣណ໌ນັ້ນຈະគວຣເປັນໄປເພື່ອគວາມຮຸນແຮງ ເພື່ອគວາມຮ້າຍກາຈ ເພື່ອគວາມແຕກກັນກໍໄດ້ ຂ້າພເຈົ້າສແດງ ອາບັຕິຂອງທ່ານເຫຼົ່ານີ້ ແລະອາບັຕິຂອງຕົນໃນທ່າມກາງສົງฆ໌ ດ້ວຍຕິណວັតຖາຣກະ ເວັ້ນອາບັຕິທີ່ມີໂທษຫນັກ ເວັ້ນອາບັຕິທີ່ເນື່ອງດ້ວຍគຣິຫັສຖ໌ ເພື່ອປະໂຍຊນ໌ແກ່ທ່ານເຫຼົ່ານີ້ ແລະເພື່ອປະໂຍຊນ໌ແກ່ຕົນ ການສແດງອາບັຕິເຫຼົ່ານີ້ ຂອງພວກເຮົາໃນທ່າມກາງສົງฆ໌ ດ້ວຍຕິណວັតຖາຣກະ ເວັ້ນອາບັຕິທີ່ມີໂທษຫນັກເວັ້ນອາບັຕິທີ່ເນື່ອງດ້ວຍគຣິຫັສຖ໌ ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນគວຣເປັນຜູ້ນິ່ງ ບໍ່ຖືກແກ່ທ່ານຜູ້ໃດ ທ່ານຜູ້ນັ້ນគວຣເວົ້າ

ອາບັຕິເຫຼົ່ານີ້ຂອງພວກເຮົາ ເວັ້ນອາບັຕິທີ່ມີໂທษຫນັກ ເວັ້ນອາບັຕິທີ່ເນື່ອງດ້ວຍគຣິຫັສຖ໌ ຂ້າພເຈົ້າສແດງແລ້ວໃນທ່າມກາງສົງฆ໌ ດ້ວຍຕິណວັតຖາຣກະ ຖືກແກ່ສົງฆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງគວາມນີ້ໄວ້ດ້ວຍຢ່າງນີ້

ລຳດັບນັ້ນ ບັຣດາភິກຂຸຝ່າຍດຽວກັນ ភិກຂຸຜູ້ฉລາດ ຜູ້ສາມາຖ គວຣປະກາឝໃຫ້ ສົງฆ໌ຮູ້ ດ້ວຍញັតຕິທຸຕິຍກັມມວາຈາ ວ່າດັ່ງນີ້:-

ສັຕຕິທຸຕິຍກັມມວາຈາ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ພວກເຮົາເກີດຄວາມບາດໝາງ ... ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້

ດູຣາກິກຂຸທັ້ງຫຼາຍ ນີ້ເອີ້ນວ່າອະທິກຣົຕ໌ຣະງັບແລ້ວ ຣະງັບດ້ວຍຫຍັງ ດ້ວຍສັມມຸຂາວິນັຍກັບຕິຕວັຕຖາຣກະ ໃນສັມມຸຂາວິນັຍນັ້ນມີຫຍັງແດ່ ມີຄວາມພ້ອມໜ້າສົງຆ໌ ຄວາມພ້ອມໜ້າສັມມ໌ ຄວາມພ້ອມໜ້າວິນັຍ ຄວາມພ້ອມໜ້າບຸຄຄົລ

ກໍຄວາມພ້ອມໜ້າສົງຆ໌ໃນສັມມຸຂາວິນັຍນັ້ນແນວໃດ ກິກຂຸຜູ້ເຂົ້າກັມມ໌ມີຈໍານວນເທົ່າໃດ ພວກທ່ານມາປະຊຸມກັນ ນໍາສັນທະຂອງຜູ້ຄວຣສັນທະມາ ຜູ້ຢູ່ພ້ອມໜ້າກັນບໍ່ຄັດຄ້ານ ນີ້ຊື່ວ່າຄວາມພ້ອມໜ້າສົງຆ໌ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມໜ້າສັມມ໌ ຄວາມພ້ອມໜ້າວິນັຍ ໃນສັມມຸຂາວິນັຍນັ້ນແນວໃດ ອະທິກຣົຕ໌ນັ້ນຣະງັບໂດຍສັມມ໌ ໂດຍວິນັຍ ແລະໂດຍສັຕຖຸສາສນ໌ໃດ ນີ້ຊື່ວ່າຄວາມພ້ອມໜ້າສັມມ໌ ຄວາມພ້ອມໜ້າວິນັຍ ໃນສັມມຸຂາວິນັຍນັ້ນ

ກໍຄວາມພ້ອມໜ້າບຸຄຄົລໃນສັມມຸຂາວິນັຍນັ້ນແນວໃດ ຜູ້ສແດງແລະຜູ້ຮັບສແດງ ທັ້ງສອງຢູ່ພ້ອມໜ້າກັນ ນີ້ຊື່ວ່າຄວາມພ້ອມໜ້າບຸຄຄົລ

ໃນຕິຕວັຕຖາຣກະນັ້ນ ມີຫຍັງແດ່ ມີກິຣິຍາ ຄວາມກະທໍາ ຄວາມເຂົ້າໄປ ຄວາມເຂົ້າໄປຈະເພາະຄວາມຮັບຮອງ ຄວາມບໍ່ຄັດຄ້ານກັມມ໌ ຄື ຕິຕວັຕຖາຣກະອັນໃດ ນີ້ມີໃນຕິຕວັຕຖາຣກະນັ້ນ

ດູຣາກິກຂຸທັ້ງຫຼາຍ ຖ້າອະທິກຣົຕ໌ຣະງັບແລ້ວຢ່າງນີ້ ຜູ້ຮັບຣື້ຟື້ນ ເປັນປາຈິຕຕິຍ໌ທີ່ຣື້ຟື້ນ ຜູ້ໃຫ້ສັນທະຕິຕຽນ ເປັນປາຈິຕຕິຍ໌ທີ່ຕິຕຽນ ๆ

ກິຈຈາທິກຣົຕ໌ຣະງັບດ້ວຍສມຖະຢ່າງດຽວ

[໖໙໔] ກິຈຈາທິກຣົຕ໌ຣະງັບດ້ວຍສມຖະເທົ່າໃດ ກິຈຈາທິກຣົຕ໌ຣະງັບດ້ວຍສມຖະຢ່າງດຽວ ຄື ສັມມຸຂາວິນັຍ ๆ

ສມຖຂັນສກະ ທີ່ ໔ ຈົບ